ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ບົດສະຫລຸບ
# ການຈັດຕັ້ງປະຕິບັດແຜນຍຸດທະສາດ ຂອງຄະນະ ສາທາລະນະສຸກສາດ 5ປີ ແຕ່ປີ (2016-2020)
# ແລະ
# ແຜນພັດທະນາຍຸດທະສາດ ຂອງຄະນະສາທາລະນະສຸກສາດ 5 ປີ (2021-2025)

ຄະນະສາທາລະນະສຸກສາດ
ມະຫາວິທະຍາໄລ ວິທະຍາສາດ ສຸຂະພາບ
ພະຈິກ, 2021

# ຄຳນຳ

ຍຸດທະສາດ ແລະ ແຜນພັດທະນາ ຄະນະສາທາລະນະສຸກສາດ ມະຫາວິທະຍາໄລ ວິທະຍາສາດ ສຸຂະພາບ 2021-2025 ປີ ໄດ້ສ້າງຂຶ້ນບົນພື້ນຖານຂອງ ຍຸດທະສາດການປະຕິຮູບສາທາລະນະສຸກ ແລະ ແຜນຍຸດທະສາດ ພັດທະນາພະນັກງານສາທາລະນະສຸກຮອດປີ 2025 ຂອງກະຊວງສາທາລະນະສຸກ ແລະ ຍຸດທະສາດເພື່ອພັດທະນາການສຶກສາຊັ້ນສູງ ຂອງກະຊວງສຶກສາທິການ ແລະ ກິລາ.

**ເອກກະສານນີ້ປະກອບມີ 2 ພາກຄື:**

***ພາກທີ 1*** ເປັນບົດສະຫລຸບການຈັດຕັ້ງປະຕິບັດແຜນຍຸດທະສາດ ຂອງ ຄະນະສາທາລະນະສຸກສາດ 5 ປີແຕ່ປີ 2016-2020.

***ພາກທີ 2*** ເປັນພາກສະເໜີແຜນຍຸດທະສາດສຳຫລັບ 5 ປີຕໍ່ໜ້າ (2021-2025), ໃນພາກນີ້ໄດ້ສະເໜີໂດຍສັງເຂບ ກ່ຽວກັບສະພາບແວດລ້ອມພາຍໃນປະເທດ ແລະ ສາກົນທີ່ສ່ອງແສງໃຫ້ເຫັນເຖິງຂໍ້ສະດວກທີ່ເປັນພື້ນຖານ, ຄວາມສາມາດທີ່ບົ່ມຊ້ອນ, ຂໍ້ຫຍຸ້ງຍາກ ແລະ ສິ່ງທ້າທາຍຂອງປະເທດເຮົາທີ່ມີໃນປັດຈຸບັນ. ພາກນີ້ ໄດ້ກຳນົດທິດທາງນະໂຍບາຍລວມ, ຈຸດໝາຍລວມ, ຄາດໝາຍລວມ ແລະ ວິທີການທີ່ເປັນພື້ນຖານເປັນບ່ອນອີງໃນການສ້າງແຜນ ແລະ ໂຄງການຈັດຕັ້ງປະຕິບັດຂອງ ມະຫາວິທະຍາໄລ ວິທະຍາສາດສຸຂະພາບ. ນອກນັ້ນ, ແມ່ນສະເໜີເນື້ອໃນແຜນງານຍ່ອຍຂອງແຜນຍຸດທະສາດຄະນະສາທາລະນະສຸກສາດເຊິ່ງເປັນການສ້າງແຜນ ການຕາມທິດທາງລວມ ແລະ ຄາດໝາຍລວມຂອງແຜນຍຸດທະສາດ ຄສສ ທີ່ວາງໄວ້. ການຈັດຕັ້ງແຜນພັດທະນາໃນ 5 ປີຕໍ່ໜ້າ ແມ່ນໄດ້ກຳນົດລະອຽດເປັນແຕ່ລະແຜນງານ ແລະ 8 ແຜນງານຍ່ຽ. ໃນພາກນີ້ຍັງໄດ້ກຳນົດຄາດ ໝາຍສູ້ຊົນໃນແຕ່ລະໂຄງການ ກິດຈະກຳ ແລະ ມາດຕະການຕົ້ນຕໍໃນແຕ່ລະແຜນງານເພື່ອເປັນບ່ອນອີງໃຫ້ແກ່ການສ້າງແຜນການຈັດຕັ້ງປະຕິບັດປະຈຳປີ ແລະ ໂຄງການຕ່າງໆ ແຕ່ປີ 2020 ເຖິງປີ 2025.

ໃນຕອນທ້າຍຂອງເອກສານຍັງໄດ້ນຳສະເໜີມາດຕະການແລະ ວິທີການໃນການປະຕິບັດ ແລະ ແຜນງົບປະມານຂອງແຜນຍຸດທະສາດ ຄະນະສາທາລະນະສຸກ.

ນະຄອນຫລວງວຽງຈັນ ວັນທີ 22/11/2021

**ຄະນະບໍດີ**

# ສາລະບານ

ບົດສະຫລຸບ........................................................................................1

*ຄຳນຳ*........................................................................................2

*ພາກທີ 1 ເປັນບົດສະຫລຸບການຈັດຕັ້ງປະຕິບັດແຜນຍຸດທະສາດ ຂອງ ຄະນະສາທາລະນະສຸກສາດ 5 ປີ ແຕ່ປີ 2016-2020.*........................................................................................2

*ສາລະບານ*........................................................................................3

*I. ສະພາບລວມ*........................................................................................7

*II. ທິດທາງລວມຂອງແຜນຍຸດທະສາດພັດທະນາ ຄະນະສາທາລະນະສຸກສາດ ແຕ່ປີ 2016-2020*.......9

.2.1.ທິດທາງລວມ........................................................................................9

2.2.ຈຸດປະສົງ........................................................................................9

2.3. ຄາດໝາຍລວມ........................................................................................9

2.4. ວິໃສທັດ Vision........................................................................................9

2.5. ພັນທະກິດ Mission........................................................................................10

2.6. ປັດຊະຍາ........................................................................................10

*III. ຜົນງານຂອງແຜນງານຍຸດທະສາດພັດທະນາ ຄະນະສາທາລະນະສຸກສາດ*........................................10

1. ແຜນງານບໍລິຫານ-ຄຸ້ມຄອງ........................................................................................10

1.1.1. ໂຄງການຄຸ້ມຄອງເອກະສານ, ນິຕິກຳ-ຂໍ້ຕົກລົງ ແລະ ລະບຽບການຕ່າງໆ :........................10

1.1.2. ໂຄງການຄຸ້ມຄອງບໍລິຫານບຸກຄະລາກອນ........................................................................................10

1.1.3. ໂຄງການຄຸ້ມຄອງບໍລິຫານການເງີນ........................................................................................11

1.1.4. ໂຄງການສົ່ງເສີມການພົວພັນ ແລະ ການຮ່ວມມືກັບຕ່າງປະເທດ........................................11

1.1.5. ໂຄງການຄຸ້ມຄອງຮັກສາພາຫະນະ, ອຸປະກອນຮັບໃຊ້ຫ້ອງການ ແລະ ການຮຽນ-ການສອນ ........12

2.1.1.ໂຄງການກິລາ, ແລະ ສິລະປະວັນນະຄະດີ........................................................................................12

3 .ແຜນງານພັດທະນາການຮຽນ-ການສອນ........................................................................................14

3.1.1. ໂຄງການຮັບເອົານັກສຶກສາ........................................................................................14

3.1.2. ໂຄງການຈັດຕັ້ງການຮຽນ-ການສອນ........................................................................................15

3.1.3.ໂຄງການພັດທະນາຖານຂໍ້ມູນຂ່າວສານ ແລະ ຫ້ອງສະໝຸດ........................................................15

3.1.4. ໂຄງການສ້າງ ສະມາຄົມ ສາທາລະນະສຸກສາດ........................................................................16

*4. ແຜນງານພັດທະນາຫຼັກສູດ*........................................................................................16

4.1.1. ໂຄງການທົບທວນຫຼັກສູດ........................................................................................16

4.1.2. ໂຄງການສ້າງຫຼັກສູດໃຫມ່........................................................................................16

4.1.3. ໂຄງການສ້າງຫຼັກສູດອົບຮົມໄລຍະສັ້ນ ... 16
4.1.4. ໂຄງການສ້າງຄູ່ມືການຮຽນ-ການສອນ ແລະ ຕໍາລາຮຽນ ... 16
*5. ແຜນງານ ພັດທະນາຄູອາຈານ* ... **17**
5.1.1. ໂຄງການການພັດທະນາທັກສະການສອນແບບໃໝ່ ... 17
5.1.2. ໂຄງການຍົກລະດັບວິຊາສະເພາະທາງດ້ານວິຊາການ ... 17
5.1.3. ໂຄງການຈັດຕັ້ງປະຕິບັດການອົບຮົມແບບຕໍ່ເນື່ອງ ... 17
*6. ແຜນງານ ພັດທະນາດ້ານໂຄງລ່າງພື້ນຖານ, ອຸປະກອນ ແລະ ສິ່ງອານວຍຄວາມສະດວກ* ... **18**
6.1.1. ໂຄງການກໍ່ສ້າງພື້ນຖານໂຄງລ່າງ ... 18
6.1.2. ໂຄງການສ້າງຫ້ອງປະຕິບັດການດ້ານ ໂພຊະນາການ ... 18
6.1.3. ໂຄງການສ້າງຫ້ອງປະຕິບັດການດ້ານ ອະນາໄມສິ່ງແວດລ້ອມ ແລະ ອາຊີວະອະນາໄມ ... 19
*7. ແຜນງານສົ່ງເສີມການຄົ້ນຄ້ວາວິທະຍາສາດ ແລະ ການໃຫ້ບໍລິການວິຊາການ* ... **19**
7.1.1. ໂຄງການຄົ້ນຄວ້າວິທະຍາສາດດ້ານສາທາລະນະສຸກ ... 19
7.1.2. ໂຄງການເຜີຍແຜ່ ແລະ ຕີພິມ ... 20
7.1.3. ໂຄງການບໍລິການວິຊາການແກ່ສັງຄົມ ... 22
*8. ແຜນງານລະບົບປະກັນຄຸນນະພາບພາຍໃນ ແລະ ພາຍນອກ* ... **22**
7.1.1. ໂຄງການສ້າງລະບົບປະກັນຄຸນນະພາບພາຍໃນ ... 22
*ພາກທີ II* ... **38**
*ແຜນຍຸດທະສາດຂອງ ຄະນະສາທາລະນະສຸກສາດ (2021-2025)* ... **38**
*I. ສະພາບລວມ* ... **38**
**1.1. ສະພາບຂົງເຂດ ແລະ ສາກົນ ... 38**
**1.2. ສະພາບພາຍໃນປະເທດ ... 38**
**1.3. ຄວາມໝາຍຄວາມສໍາຄັນ ... 39**
*II. ທິດທາງລວມຂອງແຜນຍຸດທະສາດພັດທະນາ ຄະນະສາທາລະນະສຸກສາດ ແຕ່ປີ 2021-2025* ... **39**
**.2.1ທິດທາງລວມ ... 39**
**2.2.ຈຸດປະສົງ ... 40**
**2.3. ຄາດໝາຍລວມ ... 40**
**2.4. ວິໄສທັດ Vision ... 40**
**2.5. ພັນທະກິດ Mission ... 40**
**2.6. ປັດຊະຍາ ... 40**
**2.7. ເປົ້າໝາຍ ... 40**

2.8. ຫຼັກການ ......................................................................................................................... 41

2.9. ຄາດໝາຍລູ້ຊຸ໊ບ ......................................................................................................................... 41

*III. ເນື້ອໃນຂອງແຜນງານຍຸດທະສາດພັດທະນາ ຄະນະສາທາລະນະສຸກສາດ. .................................... 42*

1. ແຜນງານບໍລິຫານ ແລະ ຄຸ້ມຄອງ ........................................................................................ 42

1.1. ໂຄງການຈຸດສຸມບູລິມະສິດ ............................................................................................ 42

1.1.1. ໂຄງການຄຸ້ມຄອງເອກະສານ, ນິຕິກຳ-ຂໍ້ຕົກລົງ ແລະ ລະບຽບການຕ່າງໆ : ................................ 42

1.1.2. ໂຄງການຄຸ້ມຄອງບໍລິຫານບຸກຄະລາກອນ ............................................................................. 42

1.1.3. ໂຄງການຄຸ້ມຄອງບໍລິຫານການເງິນ ...................................................................................... 43

1.1.4. ໂຄງການສົ່ງເສີມການພົວພັນ ແລະ ການຮ່ວມມືກັບຕ່າງປະເທດ ............................................. 43

1.1.5. ໂຄງການຄຸ້ມຄອງຮັກສາພາຫະນະ ,ອຸປະກອນຮັບໃຊ້ຫ້ອງການ ແລະ ການຮຽນ-ການສອນ. ............ 43

.2ແຜນການ ຄຸ້ມຄອງ ແລະ ສົ່ງເສີມກິດຈະກຳນັກສຶກສາ ................................................................... 44

- ທິດທາງໜ້າທີ່: ................................................................................................................. 44

*2.1. ໂຄງການຈຸດສຸມບູລິມະສິດ* ............................................................................................ 44

- ຄາດໝາຍ ........................................................................................................................ 44

3. ແຜນງານ ພັດທະນາການຮຽນ-ການສອນ ................................................................................ 45

3.1. ໂຄງການຈຸດສຸມບູລິມະສິດ ............................................................................................ 45

3.1.1. ໂຄງການຮັບເອົານັກສຶກສາ ............................................................................................. 45

3.1.2. ໂຄງການຈັດຕັ້ງການຮຽນ-ການສອນ .................................................................................. 46

3.1.3. ໂຄງການສົ່ງເສີມ ແລະ ປ້ອງກັນສຸຂະພາບຊຸມຊົນ ................................................................ 46

- ຄາດໝາຍ ........................................................................................................................ 46

3.1.4. ໂຄງການຕິດຕາມຜູ້ສາເລັດການສຶກສາ ................................................................................ 46

3.1.5. ໂຄງການພັດທະນາຖານຂໍ້ມູນຂ່າວສານ ແລະ ຫ້ອງສະໝຸດ ........................................................ 46

3.1.6. ໂຄງການສ້າງ ສະມາຄົມ ສາທາລະນະສຸກສາດ ...................................................................... 47

*4. ແຜນງານພັດທະນາຫຼັກສູດ* ............................................................................................ 47

*4.1. ໂຄງການຈຸດສຸມບູລິມະສິດ* ............................................................................................ 47

4.1.1. ໂຄງການທົບທວນຫຼັກສູດ ................................................................................................ 47

4.1.2. ໂຄງການສ້າງຫຼັກສູດໃໝ່ ................................................................................................. 48

4.1.3. ໂຄງການສ້າງຫຼັກສູດອົບຮົມໄລຍະສັ້ນ ................................................................................ 48

4.1.4. ໂຄງການສ້າງຄູ່ມືການຮຽນ-ການສອນ ແລະ ຕຳລາຮຽນ ........................................................... 48

*5. ແຜນງານ ພັດທະນາຄູອາຈານ* ........................................................................................... 49

*5.1. ໂຄງການຈຸດສຸມບູລິມະສິດ* ............................................................................................ 49

5.1.1. ໂຄງການການພັດທະນາທັກສະການສອນແບບໃໝ່ ................................................................... 49

5.1.2. ໂຄງການຍົກລະດັບວິຊາສະເພາະທາງດ້ານວິຊາການ ................................................................. 49

5.1.3. ໂຄງການຈັດຕັ້ງປະຕິບັດການອົບຮົມແບບຕໍ່ເນື່ອງ ....... 49
*6. ແຜນງານ ພັດທະນາດ້ານໂຄງລ່າງພື້ນຖານ, ອຸປະກອນ ແລະ ສິ່ງອຳນວຍຄວາມສະດວກ* ....... **50**
**6.1 ໂຄງການຈຸດສຸມບູລິມະສິດ ....... 50**
6.1.1. ໂຄງການກໍ່ສ້າງພື້ນຖານໂຄງລ່າງ ....... 50
6.1.2. ໂຄງການສ້າງຫ້ອງປະຕິບັດການດ້ານ ໂພຊະນາການ ....... 51
6.1.3. ໂຄງການສ້າງຫ້ອງປະຕິບັດການດ້ານ ອະນາໄມສິ່ງແວດລ້ອມ ແລະ ອາຊີວະອະນາໄມ ....... 51
*7. ແຜນງານສົ່ງເສີມການຄົ້ນຄ້ວາວິທະຍາສາດ ແລະ ການໃຫ້ບໍລິການວິຊາການ* ....... **51**
*7.1. ໂຄງການຈຸດສຸມບູລິມະສິດ* ....... 51
7.1.1. ໂຄງການສົ່ງເສີມການຄົ້ນຄວ້າວິທະຍາສາດດ້ານສາຫາລະນະສຸກ ....... 51
7.1.2. ໂຄງການເຜີຍແຜ່ ແລະ ຕີພິມ ....... 52
7.1.3. ໂຄງການບໍລິການວິຊາການແກ່ສັງຄົມ ....... 52
*8. ແຜນງານລະບົບປະກັນຄຸນນະພາບພາຍໃນ ແລະ ພາຍນອກ* ....... **52**
**8.1 ໂຄງການຈຸດສຸມບູລິມະສິດ ແລະ ຄາດຄະເນງົບປະມານ ....... 53**
8.1.1. ໂຄງການສ້າງລະບົບປະກັນຄຸນນະພາບພາຍໃນ ....... 53
8.1.2. ໂຄງການສ້າງລະບົບປະກັນຄຸນນະພາບພາຍນອກ ....... 53
*ພາກຜະໜວກ 1* ....... **54**
*ສັງລວມແຜນຍຸດທະສາດ ຄະນະສາທາລະນະສຸກສາດ (2021-2025)* ....... **54**
*ພາກຜະໜວກ 2* ....... **55**
*1. ແຜນງານ ບໍລິຫານ ແລະ ການຄຸ້ມຄອງ* ....... **55**
*ພາກຜະໜວກ 3* ....... **59**
*2. ແຜນງານ ຄຸ້ມຄອງ ແລະ ສົ່ງເສີມກິດຈະກຳນັກສຶກສາ* ....... **59**
*3. ແຜນງານ ພັດທະນາການຮຽນ-ການສອນ* ....... **61**
*ພາກຜະໜວກ 5* ....... **66**
*4. ແຜນງານພັດທະນາຫຼັກສູດ* ....... **66**
*ພາກຜະໜວກ 6* ....... **69**
*5. ແຜນງານ ພັດທະນາຄູອາຈານ ແລະ ພະນັກງານ* ....... **69**
*ພາກຜະໜວກ 7* ....... **72**
*6. ແຜນງານ ພັດທະນາດ້ານໂຄງລ່າງພື້ນຖານ , ອຸປະກອນ ແລະ ສິ່ງອຳນວຍຄວາມສະດວກ* ....... **72**

# ພາກທີ I

# ສະຫລຸບການຈັດຕັ້ງປະຕິບັດແຜນຍຸດທະສາດ ຂອງ ຄະນະສາທາລະນະສຸກສາດ 5 ປີແຕ່ປີ 2016-2020

## I. ສະພາບລວມ

ແຜນຍຸດທະສາດ 5 ປີ ຂອງຄະນະສາທາລະນະສຸກສາດ, ມະຫາໄລ ວິທະຍາສາດ ສຸຂະພາບ ແມ່ນໄດ້ສ້າງຂຶ້ນ ແລະ ປະຕິບັດໃນທ່າມກາງ ສິ່ງທ້າທາຍ ແລະການປ່ຽນແປງ ຂອງສາກົນ ແລະພາຍໃນປະເທດທີ່ມີຫຼາຍເຫດການເກີດຂຶ້ນທັງມີ ອັນດີ ແລະ ອັນຫຍໍ້ທໍ້. ກະຊວງສຶກສາທິການ ແລະ ກິລາ ຜູ້ທີ່ຮັບຜິດຊອບເລື່ອງ ການກໍ່ສ້າງຊັບພະຍາກອນມະນຸດຂອງ ປະເທດ ໄດ້ສ້າງມາດຕະຖານການປະກັນຄຸນນະພາບການສຶກສາຊັ້ນສູງ ມີ 10 ມາດຕະຖານ: ວິໄສທັດ, ພາລະໜ້າທີ່ ແລະ ຈຸດໝາຍການກໍ່ສ້າງ, ການຄຸ້ມຄອງ ແລະ ການບໍລິຫານ, ການພັດທະນາບຸກ ຄະລາກອນ, ຫຼັກສູດ, ປະສິດທິຜົນ ຂອງການຮຽນ-ການສອນ, ການສົ່ງເສີມນັກສຶກສາ, ສະພາບແວດລ້ອມ ແລະ ແຫຼ່ງການຮຽນຮູ້, ລະບົບຂໍ້ມູນຂ່າວ ສານ, ລະບົບການປະກັນພາຍໃນ, ການຄົ້ນຄວ້າວິທະຍາສາດ ແລະການບໍລິ ການວິຊາການ.  ກະຊວງສາທາລະນະ ສຸກ ກໍ່ໄດ້ ຮ່າງມາດຕະຖານປະກັນຄຸນນະພາບ ຂອງສະຖາບັນການສຶກສາ ວິຊສຊີບສາທາລະນະສຸກແລະກຳລັງດຳ ເນີນ ການຜັນ ຂະຫຍາຍຈັດຕັ້ງປະຕິບັດ.

ຄະນະສາທາລະນະສຸກສາດ, ມະຫາວິທະຍາໄລ ວິທະຍາສາດ ສຸຂະພາບ ເປັນຄະນະໃໝ່ທີ່ ຫາກໍສ້າງ ຕັ້ງ ຂຶ້ນ ໂດຍອີງໃສ່ ດຳລັດ 349 349/ນຍ, ລົງວັນທີ 16 ພະຈິກ 2017,   ຊຶ່ງແຍກອອກຈາກຄະນະຫຼັງມະຫາໃນເມືອກ່ອນ. ປະຈຸບັນ, ຄະນະສາທາລະນະສຸກສາດໄດ້ໂຮມເອົາສະມາຊິກພັກທີ່ໂອນມາຈາກຄະນະພະຍາບານສາດ ແລະຄະນະວິທະຍາສາດພື້ນ ຖານການແພດ. ພາລະບົດບາດໜ້າທີ່ຕົ້ນຕໍຂອງຄະນະຫຼັງມະຫາໃນເມືອກ່ອນ ກໍຄືຄະນະສາທາລະນະສຸກສາດໃນປະຈຸ ບັນ ແມ່ນເຮັດໜ້າທີ່ກໍ່ສ້າງນັກວິຊາການສາຂາວິຊາຕ່າງໆລະດັບຫຼັງປະລິນຍາຕີ,ເຮັດການຄົ້ນຄ້ວາວິທະຍາສາດ ແລະ ໃຫ້ການບໍລິການທາງດ້ານວິຊາການແກ່ສັງຄົມ. ດັ່ງນັ້ນ, ຄະນະ ຈຶ່ງມີຄວາມທ້າທາຍ ໃນການຈັດຕັ້ງການຮຽນ-ການສອນ ຫລັກສູດ ສາທາລະນະສຸກສາດ, ເລີ້ມແຕ່ປະລິນຍາຕີ ເຖິງ ປະລິນຍາໂທ ແລະ ປະລິນຍາເອກ. ດັ່ງ ນັ້ນ, ຄະນະ ສາທາລະນະສຸກສາດ   ຈຶ່ງມີຄວາມຈຳເປັນໃນການສ້າງລະບົບປະກັນຄຸນນະພາບພາຍໃນມະຫາວິທະຍາ ໄລ ເພື່ອເປັນ ມາດຕະຖານໃນການກວດກາພາຍໃນ ເຊິ່ງມີບັນດາອີງປະກອບມາດຕະຖານໃກ້ຄຽງກັນກັບ ມາດ ຕະຖານ ກະຊວງ ສາທາລະນະສຸກ, ກະຊວງສຶກສາ ທິການ ແລະ ກິລາ, ໃນພາກພື້ນ ແລະ ສາກົນ.

ຄະນະສາທາລະນະສຸກສາດ   ໄດ້ຖືເອົາວຽກງານນຳພາແນວຄິດການເມືອງການຈັດຕັ້ງເປັນບູລິມະສິດໜຶ່ງໃນການນຳພາ ເຄື່ອນໄຫວວຽກງານ ຕ່າງໆ ໃນນັ້ນໄດ້ຖືເອົາວຽກງານການສຶກສາອົບຮົມການເມືອງແນວຄິດຕິດພັນກັບວຽກງານວິຊາສະ ເພາະໄປພ້ອມໆກັນ, ຄຽງຄູ່ກັນນັ້ນໄດ້ຈັດຕັ້ງຊຸກຍູ້ທຸກການເຄື່ອນໄຫວຂອງ 03 ອົງການຈັດຕັ້ງມະຫາຊົນຢ່າງເປັນປະຈຳ ໂດຍສະເພາະການຮ່ວມຊີວິດການເມືອງ, ສະຫລຸບລາຍງານຜົນງານຕ່າງໆ, ຈ່າຍເງິນສະຕິເປັນປົກກະຕິ. ນອກຈາກນັ້ນ, ພະນັກງານຍັງເຂົ້າຮ່ວມຟັງເອກະສານຝຶກຝົນຫຼໍ່ຫຼອມຄຸນສົມບັດສິນທຳປະຕິວັດ,  ເອກະສານກ່ຽວກັບການເຄື່ອນ ໄຫວ ຊີວິດການເມືອງຂອງບັນດາທ່ານຜູ້ນຳພັກລັດ, ນອກຈາກນີ້ກໍ່ມີການຮັບ ຟັງການເຜີຍ ແຜ່ຂໍ້ກຳນົດ, ດຳລັດກົດໝາຍຕ່າງໆ. ດຳເນີນຊີວິດໃນຄະນະ ຢ່າງເປັນປົກກະຕິ ໂດຍຖືເອົາການລວມປະຈຳອາທິດ, ປະຈຳເດືອນເປັນທິດຊີ້ນຳ-ນຳພາແນວຄິດ ພະນັກງານໃນຄະນະຢ່າງເປັນ ປົກກະຕິຊຶ່ງເຮັດໃຫ້ພະນັກງານ, ແລະ ນັກສຶກສາ ທຸກຄົນມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອ ໝັ້ນຕໍ່ການນຳພາ ຂອງພັກ, ຕັ້ງໜ້າປະຕິບັດແຜນການຂອງລັດກໍ່ຄືມະຕິຄຳສັ່ງຈາກຂັ້ນເທິງຕະຫລອດໄລຍະຜ່ານມາ. ຄສສ ໄດ້ສ້າງພະ ນັກງານສືບທອດໃຫ້ມີຄວາມຮູ້, ຄວາມສາມາດທາງດ້ານທິດສະດີການເມືອງ ແລະ ວິຊາການ. ຈົນຮອດ ປັດຈຸບັນ ໄດ້ມີພະນັກງານຜ່ານການອົບຮົມທິດສະດີດັ່ງລຸ່ມນີ້:

- ເຂົ້າຮ່ວມຟັງປະຖະກະຖາວັນສຳຄັນຕ່າງທີ່ ມວສ ຈັດຂຶ້ນ ເຊັ່ນ: ວັນຊາດທີ 02 ທັນວາ, ຄົບຮອບວັນຄ້າຍວັນເກີດ ທ່ານ ປະທານ ໄກສອນ ພົມວິຫານ.
- ເຂົ້າຮ່ວມພິທີສະເຫຼີມສະຫຼອງວັນສາກົນຍຸດຕິການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ 25 ພະຈິກ ທີ່ມະຫາວິທະຍາໄລ ວິທະຍາສາດ ສຸຂະພາບ ດົງໂດສີ.
- ເຂົ້າຮ່ວມຮຽນ ແລະ ເຊື່ອມຊຶມທຸກເອກກະສານ ແລະ ມະຕິກອງປະຊຸມຄົບຄະນະບໍລິຫານງານສູນກາງພັກສະ ໄໝທີ IX ແລະ ທີ X, ມະຕິ ແລະ ແຜນການວຽກງານກອງປະຊຸມໃຫຍ່ຄັ້ງທີ VII ແລະ ທີ VIII ຂອງອົງຄະນະພັກ ກະຊວງສາທາລະນະສຸກ ແລະ ມະຕິແຜນການຂອງຄະນະພັກຮາກຖານ ມວສ ຄັ້ງທີ II ແລະ ຂອງໜ່ວຍພັກຕົນ. ຈັດຕັ້ງຮໍ່າຮຽນກົດລະບຽບຂອງພັກ, ເອກະສານການເມືອງ ແລະ ປາຖະກະຖາເລົ່າມູນເຊື້ອວັນ ສຳຄັນຕ່າງໆຂອງພັກ ແລະ ຂອງຊາດຂອງອົງການຈັດຕັ້ງມະຫາຊົນ, ບົດຮຽນ ແລະ ຄຸນສົມບັດສິນທຳປະຕິວັດ ຂອງບັນດາຜູ້ນຳພັກລັດ.
- ເຂົ້າຮ່ວມກອງປະຊຸມແຂ່ງຂັນ 5 ເປັນເຈົ້າ ຂອງອົງການຈັດຕັ້ງກຳມະບານ.
- ຈັດພິທີກອງປະຊຸມສະຫຼຸບຜົນງານ 03 ປີ ແລະ ປ່ອນບັດຄັດເລືອກຫົວໜ້າສະຫະພັນແມ່ຍິງແລະກຳມະບານໃໝ່ ຂອງຄະນະສາທາລະນະສຸກສາດ ທີ່ຫ້ອງປະຊຸມຄະນະສາທາລະນະສຸກສາດ ໃນເດືອນ ເມສາ.
- ຈັດພິທີກອງປະຊຸມສະຫຼຸບຜົນງານ 03 ປີ ແລະ ປ່ອນບັດຄັດເລືອກຫົວໜ້າຊາວໜຸ່ມໃໝ່ຂອງຄະນະສາທາລະນະ ສຸກສາດ ທີ່ຫ້ອງປະຊຸມຄະນະສາທາລະນະສຸກສາດ.
- ເຂົ້າຮ່ວມຟັງປາຖະກະຖາວັນສຳຄັນຕ່າງໆ ເຊັ່ນ: ວັນກຳມະກອນສາກົນຄົບຮອບ 131 ປີ, ວັນແພດລາວ, ວັນຄູ ແຫ່ງ ຊາດຄົບຮອບ 23 ປີ.
- ເຂົ້າຮ່ວມການສະເຫຼີມສະຫຼອງວັນແມ່ຍິງສາກົນຄົບທີ່ ມວສ ແລະ ກະຊວງສາທາລະນະສຸກ.

❖ **ໂຄງປະກອບການຈັດຕັ້ງຄະນະສາທາລະນະສຸກສາດປະກອບມີ:**

- ຄະນະບໍດີ 01 ທ່ານ ແລະ ຮອງຄະນະບໍດີ 02 ທ່ານ
- 1 ພະແນກ (ພະແນກບໍລິຫານ-ວິຊາການ)
- 4 ພາກວິຊາ (ພາກວິຊາ ລະບາດວິທະຍາ ແລະ ຊີວະສະຖິຕິ ,ຄຸ້ມຄອງສາທາລະນະສຸກພາກວິຊາ ,ພາກວິຊ ສົ່ງ ເສີມສຸຂະພາບ ແລະໂພຊະນາການ ແລະ ພາກວິຊາສິ່ງແວດລ້ອມ ແລະ ອາຊີວະອະນາໄມ).

❖ **ບຸກຄະລາກອນ:**

- ຄະນະບໍດີ 01 ທ່ານ (ຍິງ 01 ທ່ານ)
- ຮອງຄະນະບໍດີ 03 ທ່ານ (ຍິງ 02 ທ່ານ)
- ຫົວໜ້າພາກວິຊາ 01 ທ່ານ (ຍິງ 01 ທ່ານ)
- ຮອງຫົວໜ້າພາກວິຊາ 09 ທ່ານ (ຍິງ 06 ທ່ານ )
- ຮອງຫົວໜ້າພະແນກ 02 ທ່ານ (ຍິງ 02 ທ່ານ)
- ພງ ວິຊາການ 12 ທ່ານ (ຍິງ 10 ທ່ານ)
- ລວມພະນັກງານທັງໝົດ 31 ທ່ານ (ຍິງ 21 ທ່ານ)

❖ **ລະດັບວິຊາສະເພາະ:**

- ເໜືອປະລິນຍາເອກ 01 ທ່ານ (ຍິງ 01 ທ່ານ)
- ປະລິນຍາເອກ 01 ທ່ານ (ຍິງ 01 ທ່ານ)
- ປະລິນຍາໂທ 9 ທ່ານ (ຍິງ 06 ທ່ານ)
- ຊ່ຽວຊານຂັ້ນ 1 04 ທ່ານ (ຍິງ 03 ທ່ານ)
- ປະລິນຍາຕີ 12 ທ່ານ (ຍິງ 08 ທ່ານ)
- ອະນຸປລິນຍາ 02 ທ່ານ (ຍິງ 01 ທ່ານ)

ກຳລັງສຶກສາຕໍ່ປະລິນຍາເອກ 02 ທ່ານ (ຍິງ 01) ແລະ ປະລິນຍາໂທ 01 ທ່ານ ( 01 ຍິງ), ພະນັກງານ 95% 01 ທ່ານ, ພະນັກງານຈ້າງຕາມສັນຍາ 01 ທ່ານ.

❖ 4 ພາກວິຊາ:

1. ພາກວິຊາ ຄຸ້ມຄອງສາທາລະນະສຸກ (ມີ 03 ໜ່ວຍວິຊາ)
2. ພາກວິຊາ ລະບາດວິທະຍາ ແລະ ຊີວະສະຖິຕິ (ມີ 03 ໜ່ວຍວິຊາ)
3. ພາກວິຊາ ສົ່ງເສີມສຸຂະພາບ ແລະໂພຊະນາການ (ມີ 03 ໜ່ວຍວິຊາ)
4. ພາກວິຊາ ອະນາໄມສິ່ງແວດລ້ອມ ແລະ ອາຊີວະອະນາໄມ (ມີ 03 ໜ່ວຍວິຊາ)

## II. ທິດທາງລວມຂອງແຜນຍຸດທະສາດພັດທະນາ ຄະນະສາທາລະນະສຸກສາດ ແຕ່ປີ 2016-2020

### 1.1. ທິດທາງລວມ

- ການພັດທະນາຕ້ອງໃຫ້ສອດຄ່ອງ ແລະ ຕິດພັນກັບການພັດທະນາເສດຖະກິດສັງຄົມທັງສອດຄ່ອງກັບພາວະຄວາມເປັນຈິງ;
- ການພັດທະນາຄະນະສາທາລະນະສຸກສາດຕ້ອງເອົາການສຶກສາເປັນໃຈກາງໃນການພັດທະນາຊັບພະຍາກອນມະນຸດໃຫ້ ກາຍເປັນພາລະກິດສຳຄັນ ແລະ ຈຳເປັນ;
- ຍຸດທະສາດຕອບສະໜອງຄວາມຕ້ອງການ ທາງດ້ານສຸຂະພາບຂອງປະຊາຊົນລາວທຸກເຜົ່າຊົນຊັ້ນ;
- ມີຄວາມເປັນເລີດທາງດ້ານວິຊາການ, ການຮຽນ-ການສອນ ທີ່ມີຄຸນນະພາບ, ການຮ່ວມມື ແລະໃຫ້ບໍລິ ການແກ່ສັງຄົມທີ່ມີປະສິດພາບ;

### *2.2. ຈຸດປະສົງ*

ເພື່ອສ້າງ ຄະນະສາທາລະນະສຸກສາດ ໃຫ້ມີຄວາມເຂັ້ມແຂງສາມາດສ້າງນັກວິຊາການສາທາລະນະສຸກຢ່າງ ມີຄຸນນະພາບໄດ້ມາດຕະຖານສາທາລະນະສຸກຂັ້ນພື້ນຖານຂອງສາກົນ, ມາດຕະຖານປະກັນຄຸນນະພາບ ທາງດ້ານສາທາລະນະສຸກຂອງເຄືອຄ່າຍມະຫາວິທະຍາໄລອາຊຽນ, ມາດຕະຖານການປະກັນຄຸນນະພາບການສຶກສາຊັ້ນສູງ ຂອງກະຊວງ ສຶກສາທິການ ແລະ ກິລາ ແລະ ກະຊວງສາທາລະນະສຸກ.

### *2.3. ຄາດໝາຍລວມ*

- ການພັດທະນາ ຄະນະສາທາລະນະສຸກສາດ ແມ່ນໃຫ້ບັນລຸຕາມມາດຕະຖານສາທາລະນະສຸກແຕ່ລະດ້ານ ຢູ່ພາຍໃນປະເທດ, ຂົງເຂດ ແລະ ສາກົນ ເພື່ອຜ່ານການປະກັນຄຸນນະພາບການສຶກສາສາທາລະນະສຸກຂອງສາກົນ
- ຄະນະສາທາລະນະສຸກສາດ, ມະຫາວິທະຍາໄລ ວິທະຍາສາດ ສຸຂະພາບ ເປັນບ່ອນກໍ່ສ້າງນັກວິຊາການ ໃຫ້ເປັນມັນສະໝອງ ແລະເປັນຜູ້ຊຳນານງານໃນວຽກງານສາທາລະນະສຸກ ແລະ ກັນພະຍາດ, ຊຶ່ງເປັນ ບຸລິມະສິດອັນສຳຄັນ ຂອງກະຊວງສາທາລະນະສຸກ;
- ການກໍ່ສ້າງຊັບພະຍາກອນມະນຸດ ທາງດ້ານສາທາລະນະສຸກ ແມ່ນສ້າງນັກສາທາລນະສຸກໃຫ້ມີຂີດຄວາມສາມາດ ທີ່ເປັນມາດຕະຖານຫຼາຍດ້ານເຊັ່ນ: ທັງດ້ານທັກສະ, ຄວາມຮູ້, ທັດສະນະຄະຕິ, ການຄິດ, ວິເຄາະລະດັບສູງ, ພາວະຜູ້ນຳ, ການວາງແຜນຄຸ້ມຄອງສາທາລະນະສຸກ, ທັກສະການແກ້ໄຂບັນຫາ, ຈັນຍາບັນ, ຈິດອາສາ, ທັກສະການຮຽນຮູ້ຕະຫຼອດຊີວິດ, ມະນຸດສຳພັນ ແລະການສື່ສານທີ່ດີ;
- ການພັດທະນາວິຊາການຊັ້ນສູງ ແລະ ນັກຄົ້ນຄ້ວາວິທະຍາສາດທາງດ້ານສາທາລະນະສຸກ ສາມາດຕອບສະໜອງຕາມແນວທາງ ຫັນເປັນອຸດສະຫະກຳທີ່ທັນສະໄໝ ແລະທັງສອດຄ່ອງກັບຄວາມຕ້ອງການຂອງສັງຄົມ ແລະ ການພັດທະນາເສດຖະກິດ-ສັງຄົມຂອງປະເທດ.

### *2.4. ວິໃສທັດ Vision*

ສ້າງຄວາມເປັນເລີດດ້ານການສຶກສາ ແລະ ການຄົ້ນຄ້ວາວິທະຍາສາດ ທາງດ້ານສາທາລະນະສຸກ ໃນທົ່ວປະເທດ ແລະພາກພື້ນ.

### *2.5. ພັນທະກິດ Mission*
ເພື່ອຍົກລະດັບທາງດ້ານວິຊາການສາທາລະນະສຸກ ໂດຍການຈັດການອົບຮົມ ລະດັບປະລິນຍາຕີ/ຫຼັງປະລິນຍາຕີໃຫ້ແກ່ພະນັກງານສາທາລະນະສຸກ ເພື່ອຕອບສະໜອງການສົ່ງເສີມສຸຂະພາບແລະ ການກັນພະຍາດທີ່ມີປະສິດທິພາບ ເພື່ອຍົກລະດັບວິຊາການທາງດ້ານສາທາລະນະສຸກ.

### *2.6. ປັດຊະຍາ*
ຄະນະສາທາລະນະສຸກສາດ ເປັນສະຖາບັນຊັ້ນນຳທາງດ້ານສາທາລະນະສຸກໃນ ສປປ ລາວ, ຊຶ່ງໄດ້ຈັດການຮຽນ-ການສອນລະດັບປະລິນຍາຕີ /ຫຼັງປະລິນຍາຕີ ແລະ ໃຫ້ໂອກາດແກ່ນັກສຶກສາ ເພື່ອບັນລຸຄວາມມຸ້ງຫວັງ ທາງດ້ານວິຊາຊີບສາທາລະນະສຸກ ແລະ ເສີມຂະຫຍາຍທັກສະໃນການຮຽນຮູ້-ການສອນ.

**ຄະນະສາທາລະນະສຸກມີ 8 ແຜນງານຍ່ອຍພັດທະນາ ຄະນະສາທາລະນະສຸກສາດ ເຊັ່ນ**
1) ແຜນງານບໍລິຫານ-ຄຸ້ມຄອງ;
2) ແຜນງານຄຸ້ມຄອງ ແລະ ສົ່ງເສີມກິດຈະການັກສຶກສາ
3) ແຜນງານພັດທະນາການຮຽນ-ການສອນ;
4) ແຜນງານ ພັດທະນາຫຼັກສູດ;
5) ແຜນງານພັດທະນາຄູອາຈານ ແລະ ພະນັກງານ;
6). ແຜນພັດທະນາໂຄງລ່າງພື້ນຖານ, ອຸປະກອນ ແລະສິ່ງອານວຍຄວາມສະດວກ;
7) ແຜນງານການສົ່ງເສີມການຄົ້ນຄ້ວາວິທະຍາສາດ ແລະ ການໃຫ້ບໍລິການວິຊາການ;
8) ແຜນງານລະບົບປະກັນຄຸນນະພາບພາຍໃນ.

## III. ຜົນງານຂອງແຜນງານຍຸດທະສາດພັດທະນາ ຄະນະສາທາລະນະສຸກສາດ

### 1. ແຜນງານບໍລິຫານ-ຄຸ້ມຄອງ
ຄະນະເຂົ້າຮ່ວມກອງປະຊຸມເພື່ອປຶກສາຫາລື ແລະ ຂຶ້ນແຜນລະອຽດໃນການຈັດຕັ້ງປະຕິບັດແຜນຍຸດທະສາດແຕ່ປີ 2016-2020 ແລະ ພັດທະນາແຜນຍຸດທະສາດພັດທະນາ ຄະນະ 5 ປີ ແຕ່ປີ 2021-2025.

**1.1.1. ໂຄງການຄຸ້ມຄອງເອກະສານ, ນິຕິກຳ-ຂໍ້ຕົກລົງ ແລະ ລະບຽບການຕ່າງໆ :**
- ເຂົ້າຮ່ວມອົບຮົມວິທີການຈັດເກັບເອກະສານຕ່າງໆ ແລະ ການໄຫລວຽນເອກະສານຢູ່ຫ້ອງປະຊຸມກະຊວງສາທາ.
- ສ້າງຖານຂໍ້ມູນເກັບກຳເອກະສານຂາອອກ-ຂາເຂົ້າຢ່າງລະອຽດ ແລະ ຈັດໄຟລເອກກະສານຕ່າງໆ ໄປຕາມໝວດໝູ່ ແລະ ຈັດຕັ້ງປະຕິບັດ ລະບົບການຄຸ້ມຄອງເອກກະສານ, ຂໍ້ຕົກລົງ ແລະ ບຽບການຕ່າງໆ ທັງເປັນໃນຮູບແບບ Soft ware and Hardware ໃຫ້ມີປະສິດທິຜົນ;

**1.1.2. ໂຄງການຄຸ້ມຄອງບໍລິຫານບຸກຄະລາກອນ**
- ເຂົ້າຮ່ວມກອງປະຊຸມສ້າງແຜນກຳນົດພະນັກງານນຳພາ-ຄຸ້ມຄອງຂັ້ນສູນກາງຄຸ້ມຄອງຂອງກະຊວງສາທາລະນະສຸກ 2 ຄັ້ງ ທີ່ຫ້ອງປະຊຸມສັບບພະວິຊາ ແລະ ໂຮງໝໍມິດຕະພາບ.
- ເຂົ້າຮ່ວມກອງປະຊຸມຜ່ານພາລະບົດບາດຂອງຄະນະຢູ່ພະແນກກົງຈັກກົມຈັດພະນັກງານກະຊວງສາທາລະນະສຸກ ທີ່ກະຊວງສາທາລະນະສຸກ.
- ເຂົ້າຮ່ວມອົບຮົມການຂຽນກຳນົດຕຳແໜ່ງງານ ແລະ ພາລະບົດບາດ ຂອງພະນັກງານ ຄສສ.
- ສຳເລັດການຂຽນພາລະບົດບາດ ແລະ ນຳສະເໜີເພື່ອຂໍອານຸມັດ ຈາກ ກະຊວງສາທາລະນະສຸກ.
- ເຂົ້າຮ່ວມກອງປະຊຸມ 155 ແລະ ຕົກລົງກ່ຽວກັບພາລະບົດບາດຂອງ ມວສ, ຄະນະສາທາລະນະສຸກສາດ, ແລະ ໂຮງໝໍມະຫາ ວິທະຍາໄລ ຮ່ວມກັບການນຳກະຊວງສາທາລະນະສຸກ 4 ຄັ້ງ.

- ເຂົ້າຮ່ວມກອງປະຊຸມແນະນຳດ້ານວິຊາການໃນການກະກຽມສ້າງແຜນພັດທະນາສາທາລະນະສຸກ 05 ປີຄັ້ງທີ IX ແລະ ປຶກສາຫາລືປະກອບແນວຄວາມຄິດເບື້ອງຕົ້ນກ່ຽວກັບຍຸດທະສາດປະຕິຮູບສາທາລະນະສຸກໄລຍະ III (2021-2025) ທີ່ໂຮງແຮມລາວພຣາຊາ.
- ຈັດການປະເມີນຜົນງານຂອງພະນັກງານ ແລະ ລັດຖະກອນຄູ; ແລະ ຍ້ອງຍໍຜົນງານດີເດັ່ນປະຈຳປີ ແລະ 5 ປີ.
- ຄະນະສາທາລະນະສຸກສາດ ໄດ້ສະເໜີການຍ້ອງຍໍຄູອາຈານທີ່ເຊີນມາສອນ ຈຳນວນ 28 ທ່ານ ໃນໂອກາດ ວັນຄູແຫ່ງຊາດ
- ຮັບພະນັກງານລັດຖະກອນຍ້າຍມາໃໝ່ 5 ທ່ານ ແລະ ຊັບຊ້ອນບຸກຄະລາກອນໃຫ້ຖືກຕາມຕຳແໜ່ງງານທີ່ເໝາະສົມໃຫ້ໄປຕາມຕາມຂັ້ນຕອນຕ່າງໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບລັດຖະກອນ ແລະ ນິຕິກຳອື່ນໆ ທີ່ກ່ຽວຂ້ອງ.
- ສ້າງຖານຂໍ້ມູນເກັບກຳສະຖິຕິ ແລະ ຊີວະປະຫວັດຂອງພະນັກງານ ຄສສ.
- ເຂົ້າຮ່ວມ ກອງປະຊຸມເພື່ອປະກອບຄຳເຫັນ ແລະ ຕົກລົງເປັນເອກະພາບຕໍ່ຮ່າງຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຢູ່ຫ້ອງປະຊຸມກົມຈັດຕັ້ງ ແລະ ພະນັກງານ.
- ເຂົ້າຮ່ວມກອງປະຊຸມການບໍລິຫານຄວາມຮູ້ທີ່ເປັນພື້ນຖານສຳລັບການກາຍເປັນອົງກອນແຫ່ງຄວາມຮູ້ສຳລັບກະຊວງສາທາລະນະສຸກ.

**1.1.3. ໂຄງການຄຸ້ມຄອງບໍລິຫານການເງິນ**

- ຂຶ້ນແຜນງົບປະມານພາກ 63 ໃນການຈັດຕັ້ງປະຕິບັດຫຼັກສູດ ແຕ່ສົກປີ 2016-2020 ແລະ ຕິດຕາມ ການຖອນງົບປະມານ ໃນພາກ 63. ຄະນະບໍດີ, ການເງິນ ເຂົ້າຮ່ວມກອງປະຊຸມກ່ຽວກັບງົບປະມານພາກ 63 ທີ່ຫ້ອງປະຊຸມຄະນະ ແລະ ເຂົ້າຮ່ວມຜ່ານແຜນການ ແລະ ປ້ອງກັນບົດສະເໜີຂອງຕົນສຳລັບ ສົກປີ 2016-2020 ທີ່ຫ້ອງປະຊຸມກົມການເງິນກະຊວງສາທາລະນະສຸກ.
- ຕິດຕາມການຖອນແຜນແບ່ງປັນງົບປະມານປົກກະຕິແຕ່ລະປີ ແລະ ການຂຶ້ນແຜນງົບປະມານປົກກະຕິໃນປີຕໍ່ໄປ.
- ເຂົ້າຮ່ວມກອງປະຊຸມຜ່ານແຜນຈົດຈ່າຍຕາມສາລະບານງົບປະມານທີ່ກົມຈັດຕັ້ງ-ພະນັກງານກະຊວງສາທາລະນະສຸກ ແລະ ຂຶ້ນແຜນນຳໃຊ້ເງິນວິຊາການ ຂອງ ຄະນະສາທາລະນະສຸກ.
- ເຂົ້າຮ່ວມກອງປະຊຸມກ່ຽວກັບການສະຫຼຸບແຜນການ-ການເງິນລາຍຮັບ-ລາຍຈ່າຍໃນແຕ່ລະປີ ແລະ ທິດທາງຈັດຕັ້ງປະຕິ ບັດແຜນລາຍຮັບ-ລາຍຈ່າຍໃນປີຕໍ່ໄປ.
- ເຂົ້າຮ່ວມກອງປະຊຸມສະຫລຸບຖອດຖອນບົດຮຽນການປະຕິບັດວຽກງານງົບປະມານປະຈຳປີ.
- ເຂົ້າຮ່ວມກອງປະຊຸມຖອດຖອນບົດຮຽນຂອງຄະນະກຳມະການຈັດຊື້-ຈັດຈ້າງ ທີ່ຫ້ອງປະຊຸມຄູອາຈານແຕ່ລະປີ.

**1.1.4. ໂຄງການສົ່ງເສີມການພົວພັນ ແລະ ການຮ່ວມມືກັບຕ່າງປະເທດ**

ຄະນະສາທາລະນະສຸກໄດ້ຊີ້ນຳນຳພາຮ່ວມມືກັບສາກົນ ກັບຫຼາຍປະເທດມີຜົນງານຫຼາຍດ້ານດັ່ງນີ້:

- ປະສານງານ ແລະ ຮ່ວມມືທາງດ້ານວິຊາການກັບບັນດາອົງການຈັດຕັ້ງສາກົນແລະມະຫາວິທະຍາໄລໃນຕ່າງປະເທດ ເຊັ່ນ:
- ປະເທດວຽດນາມ: Hanoi School of Public Health
- ປະເທດໄທ: Khon Kaen University, Mahidol University, Mahasarakham University, Chiang Mai University, Naresuan University.
- ປະເທດອາເມລິກາ: University of Rochester, Case Western Reseve University,
- ປະເທດເຢັຍລະມັນ: University of Freiburg
- ປະເທດການາດາ: University of Calgary
- ປະເທດຝລັ່ງ: University Claud Bernard Lyon I, Bordeaux, ມະຫາວິທະຍາໄລ Auvergne,
- France
- ປະເທດສະວີເດັນ: Karolinska Institute

- ປະເທດອົດສະຕາລີ: Melbourn University
- ປະເທດຍີ່ປຸ່ນ : Tokyo University, Nippon Medical School
- ປະເທດເກົາຫລີ : National Seoul University, EWHA University
- ສະເໜີຂໍອະນຸມັດ MOA ກັບ Hanoi School of Public Health
- ເຂົ້າຮ່ວມປຶກສາຫາລືກ່ຽວກັບການຕໍ່ສັນຍາ MOU ອີກ 5 ປີ ກັບ Health Frontiers ແລະ ມວສ.
- ເຊັນສັນຍາບົດບັນທຶກ ຄວາມເຂົ້າລະຫ່ວາງ ຄະນະຫຼັງມະຫາວິທະຍາໄລ ມະຫາວິທະຍາໄລວິທະຍາສາດ ສຸຂະພາບ ກະຊວງສາທາລະນະສຸກ ສປປ ລາວ ກັບ ໂຮງຮຽນສາທາລະນະສຸກ ຮ່າໂນຍ ສສ ວຽດນາມ ວ່າດ້ວຍການອົບຮົມ ແລະ ຄົ້ນຄ້ວາວິທະຍາສາດ ຂອງຫຼັກສູດຮ່ວມກັນຂອງ ສອງປະເທດ, ໂຮງຮຽນສາທາລະນະສຸກ, ມະຫາວິທະຍາໄລ ສິງກະໂປ, ແລະ ມະຫາວິທະຍາໄລ ແມ່ຟ້າຫຼວງ, ປະເທດໄທ.
- ຮັບແຂກຈາກ ຄະນະສາທາລະນະສຸກສາດ, ມະຫາວິທະຍາໄລ ສິງກະໂປ ແລະ ມະຫາວິທະຍາໄລ ທຳມະສາດ.
- ຮັບແຂກຈາກ ມະຫາວິທະຍາໄລ ປູດູ ຈາກອະເມລິກາ ກ່ຽວກັບວຽກງານໂພຊະນາການ.
- ຮັບຕ້ອນແຂກຈາກ ມະຫາວິທະຍາໄລ ແມ່ຟ້າຫຼວງ, ປະເທດໄທ ເພື່ອມາຢ້ຽມຍາມ ແລະປຶກສາຫາລືເລື່ອງການ ຄົ້ນຄ້ວາວິທະຍາສາດ ການເຝົ້າລະວັງພະຍາດຊາຍແດນ.
- ເຂົ້າຮ່ວມຕ້ອນຮັບແຂກທີ່ທາງ ມວສ ເຊີນເຊັ່ນ: ປະເທດໄທ, ປະເທດສິງກະໂປ, ປະເທດຝຣັ່ງ, ປະເທດ ສປ.ຈີນ, ສສ.ຫວຽດນາມ, ເກົາຫລີ....
- ຮັບຕ້ອນອາຈານ ແລະ ນັກສຶກສາປະລິນຍາໂທ ສາຂາໂພຊະນາການ ຈາກມະຫາວິທະຍາໄລຂອນແກ່ນ ມານຳສະເໜີ ຫົວຂໍ້ບົດ ວິທະຍານິພົນ.
- ເຂົ້າຮ່ວມກອງປະຊຸມວິຊາການປຶກສາຫາລືແລກປ່ຽນບົດຮຽນກ່ຽວກັບການຍົກລະດັບປະລິນຍາໂທໃຫ້ແກ່ ພະນັກງານສາທາລະນະສຸກໃຫ້ມີຄຸນນະພາບຮ່ວມກັບທີມງານອາຈານຈາກມະຫາວິທະຍາໄລທຳມະສາດ ປະເທດ ໄທ ທີ່ຫ້ອງປະຊຸມກົມແຜນການ ແລະ ການຮ່ວມມືສາກົນ, ກະຊວງສາທາລະສຸກ.
- ຮັບນັກສຶກສາ ຈາກ ສະຖາບັນການສຶກສາ ກາໂຣລິນສະກາ, ປະເທດສະວີເດັນ ມາຝຶກງານກ່ຽວກັບ Global Health Fieldworkແຕ່ລະປີ ເປັນເວລາ 2 ອາທິດ.

**1.1.5. ໂຄງການຄຸ້ມຄອງຮັກສາພາຫະນະ, ອຸປະກອນຮັບໃຊ້ຫ້ອງການ ແລະ ການຮຽນ-ການສອນ**

- ສ້າງຖານຂໍ້ມູນເພື່ອເກັບກຳສະຖິຕິພາຫະນາ ແລະ ອຸປະກອນຮັບໃຊ້ຫ້ອງການ-ການຮຽນການສອນ.
- ຈັດຊື້ອຸປະກອນເຄື່ອງໃຊ້ຫ້ອງການ LCD and Computers, ອຸປະກອນສື່ການສອນ ລວມທັງອຸປະກອນທາງດ້ານ ໂພຊະນາການ ແລະ ສິ່ງແວດລ້ອມ;
- ສ້ອມແປງ ແລະ ບຳລຸງຮັກສາ ພາຫະນະ, ເຄື່ອງຄອມພິວເຕີ, LCD and Computers, ອຸປະກອນສື່ການສອນ.
- ສ້ອມແປງລົດຕູ້ ຂອງຄະນະສາທາລະນະສຸກ.

## 2. ແຜນງານຄຸ້ມຄອງ ແລະ ສົ່ງເສີມກິດຈະກຳນັກສຶກສາ

**2.1.1.ໂຄງການກິລາ, ແລະ ສິລະປະວັນນະຄະດີ**

- ເຂົ້າຮ່ວມຂະບວນການແຂ່ງຂັນກິລາບາງປະເພດ ຕາມຄວາມສາມາດຂອງພະນັກງານໃນຄະນະ
- ເຂົ້າຮ່ວມກອງປະຊຸມປຶກສາຫາລືກ່ຽວກັບການກະກຽມງານມະຫາກຳກິລາມະຫາວິທະຍາໄລລາວຄັ້ງທີ II ປີ 2019 ທີ່ມະຫາວິທະຍາໄລ ຈຳປາສັກ ໄດ້ຮັບກຽດເປັນເຈົ້າພາບ ທີ່ຫ້ອງປະຊຸມມະຫາວິທະຍາໄລແຫ່ງຊາດ
- ເຂົ້າຮ່ວມກິລາມະຫາວິທະຍາໄລລາງຄັ້ງທີ 1 ປີ 2016, ນະຄອນຫຼວງວຽງຈັນ
- ເຂົ້າຮ່ວມງານກິລາ ບານສົ່ງ ຊິງແຊ້ມອາຊ້ຽນ ປີ 2016, ຈັງຫວັດ ສົງຂາ ປະເທດໄທ
- ເຂົ້າຮ່ວມງານແຂ່ງຂັນກິລາບານສົ່ງໃນຮົ່ມຊິງຂັນລັດຖະມົນຕີກະຊວງສຶກສາ ຄັ້ງທີ2 ປີ 2017, ນະຄອນຫຼວງວຽງ ຈັນ (ເປັນນັກກິລາ ມວສ)
- ເຂົ້າຮ່ວມງານແຂ່ງຂັນກິລາບານສົ່ງຫາດຊາຍທົ່ວປະເທດ ຄັ້ງທີ1 ປີ 2018, ນະຄອນຫຼວງວຽງຈັນ (ເປັນນັກກິລາ ມວສ)

- ເຂົ້າຮ່ວມງານແຂ່ງຂັນກິລາບານສົ່ງໃນຮົ່ມທົ່ວປະເທດ ຄັ້ງທີ1 ປີ 2018, ນະຄອນຫຼວງວຽງຈັນ (ເປັນນັກກິລາ ມວສ)
- ເຂົ້າຮ່ວມແຂ່ງຂັນກິລາບານສົ່ງໃນຮົ່ມທົ່ວແຂວງສະຫວັນນະເຂດ ແລະ ແຂວງໄຊຍະບູລີ ປີ 2018
- ເຂົ້າຮ່ວມງານແຂ່ງຂັນກິລາບານສົ່ງຫາດຊາຍທົ່ວປະເທດ ຄັ້ງທີ2 ປີ 2019, ນະຄອນຫຼວງວຽງຈັນ (ເປັນນັກກິລາ ມວສ)
- ເຂົ້າຮ່ວມງານແຂ່ງຂັນກິລາບານສົ່ງໃນຮົ່ມທົ່ວປະເທດ ຄັ້ງທີ2 ປີ 2019, ນະຄອນຫຼວງວຽງຈັນ, (ເປັນຄູຝຶກ ທີມ ມວສ)
- ເຂົ້າຮ່ວມງານກິລາມິດຕະພາບລະຫວ່າງ ມວສ ແລະ ມະຫາວິທະຍາໄລຈຳປາສັກ ປີ 2019, ແຂວງຈຳປາສັກ
- ເຂົ້າຮ່ວມເປັນກຳມະການຕັດສິນ ກິລາບານສົ່ງ ທົ່ວ ມວສ ປີ 2019
- ເຂົ້າຮ່ວມງານແຂ່ງຂັນກິລາບານສົ່ງຫາດຊາຍທົ່ວປະເທດ ຄັ້ງທີ3 ປີ 2020, ນະຄອນຫຼວງວຽງຈັນ
- ເຂົ້າຮ່ວມງານແຂ່ງຂັນກິລາບານສົ່ງໃນຮົ່ມທົ່ວປະເທດ ຄັ້ງທີ3 ປີ 2020, ນະຄອນຫຼວງວຽງຈັນ (ເປັນຄູຝຶກ ທີມ ມວສ)
- ເຂົ້າຮ່ວມງານກິລາລຸ່ມແມ່ນ້ຳຂອງຄັ້ງທີ 11 ປີ 2020, ແຂວງຊຽງຂວາງ (ເປັນຄູຝຶກ ທີມ ມວສ)
- ເຂົ້າຮ່ວມຝຶກອົບຮົມຄູຝຶກກິລາບານສົ່ງຫາດຊາຍ ປີ 2020, ທີ່ ກົມກິລາລະດັບສູງ, ນະຄອນຫຼວງວຽງຈັນ
- ເຂົ້າຮ່ວມກຳມະການຕັດສິນ ກິລາບານສົ່ງ ທົ່ວ ມວສ ປີ 2020

**2.1.2. ໂຄງການວຽກງານ ອົງການຈັດຕັ້ງມະຫາຊົນ**

- ເຂົ້າຮ່ວມຂະບວນການແຂ່ງຂັນກິລາທີ່ທາງ 3 ອົງການຈັດຕັ້ງ ຈັດຂຶ້ນເພື່ອສະເຫຼີມສະຫຼອງວັນສຳຄັນຕ່າງໆ ເຊັ່ນ: ວັນແມ່ຍິງລາວ,...
- ເຂົ້າຮ່ວມກອງປະຊຸມເຜີຍແຜ່ກົດໝາຍວ່າດ້ວຍກຳມະບານລາວ (ສະບັບປັບປຸງ) ທີ່ຫ້ອງປະຊຸມ ກະຊວງສາທາ ວຽກງານ 3 ອົງການຈັດຕັ້ງມະຫາຊົນ
- ເຂົ້າຮ່ວມການເປີດປົ້ມແຂ່ງຂັນ 5 ເປັນເຈົ້າ ຂອງກຳມະບານ ທີ່ຫ້ອງປະຊຸມໃຫຍ່ ມວສ.
- ກອງປະຊຸມເຜີຍແຜ່ຄັ້ງທຳອິດຂອງຄະນະກຳມາທິການເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ເດັກທີ່ກະຊວງສາທາລະນະສຸກ.
- ພິທີສະເຫຼີມສະຫຼອງວັນແມ່ຍິງສາກົນຄົບຮອບ 108 ປີ (08/03/1910-08/03/2018)
- ຟັງປາຖະກະຖາວັນສຳຄັນຄ່າງໆ ເຊັ່ນ ວັນກຳມະກອນສາກົນຄົບຮອບ 132 ປີ, ວັນແມ່ຍິງສາກົນຄົບຮອບ 108 ປີ, ວັນແພດລາວ, ວັນຄູແຫ່ງຊາດຄົບຮອບ 24 ປີ.

**2.1.3.ໂຄງການສົ່ງເສີມການບໍລິຈາກເລືອດ ແລະ ອຸປະກອນຕ່າງໆ**

- ພະນັກງານເຂົ້າຮ່ວມການສະເຫຼີມສະຫຼອງວັນຄູແຫ່ງຊາດ ທີ 07 ຕຸລາ ໃນທຸກໆປີ.
- ຄສສ ໄດ້ຈັດກິດຈະກຳນອກຫຼັກສູດເຊັ່ນ: ການບໍລິຈາກເຄື່ອງໃຫ້ແກ່ສັງຄົມ ແລະ ສົ່ງເສີມນັກສຶກສາເຂົ້າຮ່ວມການບໍລິຈາກເລືອດ ປະຈຳປີ. ລະດົມພະນັກງານ ແລະ ນັກສຶກສາເຂົ້າຮ່ວມການບໍລິຈາກເລືອດ.
- ເຂົ້າຮ່ວມຂະບວນກິດຈະກຳຕ່າງ ເຊັ່ນ: ການອອກແຮງງານອະນາໄມ, ການຍ່າງເພື່ອສຸຂະພາບ ເນື່ອງໃນຕ້ອນຮັບວັນສຳຄັນຕ່າງໆ ຕາມແຈ້ງການທີ່ທາງ ມວສ ກໍຄື ກະຊວງສາທາລະນະສຸກ ແລະ ຂັ້ນເທິງວາງອອກ.
- ໄດ້ໄປຢ້ຽມຢາມພະນັກງານເກີດລູກ, ພະນັກງານເຈັບປ່ວຍ ແລະ ອື່ນໆ
- ປະກອບສ່ວນບໍລິຈາກວັດຖຸ ແລະ ບໍລິຈາກເລືອດເພື່ອນຳໄປຊ່ວຍຄົນເຈັບຍ້ອນໄພພິບັດນ້ຳຖ້ວມໃຫ້ແຂວງຄຳມ່ວນ ແລະ ແຂວງອັດຕະປື.
- ປະກອບສ່ວນບໍລິຈາກວັດຖຸ ພ້ອມດ້ວຍການກວດຮ່າງກາຍໃຫ້ແກ່ໂຮງຮຽນ ປະຖົມນາຊັດ, ເມືອງ ຫີນເຫີບ, ແຂວງ ວຽງຈັນ.

## 3ແຜນງານ .ພັດທະນາການຮຽນ-ການສອນ

ຄະນະສາທາລະນະສຸກສາດ ມີອາຈານ, ພະນັກງານ ແລະ ນັກສຶກສາຂອງຄະນະ ໄດ້ເຮັດໜ້າທີ່ການເມືອງ ທີ່ຖືກ ມອບໝາຍເປັນ ຢ່າງດີເປັນຕົ້ນແມ່ນວຽກງານ ການຮຽນ-ການສອນ ເຊິ່ງການສິດສອນແມ່ນໄດ້ສອນນັກສຶກສາພາຍໃນຄະນະທັງ ມະຫາວິທະຍາໄລເອງ ແລະ ຄະນະວິຊາອື່ນໆໃນມວສ,ເຊັ່ນ: ຄະນະແພດສາດ, ທັນຕະແພດສາດ, ເພສັຊສາດ, ພະຍາບານ, ເຕັກນິກການແພດ ແລະ ຄະນະ ວິທະຍາສາດພື້ນຖານ ນອກນັ້ນ ຍັງໄດ້ປະກອບສ່ວນ ວຽກງານບໍລິການຢູ່ໂຮງໝໍ ເຊັ່ນ: ໂຮງໝໍສູນກາງ, ໂຮງໝໍແຂວງ, ໂຮງໝໍເມືອງ, ສຸກສາລາ ແລະ ໄດ້ສຸມໃສ່ ວຽກງານ ຄົ້ນຄ້ວາວິທະຍາສາດ ແລະ ວຽກງານຝຶກອົບຮົມວິຊາສະເພາະ.

ຄະນະສາທາລະນະສຸກສາດ ໄດ້ຈັດຕັ້ງປະຕິທິນ ການຮຽນ-ການສອນ ໄປຕາມ ປະຕິທິນ ການສຶກສາ ຂອງ ມວສ ແລະ ເກັບກຳ ຊົ່ວໂມງສອນ ແລະ ຂຶ້ນແຜນງົບປະມານ ການສິດສອນ ໃຫ້ ອາຈານ. ນອກຈາກນັ້ນ, ກໍ ຍັງຈັດການສອບເສັງຈົບຊັ້ນປະຈຳປີ ໂດຍ ການປ້ອງກັນບົດວິທະຍານິພົນ ແລະ ການສອບເສັງ ຈົບຊັ້ນ ຂອງ ນັກສຶກສາ ປໂທ ສາທາລະນະສຸກສາດ ທັງ 3 ສາຂາ. ຄະນະ ໄດ້ຈັດພິທີສະຫລຸບ ແລະ ມອບໃບປະກາສະນີຍະບັດປະຈຳປີ ໃຫ້ແກ່ ນັກສຶກສາ ປໂທ ທີ່ຈົບແຕ່ລະສົກສຶກສາ.

- ເຂົ້າຮ່ວມການສິດສອນ ແລະ ການອົບຮົມວິຊາສຸຂະພາບໂລກ (Global Health) ກ່ອນລົງພາກສະໜາມ ທີ່ສະຖາບັນກາ ໂລລິນສະກາ ປະເທດສະວິເດັນ.
- ເຂົ້າຮ່ວມກອງປະຊຸມໃນຫົວຂໍ້ "Finalize the joint MPH Program "ປະເທດວຽດນາມ.
- ໄປທັດສະນະສຶກສາ ແລະ ແລກປ່ຽນບົດຮຽນການບໍລິຫານການ ຈັດຕັ້ງການຮຽນ-ການສອນ ຢູ່ໂຮງໝໍຣາມາທິບໍດີ ຄະນະແພດສາດ ມະຫາວິທະຍາໄລ ມະຫິດົນ ປະເທດໄທ.
- ເຂົ້າຮ່ວມກອງປະຊຸມວິຊາການ Public Health, Pediatric update, ແລະ Obstetric 6 ຄັ້ງ.
- ເຂົ້າຮ່ວມຟັງການແລກປ່ຽນບົດຮຽນ ແລະ ນຳສະເໜີສະພາບການ ເຮສໄອວີ ແລະ ລະບົບສາທາລະນະສຸກ ໃນ ສປປລາວ ໃນການມາທັດສະນະສຶກສາຈາກມະຫາວິທະຍາໄລຂອນແກ່ນ ປະເທດໄທ ທີ່ສູນຕ້ານເອດ.
- ຈັດຕັ້ງປະຕິບັດໂຄງການ ອີຢູ ຮ່ວມກັບ ສະຖາບັນສາທາລະນະສຸກສາດ ເຊິ່ງມີກິດຈະກຳ ທຶນຮຽນປະລິນຍາເອກ, ປະລິນຍາໂທ ຮ່ວມກັບ ມະຫາວິທະຍາໄລຮ່າໂນຍ, ຫວຽດນາມ, ທຶນສຳລັບຄົ້ນຄ້ວາ, ປັບປຸງຫ້ອງສະມຸດ ມວສ ແລະ ເຂົ້າຮ່ວມກອງ ປະຊຸມສາກົນ.
- ເຂົ້າຮ່ວມກອງປະຊຸມວິຊາການເລື່ອງການຈັດຕັ້ງການຮຽນ-ການສອນ ແລະ ເຂົ້າຮ່ວມສຳມະນາເລື່ອງ International Institute for Medical Education Leadership ຢູ່ມະຫາວິທະຍາໄລການກາລີ ປະເທດການາດາ.
- ໄປແລກປ່ຽນບົດຮຽນໃນການສ້າງຫຼັກສູດປະລິນຍາຕີສາທາລະນະສຸກສາດທີ່ມະຫາວິທະຍາໄລມະຫິດົນ ປະເທດໄທ.
- ເຂົ້າຮ່ວມກອງປະຊຸມຮັບຟັງການເຜີຍແຜ່ດຳລັດວ່າດ້ວຍຕຳແໜ່ງວິຊາການຄູຢູ່ສະຖານການສຶກສາຊັ້ນສູງ ເລກທີ 03/ ລບ ລົງວັນທີ 10 ມັງກອນ 2020 ທີ່ຫ້ອງປະຊຸມອຳພີ.

### 3.1.1. ໂຄງການຮັບເອົານັກສຶກສາ

- ຈັດຕັ້ງປະຕິບັດໃນການສອບເສັງຄັດເລືອກນັກສຶກສາເຂົ້າຮຽນໃນແຕ່ລະສາຂາຫຼັກສູດທີ່ກຳນົດໄວ້;
- ຈັດກອງປະຊຸມຕັດສິນຄະແນນຜົນການສອບເສັງຂອງນັກສຶກສາໃໝ່ ແລະ ຂໍອະນຸມັດຂໍ້ຕົກລົງຮັບນັກສຶກສາເຂົ້າຮຽນຂອງແຕ່ລະຫຼັກສູດໃນແຕ່ລະສົກສຶກສາ;
- ຄສສ ຮັບນັກສຶກສາເຂົ້າຮຽນແຕ່ລະປີໃນແຕ່ລະສາຂາວິຊາຢ່າງລະອຽດດັ່ງລຸ່ມນີ້:

ຕາຕະລາງ 1: ຈຳນວນ ນັກສຶກສາ ຫຼັກສູດປະລິນຍາໂທ ສາທາລະນະສຸກສາດ

| | ສາຂາ | 2016 | 2017 | 2018 | 2019 | 2020 |
|---|---|---|---|---|---|---|
| | **ອະນຸປະລິນຍາ ສາທາລະນະສຸກ** | | | **70** | 70 | |
| | ຫຼັກສູດປະລິນຍາໂທ ສາທາລະນະສຸກສາດ ສາຂາ | 19 | 22 | 22 | | |

| | | | | | | |
|---|---|---|---|---|---|---|
| | ບໍລິຫານສາທາລະນະສຸກ | | | | 18 | 17 |
| | ຫຼັກສູດປະລິນຍາໂທ ສາທາລະນະສຸກສາດ ສາຂາ ລະບາດວິທະຍາ | | 8 | 7 | 8 | 6 |
| | ຫຼັກສູດປະລິນຍາໂທ ສາທາລະນະສຸກສາດ ສາຂາ ໂພຊະນາການ | | 8 | 6 | 8 | 6 |
| | ຫຼັກສູດປະລິນຍາໂທ ສາທາລະນະສຸກສາດ ສາຂາ ບໍລິຫານສາທາລະນະສຸກ ສາຍພາສາລາວ | | 10 | 10 | | 7 |
| | ລວມ | 19 | 48 | 115 | 104 | 36 |

**3.1.2. ໂຄງການຈັດຕັ້ງການຮຽນ-ການສອນ**

- ຈັດກອງປະຊຸມປະຖົມນິເທດນັກສຶກສາ ຫຼັງປະລິນຍາຕີ ສາທາລະນະສຸກສາດ ເຊັ່ນ ຫລັກສູດປະລິນຍາໂທ ສາທາລະນະສຸກສາດໄລຍະເວລາຮຽນ 2 ປີ, ຮຽນເຕັມເວລາ, ມີ 49 ໜ່ວຍກິດ.
- ຫລັກສູດອະນຸປະລິນຍາ ສາທາລະນະສຸກ, ໄລຍະເວລາຮຽນ 3 ປີ, ຮຽນເຕັມເວລາ, ມີ 112 ໜ່ວຍກິດ, ຈັດຕັ້ງປະຕິບັດແຕ່ປີ 2017-2019.
- ຫລັກສູດປະລິນຍາໂທສາທາລະນະສຸກ ສາຂາ ໂພຊະນາການ ໄລຍະເວລາຮຽນ 2 ປີ, ຮຽນເຕັມເວລາ, ມີ 45 ໜ່ວຍກິດ
- ຫລັກສູດປະລິນຍາໂທສາທາລະນະສຸກ ສາຂາ ລະບາດວິທະຍາ ໄລຍະເວລາຮຽນ 2 ປີ, ຮຽນເຕັມເວລາ, ມີ 47 ໜ່ວຍກິດ
- ຫລັກສູດປະລິນຍາໂທສາທາລະນະສຸກສາດໄລຍະເວລາຮຽນ 2 ປີ, ຮ່ວມກັບ Hanoi University of Public Health, Vietnam, ຊຶ່ງ ປີທີ່ 1 ຮຽນຢູ່ ມວສ ແລະ ປີທີ່ 2 ຮຽນ ຢູ່ ຫວຽດນາມ.
- ຈັດຕາຕະລາງການຮຽນ-ການສອນ, ການຂຶ້ນຫ້ອງສອນຂອງນັກສຶກສາ ແລະ ຄູອາຈານ, ປະເມີນນັກສຶກສາແຕ່ລະໂມດູນ ທັງ ແບບ Formative and Summative Assessment ແຕ່ລະຫຼັກສູດ; ສັງລວມຄະແນນ ແລະ ຊົ່ວໂມງສອນຂອງອາຈານສອນໃນແຕ່ລະລາຍວິຊາ;
- ນໍາພານັກສຶກສາປະລິນຍາໂທ ສາທາລະນະສຸກສາດ 4 ສາຂາ ລົງພາກສະໜາມ ໃນນະຄອນຫຼວງ ແລະ ຕ່າງແຂວງ;
- ນໍາພານັກສຶກສາອະນຸປະລິນຍາລົງພາກປະຕິບັດຕົວຈິງໃນການກວດສອບຄຸນນະພາບນໍ້າ ແລະ ອາຫານ ໃນຊຸມຊົນ, ໂຮງຮຽນ, ໂຮງງານ
- ນໍາພານັກສຶກສາອະນຸປະລິນຍາລົງໃຫ້ສຸຂະສຶກສາອະນາໄມສິ່ງແວດລ້ອມໂຮງຮຽນ ແລະ ອະນາໄມສ່ວນບຸກຄົນ
- ນໍາພານັກສຶກສາປະຕິບັດຕົວຈິງໃນວຽກງານຊຸມຊົນເປັນເຈົ້າການດ້ານສຸຂະອະນາໄມ
- ຈັດພິທີມອບ-ຮັບ ປະກາສະນິຍະບັດໃຫ້ຜູ້ສໍາເລັດການສຶກສາໃນແຕ່ລະສົກສຶກສາແຕ່ປີ 2016-2020, ຊຶ່ງມີ ນັກສຶກສາ ຈົບທັງໝົດ 250 ທ່ານ.
- ສໍາມະນາຖອດຖອນບົດຮຽນ ການຮຽນ-ການສອນ ແລະ ຈັດຕັ້ງປະຕິບັດ ແລະ ຈັດປະຖົມນິເທດກ່ຽວກັບການລົງພາກສະໜາມຂອງນັກສຶກສາ ທັງ 4 ສາຂາ ແຕ່ລະສົກສຶກສາ;

**3.1.3. ໂຄງການພັດທະນາຖານຂໍ້ມູນຂ່າວສານ ແລະ ຫ້ອງສະໝຸດ**

- ສ້າງ Website ເຜີຍແຜ່ຂ່າວສານ, ຂໍ້ກໍານົດ, ນິຕິກໍາ, ລະບຽບການປະເມີນຜົນການສອບເສັງ;
- ຂຶ້ນທະບຽນເຊົ່າ port ແລະ ຄຸ້ມຄອງຮັກສາ ເວັບໄຊ ຂອງຄະນະສາທາລະນະສຸກສາດ;
- ສ້າງຖານຂໍ້ມູນກ່ຽວກັບນັກສຶກສາ ແລະ ອະດີດນັກສຶກສາທີ່ສໍາເລັດໄປແລ້ວແຕ່ລະລຸ້ນ.
- ຈັດການອົບຮົມກ່ຽວກັບ E-Library ໂດຍອາຈານຈາກ ມະຫາວິທະຍາໄລ ທໍາມະສາດ ປະເທດໄທ ມາອົບຮົມ ໃຫ້ແຕ່ລະພາກສ່ວນຂອງ ມວສ.
- ເຮັດຖານຂໍ້ມູນຫ້ອງສະມຸດສິ່ງອໍານວຍຄວາມສະດວກໃຫ້ແກ່ການຮຽນ-ການສອນ ແລະ ປັບປຸງຫ້ອງສະມຸດຂອງຄະນະເພື່ອໃຫ້ເປັນຫ້ອງສະມຸດດີຈິຕອລ ຫຼື ເອເລັກໂຕຼນິກ ພາຍໃຕ້ໂຄງການ LEARN

- ປື້ມເຂົ້າຫ້ອງສະມຸດຂອງຄະນະສາທາລະນະສຸກສາດ ພາຍໃຕ້ໂຄງການ LEARN

**3.1.4. ໂຄງການສ້າງ ສະມາຄົມ ສາທາລະນະສຸກສາດ**

- ສ້າງສະມາຄົມ ສາທາລະນະສຸກສາດ ເພື່ອສ້າງເຄືອຄ່າຍ ຂອງນັກສາທາລະນະສຸກ ລວມທັງຜູ້ປະກອບການຕ່າງໆທີ່ເຮັດວຽກກ່ຽວຂ້ອງກັບສາທາລະນະສຸກທົ່ວປະເທດ.
- ໂຄສະນາຜ່ານສື່ອອນລາຍ ເພື່ອຂົນຂວາຍເອົານັກວິຊາການສາທາລະນະສຸກ ແລະ ສາຂາວິຊາອື່ນໆມາເປັນສະມາຊິກສະມາຄົມ.
- ຈັດກອງປະຊຸມແລກປ່ຽນວິຊາການສາທາລະນະສຸກຄັ້ງທີ 1 ໃນປີ 2020;

## 4. ແຜນງານພັດທະນາຫຼັກສູດ

**4.1.1. ໂຄງການທົບທວນຫຼັກສູດ**

- ທົບທວນປັບປຸງເນື້ອໃນຫຼັກສູດປະລິນຍາໂທສາທາລະນະສຸກສາດ ສາຂາ ບໍລິຫານສາທາລະນະສຸກສາດ.
- ອົບຮົມເພື່ອດັດແກ້ເນື້ອຫາລາຍລະອຽດຂອງວິຊາ ເພື່ອຂໍອະນຸມັດຈາກກະຊວງສຶກສາທິການ ແລະ ກິລາ.
- ເຂົ້າຮ່ວມກອງປະຊຸມປັບປຸງມາດຕະຖານຫຼັກສູດແຫ່ງຊາດ ລະດັບລິງເລິກຂະແໜງວິຊາ ລະດັບຊ່ຽວຊານຂັ້ນ 1 ແລະ ລະດັບຊ່ຽວຊານຂັ້ນ 2 ທີ່ແຂວງວຽງຈັນ.

**4.1.2. ໂຄງການສ້າງຫຼັກສູດໃຫມ່**

- ແຕ່ງຕັ້ງຄະນະກໍາມະການສ້າງຫລັກສູດ ປະລິນຍາໂທສາທາລະນະສຸກສາດ ສາຂາ ລະບາດວິທະຍາ, ໂພຊະນາການ, ສຸຂະພາບຄອບຄົວ, ອະນາໄມສິ່ງແວດລ້ອມ ແລະ ອາຊີວະອະນາໄມ ແລະ ຫລັກສູດປະລິນຍາເອກສາທາລະນະສຸກສາດ;
- ໄດ້ຮັບອະນຸມັດສ້າງຫລັກສູດ ປະລິນຍາໂທສາທາລະນະສຸກສາດ ສາຂາ ລະບາດວິທະຍາ, ໂພຊະນາການ, ສຸຂະພາບຄອບຄົວ, ອະນາໄມສິ່ງແວດລ້ອມ ແລະ ອາຊີວະອະນາໄມ ຈາກ ກະຊວງສຶກສາທິການ.

**4.1.3. ໂຄງການສ້າງຫຼັກສູດອົບຮົມໄລຍະສັ້ນ**

- ພັດທະນາຫລັກສູດອົບຮົມໄລຍະສັ້ນກ່ຽວກັບ ບໍລິຫານສາທາລະນະສຸກລະດັບໂຮງໝໍເມືອງ;

**4.1.4. ໂຄງການສ້າງຄູ່ມືການຮຽນ-ການສອນ ແລະ ຕໍາລາຮຽນ**

- ແຕ່ງຕັ້ງຄະນະກໍາມະການຮັບຜິດຊອບຂຽນ, ກວດແກ້ປື້ມຄູ່ມືການຮຽນ-ການສອນ ແລະ ຕໍາລາຮຽນ ສາຂາ ບໍລິຫານສາທາລະນະສຸກ, ບໍລິຫານໂຮງໝໍ, ຊີວະສະຖິຕິ, ວິທີວິທະຍາການຄົ້ນຄ້ວາ; ສຸຂະສຶກສາ, ພຶດຕິກາຮັກສາສຸຂະພາບ, ການປະເມີນຜົນກະທົບສິ່ງແວດລ້ອມຕໍ່ສຸຂະພາບ.
- ສ້າງຄູ່ມືກົດລະບຽບຂອງນັກສຶກສາລະດັບຫຼັງປະລິນຍາຕີ 01 ເຫລັ້ມ, ແລະ ຈັດພິມຈໍານວນ 150 ເຫລັ້ມ
- ສ້າງປື້ມຕິດຕາມການຮຽນໃຫ້ນັກສຶກສາແຕ່ລະສາຂາ 01 ເຫລັ້ມ, ແລະ ຈັດພິມຈໍານວນ 100 ເຫລັ້ມ
- ພັດທະນາ 8 ໂມດູນ ວິຊາ ສາທາລະນະສຸກສາດ ສໍາລັບ ຫຼັກສູດ Joint MPH program with the Hanoi University of Public Health, Vietnam.
- ຂຽນປື້ມຮຽນວິຊາ ລະບາດວິທະຍາ, Survival Analysis, Logistic Regression
- ຂຽນປື້ມຄູ່ມືສໍາລັບຝຶກອົບຮົມໃຫ້ແກ່ຄູຂອງນັກຮຽນມັດທະຍົມສົມບູນເພຍວັດ, ເຈົ້າອານຸວົງ, ໄຊເຊດຖາ ແລະ ຈັນສະຫວ່າງໃນຫົວຂໍ້ "ການອົບຮົມແກ່ເດັກຍິງກ່ຽວກັບການຮັກສາສຸຂະພາບແບບເຊື່ອມສານ ແລະ ການເສີມສ້າງຄວາມເຂັ້ມແຂງທາງດ້ານສຸຂະພາບໃຫ້ແກ່ເດັກຍິງ ໃນ ສປປ ລາວ"
- ທົບທວນຄືນຄູ່ມືແນະນໍາການຂຽນບົດວິທະຍານິພົນ ຂອງນັກສຶກສາ ປະລິນຍາໂທ ສາທາລະນະສຸກສາດ.
- ພັດທະນາປື້ມບົດຄວາມ ຫລື Proceeding of Manuscripts ຂອງ ນັກສຶກສາ ປະລິນຍາໂທ 03 ສາຂາ ພາສາລາວ ແລະ ຫຼັກສູດ

## 5. ແຜນງານ ພັດທະນາຄູອາຈານ

### 5.1.1. ໂຄງການການພັດທະນາທັກສະການສອນແບບໃໝ່

- ພະນັກງານຄູອາຈານ ໄດ້ເຂົ້າຮ່ວມຝຶກອົບຮົມຄູວິທະຍາທັງໝົດ 18 ທ່ານ.
- ພະນັກງານ ຄະນະສາທາລະນະສຸກ ໄດ້ຮັບການອົບຮົມກ່ຽວກັບ ຂີດຄວາມສາມາດທາງດ້ານສາທາລະນະສຸກ (Public Health Competency) 5 ທ່ານ.
- ອາຈານ 2 ທ່ານ ໄດ້ໄປຍົກລະດັບ ດ້ານພາສັງອັງກິດ ຢູ່ College of English Vientiane Center.

### 5.1.2. ໂຄງການຍົກລະດັບວິຊາສະເພາະທາງດ້ານວິຊາການ

- ສົ່ງພະນັກງານທີ່ມີລະດັບວິຊາສະເພາະຂັ້ນປະລິນຍາຕີ ເພື່ອໄປຮຽນຕໍ່ລະດັບປະລິນຍາໂທ ສາທາລະນະສຸກ 5 ທ່ານ.
- ສົ່ງພະນັກງານທີ່ມີລະດັບວິຊາສະເພາະຂັ້ອະນຸປະລິນຍາໂທ ເພື່ອໄປຮຽນຕໍ່ລະດັບປະລິນຍາເອກ 3 ທ່ານ.

### 5.1.3. ໂຄງການຈັດຕັ້ງປະຕິບັດການອົບຮົມແບບຕໍ່ເນື່ອງ

- ອົບຮົມຫົວຂໍ້ບໍລິຫານໂຮງໝໍ, ຫົວຂໍ້ການບໍລິຫານຊັບພະຍາກອນມະນຸດ, ຫົວຂໍ້ເສດຖະສາດ-ການເງິນ ວຽກງານສາທາລະນະສຸກ, ຫົວຂໍ້ ການພັດທະນາການຂະຫຍາຍຕາໜ່າງວຽກງານຮັກສາສຸຂະພາບຂັ້ນຕົ້ນ ແລະ ອົບຮົມຫົວຂໍ້ການວິເຄາະນະໂຍບາຍສຸຂະພາບ.
- ອົບຮົມກ່ຽວກັບໂພຊະນາການດ້ານຄຼີນິກ, ໂພຊະນາການບຳບັດ ແລະ ໂພຊະນາກ່ຽວກັບສຸຂະພາບໄວໜຸ່ມ.
- ສຳມະນາທັກສະການນຳໃຊ້ໂປຼແກມຕ່າງໆ ເຊັ່ນ ສະຕາຕ້າ, ເອສພີເອສໆ, ອຣາ ... ໃນການວິເຄາະຂໍ້ມູນແບບປະລິມານ ແລະ ສຳມະນາທັກສະ ແລະ ການປະຕິບັດຕົວຈິງໃນການວິເຄາະຂໍ້ມູນແບບຄຸນນະພາບ
- ສຳມະນາທັກສະການໃຫ້ຄຳປຶກສາແກ່ນັກສຶກສາໃນການເຮັດບົດວິທະຍານິພົນ ໂດຍການແລກປ່ຽນບົດຮຽນລະຫວ່າງຄູອາຈານຜູ້ໜຸ່ມນ້ອຍ ແລະ ຜູ້ມີຄຸນນະວຸດ
- ອັບຮົມກ່ຽວກັບການປ່ຽນແປງສະພາບດິນຟ້າອາກາດ, ກ່ຽວກັບສຸຂະອະນາໄມ ແລະ ການປ່ຽນແປງສະພາບດິນຟ້າອາກາດ.
- ເຂົ້າຮ່ວມອົບຮົມຄູຝຶກດ້ານບອບບາງ ແລະ ການປັບຕົວລະບົບຂໍ້ມູນຂ່າວສານທາງທາງພູມສາດ ແລະ ການສ້າງແບບຈຳລອງຂອງວຽກງານການປ່ຽນແປງດິນຟ້າອາກາດຕໍ່ສຸຂະພາບ ທີ່ດອນຈັນພາເລດ.
- ຈັດການອົບຮົມກ່ຽວກັບ ການຮັກສາສຸຂະພາບແບບເຊື່ອມສານ ແລະ ການເສີມສ້າງຄວາມເຂັ້ມແຂງທາງ ດ້ານສຸຂະພາບໃຫ້ແກ່ເດັກຍິງ ໃນ ສປປ ລາວ ແລະ ລົງກວດເລືອດໃຫ້ນັກຮຽນມັດທະຍົມສົມບູນເພຍວັດ, ເຈົ້າອານຸວົງ, ໄຊເຊດຖາ ແລະ ຈັນສະຫວ່າງ ຈຳນວນ 210 ຄົນ.
- ເຂົ້າຮ່ວມກອງປະຊຸມປະກອບຄຳຄິດເຫັນໃສ່ຮ່າງຂໍ້ຕົກລົງວ່າດ້ວຍການຄຸ້ມຄອງສຸຂະພິບານອາຫານ ຢູ່ໃນຮ້ານອາຫານ, ສູນຂາຍອາຫານ ແລະ ຫໍອາຫານ.
- ເຂົ້າຮ່ວມກອງປະຊຸມຝຶກອົບຮົມໃຫ້ຄູຝຶກກ່ຽວກັບທັກສະການສື່ສານລະຫວ່າງທ່ານໝໍຜູ້ໃຫ້ບໍລິການ ແລະ ຄົນເຈັບໂດຍການຮ່ວມມືລະຫວ່າງມະຫາວິທະຍາໄລ ວິທະຍາສາດ ສຸຂະພາບ ແລະ ມະຫາວິທະຍາໄລ ເມວເບີນ ປະເທດອົດສະຕາລີ ຈຸດປະສົງແມ່ນເພື່ອປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດນະໂຍບາຍ 5 ດີ 1 ພໍໃຈ ຂອງກະຊວງສາທາລະນະສຸກໃຫ້ມີປະສິດທິພາບເພີ່ມຫຼາຍຂຶ້ນກວ່າເກົ່າ ທີ່ຫ້ອງປະຊຸມຄະນະເພສັຊສາດ.
- ເຂົ້າຮ່ວມກອງປະຊຸມແລກປ່ຽນກ່ຽວກັບການເຮັດວຽກວິໄຈ ຢູ່ມະຫາສາລາຄາມ ປະເທດໄທ, ເດືອນ 01/2017.
- ເຂົ້າຮ່ວມຖອດຖອນບົດຮຽນກ່ຽວກັບຫຼັກສູດແພດຊ່ຽວຊານເວດຊສາດຄອບຄົວ ທີ່ຄະນະແພດ,ມະຫາວິທະ ຍາໄລຊຽງໃໝ່.
- ເຂົ້າຮ່ວມການອົບຮົມການກວດສອບຄຸນນະພາບນ້ຳ ຢູ່ທ່າລາດ ແຂວງວຽງຈັນ
- ເຂົ້າຮ່ວມກອງປະຊຸມ HIA ຢູ່ເຫວ້ ປະເທດວຽດນາມ ແລະ ບາງກອກ ແລະ ໄດ້ພັດທະນາຫຼັກສູດ HIA Course ແລະ ແປໂມດູນ HIA ເພື່ອສິດສອນ ຄູອາຈານ ຢູ່ ມວສ ແລະ 4 ມະຫາວິທະຍາໄລທົ່ວປະເທດ ຈຳນວນ 4 ຄັ້ງ.
- ເຂົ້າຮ່ວມປະຊຸມປຶກສາຫາລືກ່ຽວກັບການຈັດຕັ້ງການອົບຮົມ HIA Course ທີ່ປະເທດ ຫວຽດນາມ ແລະ ມຽນມາ.
- ຈັດຕັ້ງການອົບຮົມ HIA Course ໃຫ້ແກ່ ພະນັກງານ ມວສ ແລະ ມຊ ຈານວນ 25 ທ່ານ

- ເຂົ້າຮ່ວມກອງປະຊຸມວິຊາການຕ່າງໆ ພາຍໃນປະເທດ ຫລາຍກວ່າ 20 ຄັ້ງ ເຊັ່ນ Antimicrobial Resistance or AMR, Health Care system in Kenya,..Screening to identify to adolescent at risk of contracting STD;
- ເຂົ້າຮ່ວມກອງປະຊຸມປະຈໍາປີດ້ານວິຊາການວຽກງານສັກຢາກັນ ພະຍາດປະຈໍາພາກພື້ນປາຊີຟິກຕາເວັນ ຕົກ ທີ່ມະນີລາ ປະເທດຟີລິບປິນ.
- ເຂົ້າຮ່ວມກອງປະຊຸມການເຜີຍແຜ່ຍຸດທະສາດແຫ່ງຊາດດ້ານການປັບຕົວຂອງຂະແໜງການສາທາລະນະສຸກ ຕໍ່ ກັບການປ່ຽນແປງດິນຟ້າອາກາດ ແລະ ແຜນການ 05 ປີ ຢູ່ພາຍໃນ ແລະ ຕ່າງປະເທດຈໍານວນ 02 ຄັ້ງ.
- ເຂົ້າຮ່ວມກອງປະຊຸມວິຊາການເລື່ອງ "Health Care Advantage " ຢູ່ ປະທດອິນເດຍ.
- ເຂົາຮ່ວມກອງປະຊຸມ ວິຊາການເລື່ອງ ຄວາມຄ້ອງການຂໍ້ມູນກ່ຽວກັບສຸຂະພາບທາງເພດ ເພື່ອຕິດຕາມ ຕົວຊີ້ ວັດ ແລະ ສົມທ-ຍກັບບັນດາປະເທດໃນທົ່ວໂລກ ຢູ່ ປະເທດ ຍີ່ປຸ່ນ.
- ພະນັກງານເຂົ້າຮ່ວມການອົບຮົມທາງດ້ານການຄຸ້ມຄອງບໍລິຫານສາທາລະນະສຸກແລະນະໂຍບາຍສາທາລະນະ ສຸກ ຢູ່ປະເທດໄທ
- ເຂົ້າຮ່ວມການອົບຮົມ Motivation interwieving in Health Promotion among NCD patients ຢູ່ ປະເທດໄທ
- ເຂົ້າຮ່ວມກອງປະຊຸມແລກປ່ຽນຫຼັກສູດ ປ.ໂທ ແລະ ປ.ຕີ ສິ່ງແວດລ້ອມ ຢູ່ ມະຫາວິທະຍາໄລ ມະຫາສາລະຄາມ ແລະ ມະຫາວິທະຍາໄລ ທໍາມະສາດ ປະເທດໄທ.
- ເຂົ້າຮ່ວມອົບຮົມກ່ຽວກັບນະໂຍບາຍສາທາລະນະສຸກ ຢູ່ ມະຫາວິທະຍາໄລ ມະຫາສາລະຄາມ.
- ເຂົ້າຮ່ວມອົບຮົມກ່ຽວກັບສະຖິຕິ ຢູ່ ຄະນະສາທາລະນະສຸກສາດ ແລະ ມະຫາວິທະຍາໄລ ຂອນແກ່ນ.
- ເຂົ້າຮ່ວມອົບຮົມກ່ຽວກັບການທົບທວນເອກກະສານ "Meta-Analysis" ຢູ່ ຄະນະສາທາລະນະສຸກສາດ, ມະຫາວິທະຍາໄລ ຂອນແກ່ນ.
- ເຂົ້າຮ່ວມອົບຮົມກ່ຽວກັບການບໍລິຫານໂຮງໝໍ ແລະ ເສດຖະສາດສາທາລະນະສຸກ ແລະ ການເງິນສາທາລະນະສຸກ ຢູ່ ມະຫາວິທະຍາໄລ ມະຫິດົນ ປະເທດໄທ.
- ເຂົ້າຮ່ວມອົບຮົມກ່ຽວກັບອະນາໄມສິ່ງແວດລ້ອມ ແລະ ອາຊີວະອະນາໄມ ຢູ່ ມະຫາວິທະຍາໄລ ອຸບົນລາດ ຊະທານີ ປະເທດໄທ.
- ຈັດອົບຮົມກ່ຽວກັບການປະເມີນໂມດູນການຮຽນການສອນແບບຮູບຮົກໂດຍມີອາຈານຈາກມະຫາວິທະຍາໄລ ຮາໂນຍ ແລະ ອຈ ຈາກ ມວສ ແລະ ສະຖາບັນ LaoTPHI.

## 6. ແຜນງານ ພັດທະນາດ້ານໂຄງລ່າງພື້ນຖານ, ອຸປະກອນ ແລະ ສິ່ງອໍານວຍຄວາມສະດວກ

### 6.1.1. ໂຄງການກໍ່ສ້າງພື້ນຖານໂຄງລ່າງ

- ຂື້ນແຜນງົບປະມານລັດຖະບານ ເພື່ອອອກແບບປຸກສ້າງ-ສ້ອມແປງ ພື້ນຖານໂຄງລ່າງຕຶກອາຄານ ຄະນະສາທາລະນະສຸກສາດ, ມະຫາວິທະຍາໄລ ວິທະຍາສາດສຸຂະພາບ ຢູ່ວິທະຍາເຂດ ດົງໂພສີ ໃຫ້ສໍາເລັດຕາມຄາດໝາຍ.
- ຂື້ນແຜນງົບປະມານໃນການສ້ອມແປງອາຄານສະຖານທີ່, ຫ້ອງຄະນະບໍດີ, ພາກວິຊາ ແລະ ຫ້ອງການບໍລິຫານ ແລະ ຫ້ອງຮຽນ.

### 6.1.2. ໂຄງການສ້າງຫ້ອງປະຕິບັດການດ້ານ ໂພຊະນາການ

- ສະໜອງອຸປະກອນເຄື່ອງທົດລອງປະກອບເປັນຕົວຢ່າງໃນການຮຽນ-ການສອນ ດ້ານໂພຊະນາການບໍາບັດ ແລະ ການວັດແທກຮ່າງກາຍ, ແລັບທອບ ແລະ ໂປຣແກຼມ Immucal ແລະ ແບບຈໍາລອງອາຫານ (Food Model), ແລະ ອຸປະກອນຕ່າງໆ ໃນການຮຽນການສອນ.
- ບໍາລຸງຮັກສາ ຫ້ອງປະຕິບັດການດ້ານໂພຊະນາການບໍາບັດ ແລະ ການວັດແທກຮ່າງກາຍ.

**6.1.3. ໂຄງການສ້າງຫ້ອງປະຕິບັດການດ້ານ ອະນາໄມສິ່ງແວດລ້ອມ ແລະ ອາຊີວະອະນາໄມ**

- ຈັດຊື້ອຸປະກອນກວດສອບຄຸນະພາບນໍ້າ, ອາຫານ, ອາກາດ, ເຄື່ອງວັດແທກສຽງ, ແສງ ແລະ ຝຸ່ນ ປະກອບເຂົ້າໃນການຮຽນ-ການສອນ.
- ບໍາລຸງຮັກສາ ຫ້ອງປະຕິບັດການດ້ານອະນາໄມສິ່ງແວດລ້ອມ ແລະ ອາຊີວະອະນາໄມ.

## 7. ແຜນງານສົ່ງເສີມການຄົ້ນຄ້ວາວິທະຍາສາດ ແລະ ການໃຫ້ບໍລິການວິຊາການ

ຄະນະສາທາລະນະສຸກສາດຖືເອົາວຽກງານການຄົ້ນຄ້ວາເປັນສໍາຄັນຫຼາຍ ເນື່ອງຈາກມີການຄົ້ນຄ້ວາຈຶ່ງ ມີການ ພັດທະນາ, ໄດ້ສົ່ງເສີມສະໜັບສະໜູນໃຫ້ພະນັກງານຄູອາຈານ ແລະ ນັກສຶກສາເຮັດບົດຄົ້ນຄ້ວາວິທະຍາສາດ ໃນຫົວຂໍ້ຕ່າງໆທັງນໍາໃຊ້ເປັນບົດວິທະຍານິພົນຈົບຊັ້ນ ລະດັບປໍໂທ ໃນປີ 2016-2020 ປະມານ 98 ບົດ ແລະ ບົດໂຄງການຈົບຊັ້ນ ຂອງອະນຸປະລິນຍາ 24 ບົດ.

ບົດວິທະຍານິພົນ ແລະ ບົດໂຄງການຈົບຊັ້ນແມ່ນນໍາເອົາໄປສະເໜີໃນກອງປະຊຸມວິທະຍາສາດຕ່າງໆ ທັງ ຢູ່ພາຍໃນປະເທດ ແລະ ຕ່າງປະເທດ 1-2 ຄັ້ງ ແລະ ມີພະນັກງານຄູອາຈານ ແລະ ນັກສຶກສາໄປຮ່ວມຫຼາຍກວ່າ 100 ຄົນ ເຂົ້າຮ່ວມກອງປະຊຸມບັນດາສະຖາບັນການສຶກສາ ສາທາ ລະນະສຸກບັນດາປະເທດລຸ່ມແມ່ນນໍາຂອງ GMS.

**7.1.1. ໂຄງການຄົ້ນຄວ້າວິທະຍາສາດດ້ານສາທາລະນະສຸກ**

- ຈັດກອງປະຊຸມໃນຫົວຂໍ້ Regional Symposium on the History of Medicine and Health Care in South Asia ຢູ່ ສປປ ລາວ ໃນເດືອນ 1/2018 ໃຫ້ ມວສ.
- ເຂົ້າຮ່ວມກອງປະຊຸມສາກົນກ່ຽວກັບ ການຄົ້ນຄ້ວາ ເຊັ່ນ International Health Literacy Conference, SDG, ກອງປະຊຸມສຸຂະພາບຈະເລີນພັນ ຢູ່ພາກພື້ນ ອາຊີ ປາຊີຟິກ, ກອງປະຊຸມສາທາລະນະສຸກ ລຸ່ມແມ່ນໍາ້ຂອງ , ກອງປະຊຸມ ສາທາລະນະສຸກ ຂອງ ຍູໂຣບ ລວມທັງໝົດ 12 ຄັ້ງ.
- ໂຄງການສຸຂະພາບ ຂອງເດັກຍິງໃນໂຮງຮຽນມັດທະຍົມ, ນະຄອນຫຼວງວຽງຈັນ, ສະໜັບສະໜູນ ໂດຍ ອົງການ KOHFI.
- ໂຄງການ ພະຍາດເບົາຫວານ ແລະ ການດູແລຕົວເອງ ທີ່ໂຮງໝໍເຊດຖາທິລາດ, ສະໜັບສະໜູນ ໂດຍ ອົງການ KOHFI.
- ໂຄງການຄົ້ນຄ້ວາກ່ຽວກັບ ສັກຢາກັນພະຍາດ ໃນແມ່ຍິງໄວຈະເລີນພັນ
- ໂຄງການ PCV ໃນ ໂຮງໝໍສູນກາງ
- ໂຄງການກ່ຽວກັບ ວິຖີຊີວິດທາງເພດ ຂອງ ສາວເຊັຍເບັຍ ກັບ IRD
- ໂຄງການ Health risk behaviors ໃນເນັກຮຽນມັດທະຍົມ
- ຄວາມຮັບຮູ້ ແລະ ພຶດຕິກໍາດູແລຕົນເອງຂອງຄົນເຈັບຄວາມດັນເລືອດສູງ ສໍາລັບ ປ້ອງກັນອາການສິນເສັ້ນເລືອດ ໃນ ສະໝອງຕີບຕັນ ຫລື ແຕກ (Stroke)
- ພະນັກງານແພດໝໍຂະແໜງແມ່ ແລະ ເດັກ ໃນໂຮງໝໍສູນກາງ, ໂຮງໝໍແຂວງ ແລະ ເມືອງ ໃຫ້ສຸຂະສຶກສາ ກ່ຽວກັບ ໂພຊະນາການຂອງແມ່ ແລະ ຂອງເດັກ ພຽງພໍ ແລ້ວບໍ່?: ການສຶກສາແບບສັງເກດ (Observational Study)
- ການປັບປຸງແນວທາງການໃຫ້ສຸຂະສຶກສາ ໄລຍະແມ່ຫຼັງເກີດລູກ ເພື່ອຊ່ວຍປ້ອງກັນການຄະລໍາ ອາຫານ ແລະ ຫຼຸດຜ່ອນການປະຕິບັດຮີດຄອງປະເພນີທີ່ເປັນອັນຕະລາຍຕໍ່ສຸຂະພາບຂອງແມ່ ແລະ ລູກ: ການສຶກ ສາແບບເຄິ່ງທົດລອງ ສໍາລັບແມ່ທີ່ເກີດລູກຢູ່ ໂຮງໝໍສູນກາງ, ນະຄອນຫຼວງວຽງຈັນ, ສປປ ລາວ.
- ສຶກສາຄົ້ນຄ້ວາກ່ຽວກັບບັນດາປັດໄຈທີ່ກ່ຽວຂ້ອງກັບພາວະຂາດສານອາຫານແບບຊໍາເຮື້ອ ຂອງເດັກນ້ອຍອາຍຸ 6-12 ປີ ຢູ່ເມືອງຈໍາປາສັກແຂວງຈໍາປາສັກ.
- ຈັດຕັ້ງການຄົ້ນຄ້ວາ ກ່ຽວກັບສາວເຊຍເບັຽ ຮ່ວມມກັບ ອົງການ IRD
- ສໍາເລັດການຄົ້ນຄ້ວາໄລຍະທີ1 ກ່ຽວກັບ ການຮັກສາສຸຂະພາບແບບເຊື່ອມສານ ແລະ ການເສີມສ້າງ ຄວາມເຂັ້ມແຂງທາງດ້ານສຸຂະພາບໃຫ້ແກ່ເດັກຍິງ ໃນ ສປປ ລາວ ຮ່ວມກັບມະຫາວິທະຍາໄລ ອິວາ

- ດຳເນີນ 4 ໂຄງການຄົ້ນຄ້ວາໃນວຽກງານສຸຂະພາບຈະເລີນພັນ ແລະ ປະກັນສຸຂະພາບ ສະໜັບສະໜູນ ໂດຍ ໂຄງການເລີນ.
- ດຳເນີນການຄົ້ນຄ້ວາຮ່ວມ ກັບ LaoTPHI ໃນຫົວຂໍ້ "CareChild Project"
- ດຳເນີນການຄົ້ນຄ້ວາວິໄຈຮ່ວມກັບສູນລະບາດວິທຍາ (NCLE) ກ່ຽວກັບ ເຊື້ອພະຍາດຕ້ານທານຕໍ່ຢາຕ້ານເຊື້ອ
- ຈັດກອງປະຊຸມ ປຶກສາຫາລື ກ່ຽວກັບ ການໃຫ້ບໍລິການສຸຂະພາບຈະເລີນພັນທີ່ເປັນມິດໃຫ້ແກ່ໄວໜຸ່ມ

**7.1.2. ໂຄງການເຜີຍແຜ່ ແລະ ຕີພິມ**

- ຕີພິມບົດຄວາມ ໃນວາລະສານ ສາກົນ Global Health Action ແລະ ເຮົາໄດ້ເຮັດ Policy Brief on SRH for Adolescent ທີ່ຮ່ວມກັບ LEARN/MCNV.
- ຄູ ອາຈານ ພະນັກງານ ແລະ ນັກສຶກສາ ໄດ້ຕີພິມບົດຄວາມຄົ້ນຄ້ວາ ເຂົ້າໃນວາລະສານສາກົນ ທັງໝົດ 24 ບົດ.
- ເຂົ້າຮ່ວມກອງປະຊຸມ ລະບາດວິທະຍາ ທົ່ວປະເທດ ຂອງ ກະຊວງສາທາລະນະສຸກ
- ເຂົາຮ່ວມ ກອງປະຊຸມ Adolescent Research Day- Adolescent Nutrition ເພື່ອເຜີຍແຜ່ບົດຄົ້ນຄ້ວາ.
- ເຂົ້າຮ່ວມ ກອງປະຊຸມ 11th National Health Forum ຂອງ ສະຖາບັນສາທາລະນະສຸກສາດ ເພື່ອເຜີຍແຜ່ບົດ ຄົ້ນຄ້ວາ.
- ເຂົ້າຮ່ວມກອງປະຊຸມຂອງນັກຄົ້ນຄ້ວາສະຖາບັນຄົ້ນຄ້ວາເພື່ອການພັດທະນາ ທີ່ສະຖາບັນຝຣັ່ງ.
- ເຂົ້າຮ່ວມສຳມະນາໃນຫົວຂໍ້ກ່ຽວກັບການຂຽນ ແລະ ການພິມເຜີຍແຜ່ບົດຄົ້ນຄ້ວາ (Writing original article for publication) ໂດຍອາຈານ ແລະ ຊ່ຽວຊານຄະນະແພດສາດຈາກມະ ຫາວິທະຍາໄລແຫ່ງຊາດ ເຊອູນ ສ.ເກົາຫຼີ ທີ່ ຫ້ອງປະຊຸມຝຶກອົບຮົມ.
- ສູນຄົ້ນຄ້ວາ ເຂົ້າຮ່ວມກອງປະຊຸມວິຊາການແຫ່ງຊາດດ້ານໂພຊະນາການ 1st National Nutrition Symposium ເພື່ອຮັບຟັງ ແລະ ແລກປ່ຽນບົດຮຽນທີ່ພົ້ນເດັ່ນໃນການແກ້ໄຂບັນຫາໂພຊະນາການທີ່ຕິດພັນກັບ ຫຼາຍຂະແໜງການ ສາທາລະນະສຸກ, ສຶກສາ, ກະສິກຳ, ການຮ່ວມມືປະສານງານດ້ານໂພຊະນາການ ແລະ ອື່ນໆ ໃນ ພາກພື້ນ ແລະ ສປປ ລາວ ທັງລະດັບສູນກາງ ແລະ ທ້ອງຖິ່ນ ທີ່ສູນ ICTC.
- ເຂົ້າຮ່ວມກອງປະຊຸມກ່ຽວກັບຍຸດທະສາດດ້ານການປັບຕົວຂອງຂະແໜງການສາທາລະນະສຸກຕໍ່ກັບການປ່ຽນແປງ ດິນຟ້າອາກາດ ທີ່ຮ້ານອາຫານ ລຸ້ງໂລດ.
- ຈັດກອງປະຊຸມໂຄສະນາກ່ຽວກັບ ຜົນກະທົບຂອງການປ່ຽນແປງດິນຟ້າອາກາດ ຕໍ່ສຸຂະພາບຈະເລີນພັນ.
- ຈັດກອງປະຊຸມໂຄສະນາກ່ຽວກັບ ເພດສຶກສາແບບຄົບຖ້ວນ ກັບ ກະຊວງສຶກສາທິການ
- ເຂົ້າຮ່ວມກອງປະຊຸມສະຫຼຸບ ແລະ ເຜີຍແຜ່ການເຮັດທົບທວນການຕາຍຂອງແມ່ທີ່ໄດ້ຜ່ານການເກັບຂໍ້ມູນມາແລ້ວໃນ ປີ 2014-2016 ການຈັດຕັ້ງປະຕິບັດວຽກງານດູແລກ່ອນເກີດ/ຫຼັງເກີດ, ການຈັດຕັ້ງປະຕິບັດການດູແລພາວະສຸກ ເສີນດ້ານການເກີດລູກ ແລະ ການລຸລູກທີ່ປອດໄພ ທີ່ໂຮງແຮມ ດອນຈັນພຣາເລດ.
- ເຂົ້າຮ່ວມກອງປະຊຸມ The 12th National Health Forum ຂອງສະຖາບັນສາທາລະນະສຸກສາດ.
- ກອງປະຊຸມປຶກສາຫາລືເພື່ອກຳນົດວິທີທາງໃນການຮວມເອົາແຜນການຄົ້ນຄ້ວາກ່ຽວກັບໄວໜຸ່ມເຂົ້າໃນແຜນ ງານການ ຄົ້ນຄ້ວາສາທາລະນະສຸກແຫ່ງຊາດ ຂອງ ສປປ ລາວ ແລະ ຊອກຫາວິທີທີ່ມີປະສິດທິພາບເພື່ອສົ່ ງເສີມການນຳໃຊ້ ແຜນງານການຄົ້ນຄ້ວາກ່ຽວກັບໄວໜຸ່ມແນໃສ່ສ້າງຄວາມເຂັ້ມແຂງໃຫ້ແກ່ການສ້າງຂໍ້ມູນທີ່ເປັນຫລັກຖານພິສູດທີ່ ກ່ຽວຂ້ອງກັບປະເດັນສຸຂະພາບໄວໜຸ່ມ ແລະ ການພັດທະນາ ທີ່ຫ້ອງປະຊຸມຂອງ ສະຖາບັນສາທາລະນະສຸກສາດ ແລະ ການແພດເຂດຮ້ອນ.
- ເຂົ້າຮ່ວມ ປະຊຸມໃນຫົວຂໍ້ "The ICPD+25 Revitalising and Implementing the ICPD Asia Pacific Region" ທີ່ Kualalumpur Malaysia.
- ເຂົ້າຮ່ວມກອງປະຊຸມກະກຽມບົດສະເໜີຜົນຂອງການຄົ້ນຄ້ວາວິທະຍາສາດສາທາລະນະສຸກປະຈຳປີ 2018 ທີ່ໂຮງ ແຮມດອນຈັນພຣາເລດ.

- ກອງປະຊຸມທົບທວນວຽກງານແມ່ ແລະ ເດັກ ສັກຢາກັນພະຍາດ 06 ເດືອນຕົ້ນປີ 2018 ທີ່ທ່າລາດ ແຂວງວຽງຈັນ.
- ເຂົ້າຮ່ວມນຳສະເໜີການຄົ້ນຄ້ວາ ຢູ່ກອງປະຊຸມວິທະຍາສາດ ລະຫວ່າງ ມວສ ແລະ ມະຫາວິທະຍາໄລ ຣາຊະພັດ ນະຄອນຣາຊສີມາ ປະເທດໄທ.
- ເຂົ້າຮ່ວມກອງ ປະຊຸມທີ່ຊຽງໃໝ່ ປະເທດໄທ, ໃນຫົວຂໍ້ "The 3rd SEA-HATIC Advisory Board Meeting and Training Workshops" 3 ຄັ້ງ.
- ເຂົ້າຮ່ວມກອງປະຊຸມສະໄໝພິເສດກ່ຽວກັບການທົດສອບຄວາມສົມບູນທາງກາຍຍະພາບອາຊຽນ ຄັ້ງທີ 02 ທີ່ ບາງກອກປະເທດໄທ.
- ເຂົ້າຮ່ວມກອງປະຊຸມ "The 2nd National and International Conference on Health Challenges in Sustainable Development Goals (SDGs): Universal Health Coverage" which will beheldon 23-24 July 2018 at Kosa Hotel, Khon Kaen, Thailand.
- ເຂົ້າຮ່ວມກອງປະຊຸມວິຊາການ "The 31th Euro Global Summit and Expo on vaccines & Vaccination" Vaccination accessibility for women of child-braring age middle countries in Southeast Asia ທີ່ບາເຊໂລນາ, ປະເທດແອັດສະປາຍ.
- ເຂົ້າຮ່ວມກອງປະຊຸມ Regional Government CSO and Multi-Stakeholder Policy Dialogue on Comprehensive Sexuality Education (CSE) ທີ່ບາງກອກ ປະເທດໄທ.
- ເຂົ້າຮ່ວມກອງປະຊຸມໃນຫົວຂໍ້ "2018 International Conference on SDGS and Grobal Health" ທີ່ປະເທດ ສສ ເກົາຫຼີ.
- ເຂົ້າຮ່ວມກອງປະຊຸມ "The 12th Thailand Congress of Nutrition (TCN2018)" ທີ່ບາງກອກ ປະເທດໄທ.
- ເຂົ້າຮ່ວມກອງປະຊຸມ "The 10th International Conference on Public Health Among Greater Mekong Sub-region Countries Health Eguity and response to Crisis" 2-3 November 2018 Kunming Medical University, Kunming, China.
- ເຂົ້າຮ່ວມກອງປະຊຸມ "Planning meeting for Project of Research on Birth Defects and Related Prevention Strategies in Several Countries"
- ເຂົ້າຮ່ວມກອງປະຊຸມ ຄັ້ງທີ 10th ສາທາລະນະສຸກສາດຂອງບັນດາປະເທດລຸ່ມແມ່ນ້ຳຂອງ ທີ ມະຫາວິທະຍາໄລ ແພດຄຸນໝິງ, ສປ ຈີນ
- ແລກປ່ຽນບົດຮຽນໃນການຂຽນບົດຄວາມ ແລະ ເຮັດການຄົ້ນຄ້ວາວິໄຈຮ່ວມ ກັບມະຫາວິທະ ຍາໄລ Virjie, Amsterdam, Netherland.
- ຈັດກອງປະຊຸມເຜີຍແຜ່ຜົນການຄົ້ນຄ້ວາກ່ຽວກັບ "ໂຄງການສ້າງຄວາມເຂັ້ມແຂງເດັກຍິງກ່ຽວກັບການຮັກສາ ສຸຂະພາບແບບເຊື່ອມສານ ແລະ ການເສີມສ້າງຄວາມເຂັ້ມແຂງທາງດ້ານສຸຂະພາບໃຫ້ແກ່ເດັກຍິງໃນສປປ ລາວ" ຢູ່ ໂຮງແຮມ ລາວ ປລາຊາ ໃນວັນທີ່ 27/12/2019.
- ຈັດກອງປະຊຸມ ສາທາລະນະສຸກ ຄັ້ງທີ 11 ລະຫວ່າງປະເທດ ລຸ່ມແມ່ນຳ້ຂອງ ໃນວັນທີ່ 17-18/10/2019
- ເຂົ້າຮ່ວມກອງ 13th National Health Forum ແລະ ກອງປະຊຸມສຸຂະພາບໄວຈະເລີນພັນ ຄັ້ງທີ 4 ຂອງສະ ຖາບັນສາທາລະນະສຸກສາດ.
- ເຂົ້າຮ່ວມນຳສະເໜີການຄົ້ນຄ້ວາຢູ່ກອງປະຊຸມວິທະຍາສາດ ລະຫວ່າງ ມວສ ແລະ ມະຫາວິທະຍາໄລ ຣາຊະພັດ ນະຄອນຣາຊສີມາ ປະເທດໄທ.
- ເຂົ້າຮ່ວມກອງປະຊຸມ " The 3rd National and International Conference on Health Challenges in Sustainable Development Goals (SDGs):MP2.5, Cancer and Suicide " which was held in 23-24 July 2019 at Kosa Hotel, Khon Kaen, Thailand.
- ເຂົ້າຮ່ວມກອງປະຊຸມ Asia Pacific Conference on Public Health ຢູ່ ຄັ້ງທີ 51 ທີ່ ມະຫາວິທະຍາໄລ ມະຫິດົນ ປະເທດໄທ.

**7.1.3. ໂຄງການບໍລິການວິຊາການແກ່ສັງຄົມ**

- ລົງໃຫ້ສຸຂະສຶກສາກ່ຽວກັບການສັກຢາກັນພະຍາດໃນແມ່ຍິງໄວຈະເລີນພັນໃນ 05 ບ້ານເມືອງໄຊເຊດຖາ, ນະຄອນຄອນຫລວງ ແລະ 05 ບ້ານໃນເມືອງໂພນໂຮງ ແຂວງວຽງຈັນເປັນເວລາ 05 ເດືອນ, ຈາກນັ້ນ ກໍໄດ້ປະເມີນຄືນບ້ານທີ່ໃຫ້ສຸຂະສຶກສາໃນ 02 ແຂວງ, ເກັບຂໍ້ມູນອີກ 02 ເມືອງຄື ເມືອງແກ້ວອຸດົມ ແລະ ເມືອງສີສັດຕະນາກ ນະຄອນຫລວງວຽງຈັນ.

## 8. ແຜນງານລະບົບປະກັນຄຸນນະພາບພາຍໃນ ແລະ ພາຍນອກ

**7.1.1. ໂຄງການສ້າງລະບົບປະກັນຄຸນນະພາບພາຍໃນ**

- ເຂົ້າຮ່ວມອົບຮົມວຽກງານປະກັນຄຸນນະພາບການສຶກສາຫາລະນະສຸກທີ່ກະຊວງສາທາລະນະສຸກ.
- ວິຊາການ ແລະ ສູນອົບຮົມເຂົ້າຮ່ວມກອງປະຊຸມຜ່ານຄູ່ມືການປະເມີນຕົນເອງ (SAR)ໃນສະຖານການສຶກສາສາທາລະນະສຸກ ແລະ ວາງແຜນການຈັດຕັ້ງວຽກງານການປະກັນຄຸນນະພາບການສຶກສາໃນຕໍ່ໜ້າ ທີ່ແຂວງວຽງຈັນ.
- ເຂົ້າຮ່ວມ ກອງປະຊຸມປັບປຸງຄູ່ມືມາດຕະຖານການປະກັນຄຸນນະພາບຂອງສະຖານການສຶກສາ ສາທາລະນະສຸກ ໃນລະດັບການສຶກສາຊັ້ນສູງ ແລະ ສ້າງບົດແນະນຳກ່ຽວກັບການຈັດຕັ້ງປະຕິບັດຂໍ້ຕົກລົງວ່າ ດ້ວຍການປະກັນ ຄຸນນະພາບສະ ຖານການສຶກສາສາທາລະນະສຸກ ໃນ ສປປ ລາວ
- ເຂົ້າຮ່ວມ ອົບຮົມວຽກງານການປະກັນຄຸນນະພາບການສຶກສາ ສາທາລະນະສຸກ ທີ່ ແຂວງວຽງຈັນ.

A. ດ້ານງົບປະມານ

1. ສັງລວມດ້ານງົບປະມານ

| ລດ | ແຜນງານ | ງົບປະມານ | | | | | |
|---|---|---|---|---|---|---|---|
| | | ປີ1 | ປີ2 | ປີ3 | ປີ4 | ປີ5 | ລວມມູນຄ່າ LAK |
| | | 2016 | 2017 | 2018 | 2019 | 2020 | |
| 1 | ແຜນງານ ບໍລິຫານ ແລະ ການຄຸ້ມຄອງ | 38,250,000 | 473,585,000 | 649,285,000 | 256,044,00 | 398,533,000 | 1,815,699,000 |
| 2 | ແຜນງານ ການຄຸ້ມຄອງ ແລະ ສົ່ງເສີມກິດຈະກໍານັກສຶກສາ | 0 | 0 | 0 | 0 | 0 | 0 |
| 3 | ແຜນງານພັດທະນາການຮຽນ-ການສອນ | 2,441,279,000 | 5,764,061,000 | 4,508,938,000 | 2,187,449,000 | 1,309,127,000 | 16,210,854,000 |
| 4 | ແຜນງານພັດທະນາຫຼັກສູດ | 36,387,000 | 294,565,000 | 282,159,000 | 194,490,000 | 19,372,000 | 826,973,000 |
| 5 | ແຜນງານ ພັດທະນາຄູອາຈານ ແລະ ພະນັກງານ | 260,242,000 | 130,000,000 | 172,690,000 | 344,474,000 | 267,237,000 | 1,174,644,000 |
| 6 | ແຜນງານ ພັດທະນາດ້ານໂຄງລ່າງພື້ນຖານ, ອຸປະກອນ ແລະ ສິ່ງອໍານວຍຄວາມສະດວກ | | | | 15,250,000 | 23,918,000 | 39,168,000 |
| 7 | ແຜນງານການຄົ້ນຄ້ວາວິທະຍາສາດ ແລະ ການໃຫ້ບໍລິການວິຊາການ | 77,520,000 | 84,200,000 | 183,920,000 | 550,087,000 | 29,587,000 | 925,315,000 |
| 8 | ແຜນງານ ປະກັນຄຸນນະພາບ | | | | 18,393,000 | | 18,393,000 |
| | **ລວມທັງໝົດ** | **2,853,678,000** | **6,746,411,000** | **5,796,992,000** | **3,566,188,000** | **2,047,777,000** | **21,011,049,000** |

2. ລາຍລະອຽດງົບປະມານ ປີ 2016-2020

| ລ/ດ | ໂຄງການ | 2016 | | 2017 | | 2018 | | 2019 | | 2020 | |
|---|---|---|---|---|---|---|---|---|---|---|---|
| | | ແຜນ | ປະຕິບັດ | ແຜນ | ປະຕິບັດ | ແຜນ | ປະຕິບັດ | ແຜນ | ປະຕິບັດ | ແຜນ | ປະຕິບັດ |
| 1 | **ແຜນງານການບໍລິຫານ ແລະ ຄຸ້ມຄອງ** | | | | | | | | | | |
| | ອົບຮົມກ່ຽວກັບວິທີການຂື້ນແຜນງົບປະມານໂຄງການ ພາຍໃນ ແລະ ສາກົນ ໃຫ້ພະນັກງານຄະນະສາທາລະນະສຸກສາດ | | | | | | | 18,850,000 | 18,850,000 | | |
| | ຊື້ເຄື່ອງໃຊ້ຫ້ອງການ | 8,250 | 8,250 | 250 | 250 | 300 | 300 | 158,964 | 158,964 | 126,947 | 126,947 |
| | ອຸປະກອນຮັບໃຊ້ການຮຽນ-ການສອນ | 30 | 30 | 223,585 | 223,585 | 300 | 300 | 49,560 | 49,560 | 185,725 | 185,725 |
| | ຕັດເຄື່ອງແບບໃຫ້ພະນັກງານ | | | | | 49,285 | 49,285 | 47,520 | 47,520 | 49,285 | 49,285 |
| | ຊື້ອຸປະກອນໂພຊະນາການ | | | | | | | | | 36,575 | 36,575 |
| 2 | **ແຜນງານຄຸ້ມຄອງ ແລະ ສົ່ງເສີມກິດຈະກຳນັກສຶກສາ** | | | | | | | | | | |
| 3 | **ແຜນງານພັດທະນາການຮຽນ-ການສອນ** | | | | | | | | | | |

| | | | | | | | | | | | |
|---|---|---|---|---|---|---|---|---|---|---|---|
| | ຈັ້ດຕັ້ງປະຕິບັດຫລັກສູດແພດ ເວຊສາດຄອບຄົວ | 354,030 | 354,030 | 360 | 360 | 399,701 | 399,701 | | | | |
| | ຈັດຕັ້ງປະຕິບັດຫລັກສູດ Internat | 659,288 | 659,288 | 630, | 630 | 197,784 | 197,784 | | | | |
| | ຈັດຕັ້ງປະຕິບັດຫລັກສູດ ປະລິນຍາໂທ ສາທາລະນະສຸກ | 152,900 | 152,900 | 921,520 | 921,520 | 655,050 | 655,050 | 576,575 | 576,575 | 289,800 | 289,800 |
| | ຈັດຕັ້ງປະຕິບັດຫລັກສູດ ປະລິນຍາໂທ ສາຍພາກສາ ອັງກິດ | | | | | | | | | 573,232 | 573,232 |
| | ຈັດຕັ້ງປະຕິບັດຫລັກສູດແພດ ຊ່ຽວຊານຂັ້ນ 1 (08 ສາຂາ) | 857,615 | 857,615 | | | | | | | | |
| | ຈັດຕັ້ງປະຕິບັດລົງພາກສະໜາມຂອງນັກສຶກສາປະລິນຍາໂທ ສາທາລະນະສຸກລຸ້ນທີ 10 | 26,250 | 26,250 | | | | | | | | |
| | ຈັດປະຖົມນິເທດໃຫ້ແກ່ ນັກສຶກສາ ປະລິນຍາໂທ, ແພດ ຊ່ຽວຊານຂັ້ນ 1 ແລະ Internat | 4,020 | 4,020 | | | | | | | | |
| | ສອບເສັງເຂົ້າຮຽນຂອງນັກສຶກສາປະລິນຍາໂທ ແລະ ແພດ ຊ່ຽວຊານຂັ້ນ 1 ແພດເວຊສາດ ຄອບຄົວ ແລະ ແອງແຕກນາ | 13,026 | 13,026 | | | | | | | | |

| | | | | | | | | | | | |
|---|---|---|---|---|---|---|---|---|---|---|---|
| | ຈັດຕັ້ງປະຕິບັດຫລັກສູດ ປະລິນຍາໂທສາທາລະນະສຸກ ສາຂາ ໂພຊະນາການ | | | 85,770 | 85,770 | | | | | | |
| | ຈັດຕັ້ງປະຕິບັດຫລັກສູດແພດ ຊ່ຽວຊານ ຂັ້ນ 1 (08 ສາຂາ) ສໍາລັບປີທີ 01 | | | 874,220 | 874,220 | 824,419 | 824,419 | | | | |
| | ຈັດຕັ້ງປະຕິບັດຫລັກສູດແພດ ຊ່ຽວຊານ ຂັ້ນ 1 (08 ສາຂາ) ສໍາລັບປີທີ 02 | | | 899,945 | 899,945 | 823,805 | 823,805 | | | | |
| | ຈັດຕັ້ງປະຕິບັດຫລັກສູດແພດ ຊ່ຽວຊານ ຂັ້ນ 1 (08 ສາຂາ) ສໍາລັບປີທີ 03 | | | 1,149,316 | 1,149,316 | 969,410 | 969,410 | | | | |
| | ຈັດຕັ້ງປະຕິບັດການລົງພາກສະ ໜາມ ໃນຫລັກສູດປະລິນຍາ ໂທສາທາລະນະສຸກສາດ ລຸ້ນທີ 11 | | | 75 | 75 | | | 75 | 75 | 62 | 62,880 |
| | ແປປຶ້ມຮຽນສໍາລັບຫລັກສູດ ປະລິນຍາໂທ ແລະ ແພດ ຊ່ຽວຊານ | | | 147,825 | 147,825 | | | | | | |
| | ປ້ອງກັນບົດຈົບຊັ້ນຂອງນັກສຶກ ສາປະລິນຍາໂທສາທາລະນະ ສຸກສາດ ແລະ ແພດຊ່ຽວຊານ | | | 25 | 25 | | | | | | |

| | | | | | | | | | | | |
|---|---|---|---|---|---|---|---|---|---|---|---|
| | ໂຄງການສ້າງຮ່າງພາລະບົດບາດຂອງອາຈານທີ່ປຶກສາລະດັບຫລັງປະລິນຍາຕີ ແລະ ໂຄງຮ່າງການຂຽນບົດວິທະຍານິພົນຂອງນັກສຶກສາຫລັງປະລິນຍາຕີ | | | 36,700 | 36,700 | | | | | | |
| | ກອງປະຊຸມຖອດຖອນບົດຮຽນຂອງແພດຊ່ຽວຊານສາຂາເວດຊສາດຄອບຄົວ | | | 50 | 50 | | | | | | |
| | ນໍາພານັກສຶກສາລົງພາກປະຕິບັດຕົວຈິງກ່ຽວກັບການປ້ອງກັນອັນຕະລາຍຂອງກໍາມະກອນທີ່ເຮັດວຽກຢູ່ໂຮງງານຕັດຫຍິບໃນຂອບເຂດນະຄອນຫລວງ | | | | | | | 21,771 | 21,771 | | |
| | ນໍາພານັກສຶກສາລົງພາກປະຕິບັດຕົວຈິງກ່ຽວກັບໂຄງການສໍາຫຼວດສານປົນເປື້ອນໃນອາຫານທີ່ວາງຂາຍຢູ່ໃນຕະຫຼາດຂົວດິນເມືອງສີສັດຕະນາກນະຄອນຫລວງ | | | | | | | 13,317 | 13,317 | | |
| | ນໍາພານັກສຶກສາລົງພາກປະຕິບັດຕົວຈິງໃນການກວດຄຸນນະພາບນໍ້າ ບ້ານດ່ານສະຫວັນ ເມືອງແກ້ວອຸດົມແຂວງວຽງຈັນ | | | | | | | 18,986 | 18,986 | | |

| | | | | | | | | | | | |
|---|---|---|---|---|---|---|---|---|---|---|---|
| | ນຳພານັກສຶກສາລົງພາກປະຕິບັດຕົວຈິງກ່ຽວກັບພາວະໂພຊະນາການດ້ານອະນາໄມສ່ວນບຸກຄົນຂອງເດັກ ຢູ່ໂຮງຮຽນປະຖົມສົມບູນ ແຂວງວຽງຈັນ | | | | | | | 19,395 | 19,395 | | |
| | ຜ່ານໂຄງຮ້າງບົດວິທະຍານິພົນຂອງອາຈານຄະນສາທາລະນະສຸກ ທີ່ຮຽນຕໍ່ປະລິນຍາໂທສາຍສຸຂະພາບສາກົນທາງ Online ທີ່ມະຫາວິທະຍາ ພິລິບປິນ (UPOU), ປະເທດພິລິບປິນ ເດືອນ 7/2019 | | | | | | | 34,168 | 34,168 | | |
| | ຂຽນປື້ມຄູ່ມືສຸຂະພາບຈະເລີນພັນ, ການບາດເຈັບ, ເສດຖະສາດສາທາລະນະສຸກ, ຄຸນນະພາບການຄຸ້ມຄອງໂຮງໝໍ, ການຕະຫລາດສັງຄົມ, ການຊອກຫາຂໍ້ມູນ ແລະ ວິທີການນຳສະເໜີ,ຫລັກການໃນການຄຸ້ມຄອງ ແລະ ປ້ອງກັນພະຍາດຊຶມເຊື້ອ | | | | | | | 97,930 | 97,930 | | |
| | ໄປແລກປຽນວິຊາການ ແລະ ຫລັກສູດປະລິນຍາຕີສາທາລະນະສຸກສາດ ຢູ່ ຫຽດນາມ | | | | | | | 32,300 | 32,300 | | |

| | | | | | | | | | | | |
|---|---|---|---|---|---|---|---|---|---|---|---|
| | ເຂົ້າຮ່ວມກອງປະຊຸມກ່ຽວກັບ ການບໍລິຫານໂຮງໝໍ ຢູ່ປະເທດ ສິງກະໂປ | | | | | | | 48,320 | 48,320 | | |
| | ປຶກສາຫາລືກ່ຽວກັບການແລກ ປ່ຽນນັກສຶກສາລົງຝຶກງານຢູ່ ໂຮງງານກ່ຽວກັບພະຍາດທີ່ ເກີດຈາກອາຊີບ ຢູ່ ປະເທດໄທ | | | | | | | 30,400 | 30,400 | | |
| | ເຊີນອາຈານໄທມາສອນນັກສຶກ ສາປະລິນຍາໂທ | | | | | | | 56,700 | 56,700 | | |
| | ສະຫລຸບການຮຽນ-ການສອນ ປີ 2018 | | | | | | | 17,435 | 17,435 | | |
| | ຈ່າຍຄ່າສອນໃຫ້ແກ່ອຈທີ່ ສອງປໂທ | | | | | | | 40,850 | 40,850 | 47,728 | 47,728 |
| | ກອງປະຊຸມຖອດຖອນ ບົດຮຽນ 4ພາກວິຊາ | | | | | | | | | 12,840 | 12,840 |
| | ຈ່າຍຊົ່ວໂມງສອນໃຫ້ແກ່ອຈານ ສອນປະລິນຍາໂທ ສາຍພາສາ ອັງກິດ | | | | | | | | | 45,410 | 45,410 |
| 4 | **ແຜນພັດທະນາຫລັກສູດ** | | | | | | | | | | |
| | ເພື່ອພັດທະນາຫລັກສູດແພດ ຊ່ຽວຊານຂັ້ນ 1 ສາຂາ ພະຍາດ ຫູດັງຄໍ | 36,387 | 36,387 | | | | | | | | |
| | ສ້າງຫລັກສູດປະລິນຍາເອກ ສາທາລະນະສຸກສາດ | | | | | 70,515 | 70,515 | | | | |

| | | | | | | | | | | | |
|---|---|---|---|---|---|---|---|---|---|---|---|
| | ສ້າງຫລັກສູດປະລິນຍາໂທ ສາທາລະນະສຸກສາດສາຂາ ສຸຂະພາບຈະເລີນພັນ | | | | | 70,515 | 70,515 | | | | |
| | ສ້າງຫລັກສູດປະລິນຍາໂທ ສາທາລະນະສຸກສາດສາຂາ ສິງ ແວດລ້ອມ | | | | | 70,614 | 70,614 | | | | |
| | ສ້າງປະລິນຍາຕີສາທາລະນະ ສຸກສາດ (ສາຂາບໍລິຫານ ສາທາລະນະສຸກສາດທົ່ວໄປ, ໂພສະນາການ ແລະ ສິ່ງແວດລ້ອມ) | | | | | 70,515 | 70,515 | | | | |
| | ສ້າງຫລັກສູດປະລິນຍາໂທສາ ຂາ ອາຊີວະ ອະນາໄມ ແລະ ຄວາມປອດໄພສຸຂະພາບ | | | | | | | 29,260 | 29,260 | | |
| | ໄປແລກປ່ຽນບົດຮຽນເພື່ອສ້າງ ຫລັກສູດປຕີຢູ່ຮ່າໂນ້ຍ | | | | | | | 34,140 | 34,140 | | |
| | ປະເມີນຄວາມຕ້ອງການສ້າງ ຫລັກສູດປຕີ | | | | | | | 68,820 | 68,820 | | |
| | ຈ່າຍຄ່າຂຽນ Course Syllavus ປໂທ ແລະ ປເອກ | | | | | | | 62,270 | 62,270 | | |
| | ກອງປະຊຸມຜ່ານຫລັກສູດ ປເອກ | | | | | | | | | 11,902 | 11,902 |
| | ກອງປະຊຸມປຶກສາຫາລືກ່ຽວ ກັບວິຊາສົ່ງເສີມສຸຂະພາບໃຫ້ ຄົນເຈັບທີ່ຕິດຢາເສບຕິດ | | | | | | | | | 7,470 | 7,470 |

| | | | | | | | | | | | |
|---|---|---|---|---|---|---|---|---|---|---|---|
| | ສ້າງຫລັກສູດ ປະລິນຍາຕີ ສາທາລະນະສຸກສາດ | | | 86,196 | 86,196 | | | | | | |
| | ສ້າງຫລັກສູດລົງເລິກຂະແໜງແພດຊ່ຽວຊານຂັ້ນ 2 ລະບົບຫາຍໃຈນຜູ້ໃຫຍ່ | | | 56,224 | 56,224 | | | | | | |
| | ສ້າງຫລັກສູດລົງເລິກຂະແໜງແພດຊ່ຽວຊານຂັ້ນ 2 ສາຂາພະຍາດປະສາດວິທະຍາ | | | 75,461 | 75,461 | | | | | | |
| | ແພດຊ່ຽວຊານຂັ້ນ 2 ໄຂ່ຫລັງເດັກ | | | 76,684 | 76,684 | | | | | | |
| 5 | **ແຜນງານພັດທະນາຄູ-ອາຈານ ແລະ ພະນັກງານ** | | | | | | | | | | |
| | ຝຶກອົບຮົມອາຈານສອນປະລິນຍາໂທ ສາທາລະນະສຸກ ແລະ ຄຣີນິກໃຫ້ແກ່ບັນດາອາຈານຫລັກສູດແພດຊ່ຽວຊານຂັ້ນ 01 | 100,822 | 100,822 | | | | | | | | |
| | ຝຶກອົບຮົມອາຈານສອນປະລິນຍາໂທ Health behavior, Health Promotion, Public Health | 143,460 | 143,460 | | | | | | | | |
| | ອົບຮົມອາຈານຄະນະຫລັງມະຫາວິທະຍາໄລກ່ຽວກັບວິທີຂຽນປື້ມ Logbook | 15,960 | 15,960 | | | | | | | | |

| | | | | | | | | | | | |
|---|---|---|---|---|---|---|---|---|---|---|---|
| | ອົບຮົມກ່ຽວກັບວິທີການເຮັດວຽກເປັນທີມງານ | | | 45 | 45 | | | | | | |
| | ອົບຮົມກ່ຽວກັບການຄຸ້ມຄອງໂຄງການ | | | 45 | 45 | | | | | | |
| | ອົບຮົມກ່ຽວກັບການນໍາໃຊ້ໂປຼແກຣມວິເຄາະຂໍ້ມູນຊີວະສະຖິຕິການແພດ | | | 40 | 40 | | | | | | |
| | ອົບຮົມໄລຍະສັ້ນກ່ຽວກັບ Hospital management | | | | | 48,480 | 48,480 | | | | |
| | ອົບຮົບໄລຍະສັ້ນໃຫ້ແກ່ບັນດາອາຈານ ໄປອົບຮົມວິຊາສິ່ງແວດລ້ອມຢູ່ມະຫາວິທະຍາໄລມະຫິດົນ, ປະເທດໄທ | | | | | 27,250 | 27,250 | | | | |
| | ອົບຮົມກ່ຽວກັບ Healt Policy and management | | | | | 48,480 | 48,480 | | | | |
| | ອົບຮົມກ່ຽວກັບ Health economic and Health financing | | | | | 48,480 | 48,480 | | | | |
| | ຍົກລະດັບພະນັກງານຫລັງມະຫາວິທະຍາໄລ ເພື່ອສຶກສາຕໍ່ລະດັບປະລິນຍາໂທ ສາທາລະນະສຸກສາດ ສາຂາຊີວະອານາໄມ ແລະ ຄວາມປອດໄພ ປະເທດໄທ | | | | | | | 85,850 | 85,850 | 54,500 | 54,500 |

| | | | | | | | | | | | |
|---|---|---|---|---|---|---|---|---|---|---|---|
| | ອົບຮົມກ່ຽວກັບການປະເມີນ ໂມດູນການຮຽນການສອນ ແບບຮູບຮົກ | | | | | | | 18,393 | 18,393 | 29,260 | 29,260 |
| | ອົບຮົມກ່ຽວກັບການຂຽນໂຄງ ຮ່າງການຄົ້ນຄວ້າ ໃຫ້ແກ່ ອາຈານຄະນະສາທາລະນະສຸກ ແລະ ມວສ. | | | | | | | 17,022 | 17,022 | | |
| | ອົບຮົມກ່ຽວກັບການຂຽນປະ ເມີນການປະກັນຄຸນນະພາບ ການສຶກສາສາທາລະນະສຸກ ດ້ວຍຕົນເອງ | | | | | | | 16,323 | 16,323 | | |
| | ສໍາມະນາກ່ຽວກັບການສ້າງ Web Page ຂໍ້ມູນໂຄງຮ້າງ ການຈັດຕັ້ງພາກວິຊາຂອງຄະ ນະສາທາລະນະສຸກສາດ | | | | | | | 26,931, | 26,931 | | |
| | ອົບຮົມກ່ຽວກັບການສົ່ງເສີມ ໂພຊະນາການຊຸມຊົນ ໃຫ້ ອາຈານສອນໃນ ມວສ ແລະ ອ້ອມຂ້າງກະຊວງສາທາລະນະ ສຸກ | | | | | | | 21 | 21 | | |
| | ອົບຮົມກ່ຽວກັບການປະເມີນ ຜົນກະທົບຕໍ່ສຸຂະພາບໃຫ້ຄູອາ ຈານ ຢູ່ ມວສ | | | | | | | 17,734 | 17,734 | | |
| | ອົບຮົມກ່ຽວກັບການວິເຄາະ ສະພາບອົງການຈັດຕັ້ງ (SWOT Analysis) ຢູ່ | | | | | | | 16,323 | 16,323 | | |

| | | | | | | | | | | | |
|---|---|---|---|---|---|---|---|---|---|---|---|
| | ນະຄອນຫລວງ | | | | | | | | | | |
| | ອົບຮົມສະຖິຕິຂັ້ນສູງ | | | | | | | 38,682 | 38,682 | | |
| | ອົບຮົມການນໍາໃຊ້ໂປແກມ | | | | | | | 42,122 | 42,122 | | |
| | ອົບຮົມຄົ້ນຄວ້າແບບຄຸນນະພາບ | | | | | | | 44,092 | 44,092 | | |
| | ອົບຮົມກ່ຽວກັບພາວະຜູ້ນໍາໃຫ້ແກ່ພະນັກງານ ຄສສ ຢູ່ນະຄອນຫລວງ | | | | | | | | | 48,255 | 48,255 |
| | ເຂົ້າອົບຮົມກ່ຽວກັບການຄົ້ນຄ້ວາ Longitudinal Study ແລະ ການວິເຄາະທີ່ເໝາະສົມ | | | | | | | | | 28,080 | 28,080 |
| | ອົບຮົມການເງິນສາທາລະນະສຸກ | | | | | | | | | 6,420 | 6,420 |
| | ຈັດສໍາມະນາມົນລະພິດທາງອາກາດ | | | | | | | | | 6,892 | 6,892 |
| | ຈັດສໍາມະນາກ່ຽວກັບອາຊີວະອະນາໄມໃນໂຮງງານ | | | | | | | | | 7,430 | 7,430 |
| | ອົບຮົມກ່ຽວກັບການສໍາຫລວດຂໍ້ມູນສິ່ງເສີມການບໍລິໂພກເກືອ | | | | | | | | | 22,598 | 22,598 |

| | | | | | | | | | | | |
|---|---|---|---|---|---|---|---|---|---|---|---|
| | ອົບຮົມກ່ຽວກັບການຮັກສາ ສຸຂະພາບເດັກຍິງ ແບບເສື່ອມ ສານ | | | | | | | | | 15,600 | 15,600 |
| | ອົບຮົມກ່ຽວກັບການຮັກສາ ສຸຂະພາບເດັກຍິງ ແບບຢູ່ ໂຮງຮຽນມັດທະຍົມ | | | | | | | | | 9,800 | 9,800 |
| | ອົບຮົມກ່ຽວກັບການລະບາດ ຂອງພະຍາດເສີມຄວາມ ເຂັ້ມແຂງທາງດ້ານວິຊາການ | | | | | | | | | 11,810 | 11,810 |
| | ຈັດອົບຮົມກ່ຽວກັບວິທີປະ ເມີນເຄື່ອງມືໂພຊະນາການ | | | | | | | | | 26,590 | 26,590 |
| 6 | **ແຜນງານພັດທະນາໂຄງລ່າງ ພື້ນຖານ, ອຸປະກອນ ແລະ ສິ່ງ ອຳນວຍຄວາມສະດວກ** | | | | | | | | | | |
| | ຈ່າຍຄ່າປຽນຢາງຕີນລົດຕູ້ ແລະ ຫຸ້ມເບາະລົດ | | | | | | | 15,250 | 15,25 | | |
| | ຂັ້ນຫ້ອງຄະນະບໍດີ ແລະ ຫ້ອງ ໂພຊະນການ | | | | | | | | | 23,918 | 23,918 |
| 7 | **ແຜນພັດທະນາສິ່ງເສີມການ ຄົ້ນຄວ້າວິທະຍາສາດ ແລະ ການໃຫ້ບໍລິການວິຊາການ** | | | | | | | | | | |
| | ເຂົ້າຮ່ວມກອງປະຊຸມ ສາທາລະນະສູກບັນດາປະເທດ ລຸ່ມແມ່ນ້ຳຂອງ | 53,760 | 53,760 | 64,400 | 64,400 | 97,180 | 97,180 | 51,600 | 51,600 | | |

| | | | | | | | | | | | |
|---|---|---|---|---|---|---|---|---|---|---|---|
| | ສຳມະນາດ້ານວິຊາການ Jounal Club evidence Based in Medicine | 23,760 | 23,760 | | | | | | | | |
| | ອົບຮົມກ່ຽວກັບວິທີການ ຄົ້ນຄວ້າແບບ Metaanalysis ແລະ Systematic Review | | | 19,800 | 19,800 | | | | | | |
| | ກອງປະຊຸມສາກົນດ້ານ ສາທາລະນະສຸກສາດດ້ານ ໂພຊະນາການ | | | | | 39,040 | 39,040 | 37,200 | 37,200 | | |
| | ເຂົ້າຮ່ວມກອງປະຊຸມສຸຂະພາບ ໂລກຢູ່ສະວິເດັນ | | | | | 47,700 | 47,700 | | | | |
| | ຈັດກອງປະຊຸມວິຊາການ ສາທາລະນະສຸກສາດ ອາດີດ ນັກສຶກສາປະລິນຍາໂທ ສາທາລະນະສຸກສາດ ຄັ້ງທີ 01 ຂອງຄະນະສາທາລະນະສຸກ ສາດ | | | | | | | 117,510 | 117,510 | | |
| | ເຂົ້າຮວມກອງປະຊຸມ ເອແພັກ ຂອງຄະນະສາທາລະນະສຸກ ສາດ ບັນດາປະເທດປາຊີຟິກ ປະເທດໄທ | | | | | | | 40,654 | 40,654 | | |
| | ເຂົ້າຮ່ວມກອງປະຊຸມ Asain Congress of nutrition 2019 ຄັ້ງທີ 13 ທີ່ປະເທດອິນ ໂດ ໃນວັນທີ 4 -7/8/2019 | | | | | | | 31,620 | 31,620 | | |

| | | | | | | | | | | | |
|---|---|---|---|---|---|---|---|---|---|---|---|
| | ຈັດກອງປະຊຸມວິຊາການ ລະຫວ່າງປະເທດລຸ່ມແມ່ນ້ຳ ຂອງ | | | | | | | 253,110 | 253,110 | | |
| | ສຶກສາຜົນກະທົບຕໍ່ສຸຂະພາບ ໃນການໃຊ້ຢາປາບສັດຕູພືດ | | | | | | | | | 29,587 | 29,587 |
| **8** | **ແຜນງານປະກັນຄຸນນະພາບ ຂອງ ຄສສ** | | | | | | | | | | |
| | ອົບຮົມການປະກັນຄຸນນະພາບ ການສຶກສາໃຫ້ແກ່ ພະນັກງານຄສສ | | | | | | | 18,393 | 18,393 | | |
| | **ລວມທັງໝົດ** | **2,479,529** | **2,479,529,** | **6,237,646** | **6,237,646** | **5,158,223** | **5,158,223** | **2,462,343** | **2,462,343** | **1,770,540** | **1,770,540** |

# ພາກທີ II

# ແຜນຍຸດທະສາດຂອງ ຄະນະສາທາລະນະສຸກສາດ (2021-2025)

## I. ສະພາບລວມ

### *1.1. ສະພາບຂົງເຂດ ແລະ ສາກົນ*

ໃນສັດຕະວັດທີ່ 21 ການປະຕິວັດ ວິທະຍາສາດ ເຕັກໂນໂລຢີໄດ້ຮັບການພັດທະນາແບບກ້າວກະໂດດ, ເຮັດໃຫ້ໂລກປ່ຽນແປງຈາກຍຸກອຸດສາຫະກຳ ໄປສູ່ຍຸກຂໍ້ມູນຂ່າວສານ ແລະ ເສີມຂະຫຍາຍພູມປັນຍາຢ່າງກ້ວາງຂວາງ ໃນທຸກຂົງເຂດ ແລະ ທຸກຂະແໜງການ; ຍຸກໂລກາພິວັດ ແລະ ການເຊື່ອມໂຍງສາກົນ ເປັນທ່າອ່ຽງພາວະວິໄສ ທັງມີການຮ່ວມມື ແລະ ມີການແຂ່ງຂັນ ໃນບັນດາປະເທດທີ່ພວມພັດທະນາ. ບັນດາອົງການກ່ຽວຂ້ອງກັບສຸຂະພາບໂລກເຊັ່ນ: ອົງການອານາໄມໂລກປະຈຳພາກພື້ນອາຊີປະຊີຟິກ ໄດ້ຄົ້ນພົບສິ່ງທ້າທາຍໃນຫຼາຍປະເທດສະມາຊິກທີ່ພົວພັນກັບການຕອບສະໜອງຄວາມສະເໝີພາບການເຂົ້າເຖິງການບໍລິການສຸຂະພາບທີ່ມີຄຸນນະພາບ ຕົວຢ່າງ ການຂາດເຂີນບຸກຄະລາກອນທີ່ມີຄຸນນະພາບ, ການແຈກຢາຍທີ່ບໍ່ທົ່ວເຖິງ ແລະ ບໍ່ດຸ່ນດ່ຽງພາຍໃນວິຊາຊີບ, ການອົບຮົມບຸກຄະລາກອນທີ່ບໍ່ຕອບສະໜອງຄວາມຕ້ອງການທີ່ຈຳເປັນ ຂອງປະຊາຊົນ.

ດັ່ງນັ້ນ, ອົງການອານາໄມໂລກຈຶ່ງໄດ້ວາງກອບວຽກສຳຫລັບການພັດທະນາຊັບພະຍາກອນມະນຸດທາງດ້ານສາທາ ລະນະສຸກ 2016-2020 ແລະ ວາງວິໄສທັດການພັດທະນາໄວ້ສຳຫລັບປີ 2025 ເພື່ອເປັນແນວທາງໃຫ້ບັນດາປະເທດສະມາຊິກ. ກະແສຂອງໂລກາພິວັດ ໄດ້ສົ່ງຜົນກະທົບຕໍ່ວົງການແພດ ແລະ ບໍ່ສາມາດຫລີກລ້ຽງໄດ້ ກະແສດັ່ງກ່າວໄດ້ທັບມ້າງພົມແດນຕ່າງໆ ທັງດ້ານພູມມີສາດ, ວິຊາການ ແລະ ວັດທະນະທຳ ໃນທາງພູມມີສາດແພດໃນປັດຈຸບັນ ແລະ ອານາຄົດສາມາດປະຕິບັດວິຊາຊີບ ໃນປະເທດອື່ນໆ ໄດ້ສະດວກກ່ວາໃນອາດີດ, ການກໍ່ສ້າງບຸກຄະລາກອນ ທາງດ້ານສາທາລະນະສຸກ ມີທ່າອ່ຽງຫັນເປັນມາດຕະຖານ ແລະ ມີການຮັບຮອງທັງສະຖາບັນການກໍ່ສ້າງ ແລະ ຢັ້ງຢືນຄວາມສາມາດ ຂອງບຸກຄະລາກອນ. ອົງການທີ່ຮັບຜິດຊອບ ໃນການຢັ້ງຢືນມາດຕະຖານດັ່ງກ່າວ ຈຶ່ງໄດ້ຮັບການສ້າງຕັ້ງຂຶ້ນໃນຫຼາຍລະດັບເຊັ່ນ: ສະຫະພັນ ແພດສາດສຶກສາໂລກ (WFME) ແລະ ອົງການອານາໄມໂລກ (WHO), ເຄືອຄ່າຍຂອງມະຫາວິທະຍາໄລອາຊຽນ (AUN-QA) ທີ່ເຮັດໜ້າທີ່ ໃນການພັດທະນາມາດຕະຖານ ແລະ ສ້າງບົດແນະນຳສຳຫລັບການປະກັນຄຸນນະພາບ ເພື່ອຍົກສູງຄຸນນະພາບ ຂອງການກໍ່ສ້າງບຸກຄະລາກອນ; ເນື້ອໃນຂອງມາດຕະຖານດັ່ງກ່າວປະກອບດ້ວຍຫຼາຍ ອົງປະກອບໃຫຍ່ແຕກຕ່າງກັນເຊັ່ນ: ພັນທະກິດ, ຜົນຮັບ, ຫລັກສູດ ຫລື ໂຄງການສຶກສາ, ການປະເມີນຜົນນັກສຶກສາ, ນັກສຶກສາ, ພະນັກງານວິຊາການ/ຄູ-ອາຈານ, ຊັບພະຍາກອນສຳຫລັບການສຶກສາ, ການປະເມີນໂຄງການ/ຫລັກສູດ, ການປົກຄອງ, ການບໍລິຫານ ແລະ ການສືບຕໍ່ພັດທະນາວິຊາຊີບ.

ໃນປີ 2016 ປະຊາຄົມເສດຖະກິດອາຊຽນ ໄດ້ມີການເລີ້ມຕົ້ນຂຶ້ນ ຈະໄດ້ມີການແລກປ່ຽນ ສິນຄ້າ ຂໍ້ມູນຂ່າວສານ ບຸກຄະລາກອນ ແລະ ອື່ນໆ ໂດຍສະເພາະແມ່ນການຮັບຮອງຄວາມສາມາດ ຂອງບຸກຄະລາກອນເຊິ່ງກັນ ແລະ ກັນ ໃນນັ້ນຂະແໜງການສຶກສາ ແລະ ມະຫາວິທະຍາໄລ ຂອງປະຊາຄົມເສດຖະກິດອາຊຽນຈຶ່ງໄດ້ມີການສ້າງເຄືອຄ່າຍຂຶ້ນ AUN ແລະ ມີການສ້າງມາດຕະຖານຂອງການປະກັນຄຸນນະພາບ AUN-QA ລວມຂອງ ປະຊາຄົມຂຶ້ນ ແລະ ກຳລັງມີການລົງທະບຽນ ແລະ ການອົບຮົມ ເພື່ອເປັນທິດທາງໃນການປະຕິບັດ.

### *1.2. ສະພາບພາຍໃນປະເທດ*

ແຜນຍຸດທະສາດ 5 ປີ (2021-2025) ຂອງຄະນະສາທາລະນະສຸກສາດ, ມະຫາໄລ ວິທະຍາສາດ ສຸຂະພາບ ແມ່ນໄດ້ສ້າງຂຶ້ນ ແລະປະຕິບັດໃນທ່າມກາງ ສິ່ງທ້າທາຍ ແລະການປ່ຽນແປ່ງ ຂອງສາກົນ ແລະພາຍໃນປະເທດທີ່ມີຫຼາຍເຫດການເກີດຂຶ້ນທັງມີອັນດີ ແລະ ອັນຫຍໍ້ທໍ້. ກະຊວງສຶກສາທິການ ແລະ ກິລາ ຜູ້ທີຮັບຜິດຊອບເລື່ອງ ການກໍ່ ສ້າງຊັບພະຍາກອນມະນຸດຂອງປະເທດ ໄດ້ສ້າງມາດຕະຖານການປະກັນຄຸນນະພາບການສຶກສາຊັ້ນສູ່ງ ມີ 10 ມາດຕະຖານ: ວິໄສທັດ, ພາລະໜ້າທີ່ ແລະ ຈຸດໝາຍການກໍ່ສ້າງ, ການຄຸ້ມຄອງ ແລະ ການບໍລິຫານ, ການພັດທະນາບຸກ ຄະລາກອນ, ຫຼັກສູດ, ປະສິດທິຜົນ ຂອງການຮຽນ-ການສອນ, ການສົ່ງເສີມນັກສຶກສາ, ສະພາບແວດລ້ອມ ແລະ ແຫຼ່ງການຮຽນຮູ້, ລະບົບຂໍ້ມູນຂ່າວ ສານ, ລະບົບການປະກັນພາຍໃນ, ການຄົ້ນຄວ້າວິທະຍາສາດ ແລະການບໍລິ ການວິຊາການ. ກະຊວງ

ສາທາລະນະ ສຸກ ກໍ່ໄດ້ຮ່າງມາດຕະຖານປະກັນຄຸນນະພາບ ຂອງສະຖາບັນການສຶກສາ ວິຊາຊີບສາທາລະນະສຸກແລະ ກໍາລັງດໍາ ເນີນ ການຜັນຂະຫຍາຍຈັດຕັ້ງປະຕິບັດ.

ຄະນະສາທາລະນະສຸກສາດ, ມະຫາວິທະຍາໄລ ວິທະຍາສາດ ສຸຂະພາບ ເປັນຄະນະໃໝ່ທີ່ ຫາກໍສ້າງຕັ້ງຂຶ້ນ ໂດຍອີງໃສ່ ດໍາລັດ 349 349/ນຍ, ລົງວັນທີ 16 ພະຈິກ 2017, ຊຶ່ງມີຄວາມທ້າທາຍ ໃນການຈັດຕັ້ງ ການຮຽນ-ການສອນຫລັກສູດ ສາທາລະນະສຸກສາດ, ເລີ້ມແຕ່ປະລິນຍາຕີ ເຖິງ ປະລິນຍາໂທ ແລະ ປະລິນຍາເອກ. ດັ່ງ ນັ້ນ, ຄະນະສາທາລະນະສຸກ ສາດ ຈຶ່ງມີຄວາມຈໍາເປັນໃນການສ້າງລະບົບປະກັນຄຸນນະພາບພາຍໃນມະຫາວິທະຍາໄລ ເພື່ອເປັນມາດຕະຖານໃນການ ກວດກາພາຍໃນ ເຊິ່ງມີບັນດາອີງປະກອບມາດຕະຖານໃກ້ຄຽງກັນກັບ ມາດ ຕະຖານ ກະຊວງສາທາລະນະສຸກ, ກະຊວງ ສຶກສາ ທິການ ແລະ ກິລາ, ໃນພາກພື້ນ ແລະ ສາກົນ.

***1.3. ຄວາມໝາຍຄວາມສໍາຄັນ***

ແຜນພັດທະນາ ຄະນະສາທາລະນະສຸກສາດ (2021-2025) ແມ່ນຜັນຂະຫຍາຍຈາກມະຕິກອງປະຊຸມໃຫຍ່ ຂອງສູນ ກາງພັກຄັ້ງທີ່ XI ໃຫ້ປະກົດຜົນເປັນຈິງໃນການນໍາພາປະເທດຊາດຫລຸດພົ້ນຈາກສະຖານະພາບດ້ອຍພັດທະນາໃນປີ 2025. ແຜນພັດທະນາ ຄະນະສາທາລະນະສຸກສາດ ໄດ້ພັດທະນາຂຶ້ນຕາມມະຕິກອງປະຊຸມໃຫຍ່ ຂອງອົງ ຄະນະພັກ ກະຊວງສາທາລະນະສຸກຄັ້ງທີ X ເພື່ອຕອບສະໜອງຍຸດທະສາດ ປະຕິຮູບສາທາລະນະສຸກ ແລະຍຸດທະສາດ ພັດທະນາ ພະນັກງານ ສາທາລະນະສຸກ ຮອດປີ 2025; ນອກຈາກການພັດທະນາເພື່ອ ຕອບສະໜອງຄວາມຕ້ອງການພາຍໃນ ປະເທດແລ້ວ ຍັງຕ້ອງໄດ້ຄໍານຶງເຖິງ ການຊື່ອມໂຍງກັບພາກພື້ນ ແລະມາດຕະຖານສາກົນ ໂດຍສະເພາະມາດຕະຖານຂອງ ປະຊາຄົມເສດຖະກິດອາຊຽນ, ແຜນດັ່ງກ່າວໄດ້ລະບຸກອບການທໍາງານ ແລະທິດທາງຍຸດທະສາດ ເພື່ອແນະນໍາການ ພັດທະນາ ຄະນະສາທາລະນະສຸກສາດ ແລະອໍານວຍຄວາມສະດວກ ໃຫ້ແກ່ການລະດົມແຫຼ່ງຊັບພະຍາກອນທີ່ຈໍາເປັນ ໃນການພັດທະນາ ເຊັ່ນ: ຫຼັກສູດການຮຽນ-ການສອນ, ຄວາມອາດສາມາດໃນການສິດສອນ, ຊັບພະຍາກອນສໍາຫຼັບ ການຮຽນ ແລະ ສິ່ງອໍານວຍຄວາມສະດວກຕ່າງໆ.

ເປົ້າໝາຍສໍາຄັນແມ່ນການສ້າງຄວາມເຂັ້ມແຂງທາງດ້ານການສອນພາກທິດສະດີ, ຫ້ອງປະຕິບັດການ ແລະ ພາກສະໜ າມ ດ້ວຍການເອົາໃຈໃສ່ພາກທົດລອງ ແລະ ພາກສະໜາມ, ຄະນະສາທາລະນະສຸກສາດ ຕ້ອງໄດ້ຮ່ວມ ມືກັບ ພາກສ່ວນ ບໍລິການຕ່າງໆໃນຂະແໜງການສາທາລະນະສຸກ ແລະ ຂະແໜງການສິ່ງແວດລ້ອມ ແລະ ອື່ນໆ, ເຊິ່ງເປັນ ການຊຸກຍູ້ໃຫ້ ແກ່ການສຶກສາຕໍ່ເນື່ອງ, ການຄົ້ນຄ້ວາວິທະຍາສາດ ແລະການ ເຮັດໜ້າທີໃນການຊຸກຍູ້ຊ່ວຍພັດ ທະນາຄະນະ ສາທາລະນະສຸກສາດ.

## II. ທິດທາງລວມຂອງແຜນຍຸດທະສາດພັດທະນາ ຄະນະສາທາລະນະສຸກສາດ ແຕ່ປີ 2021-2025

***.2.1ທິດທາງລວມ***

- ການພັດທະນາຕ້ອງໃຫ້ສອດຄ່ອງ ແລະ ຕິດພັນກັບການພັດທະນາເສດຖະກິດສັງຄົມທັງສອດຄ່ອງກັບພາວະຄວາມເປັນ ຈິງ;
- ການພັດທະນາຕ້ອງໄປຕາມທ່າອ່ຽງ ແລະ ມາດຕະຖານຂອງສາກົນເພື່ອເຮັດໃຫ້ການພັດທະນາຂອງເຮົາໃຫ້ທຽບກັບຂົງ ເຂດ ແລະສາກົນເທື່ອລະກ້າວ;
- ການພັດທະນາຄະນະສາທາລະນະສຸກສາດຕ້ອງເອົາການສຶກສາເປັນໃຈກາງໃນການພັດທະນາຊັບພະຍາກອນມະນຸດ ໃຫ້ ກາຍເປັນພາລະກິດສໍາຄັນ ແລະ ຈໍາເປັນ;
- ຍຸດທະສາດຕອບສະໜອງຄວາມຕ້ອງການ ທາງດ້ານສຸຂະພາບຂອງປະຊາຊົນລາວທຸກເຜົ່າຊົນຊັ້ນ;
- ມີການຮ່ວມມື ແລະໃຫ້ການສະໜັບສະໜູນຈາກສັງຄົມ, ຄະນະສາທາລະນະສຸກສາດ ມີໂຄງການສ້າງສະຖານ ທີ່ ເຄຫາ ສະຖານ ແລະອຸປະກອນທີ່ໄດ້ ມາດຕະຖານ ແລະພຽງພໍ;
- ມີຄວາມເປັນເລີດທາງດ້າຍວິຊາການ, ການຮຽນ-ການສອນ ທີ່ມີຄຸນນະພາບ, ການຮ່ວມມື ແລະໃຫ້ບໍລິ ການແກ່ສັງຄົມ ທີ່ມີປະສິດພາບ;
- ຮັກສາຄວາມຍືນຍົງ ຂອງສິ່ງແວດລ້ອມ ແລະອົງກອນ;

- ມີຄວາມຫຼາກຫຼາຍທາງດ້ານວັດທະນາທຳ ແລະ ໂອກາດເທົ່າທຽມກັນ.

***2.2. ຈຸດປະສົງ***

ເພື່ອສ້າງ ຄະນະສາທາລະນະສຸກສາດ ໃຫ້ມີຄວາມເຂັ້ມແຂງສາມາດສ້າງນັກວິຊາການສາທາລະນະສຸກຢ່າງ ມີຄຸນນະພາບ ໄດ້ມາດຕະຖານສາທາລະນະສຸກຂັ້ນພື້ນຖານຂອງສາກົນ, ມາດຕະຖານປະກັນຄຸນນະພາບ ທາງດ້ານສາທາລະນະສຸກ ຂອງເຄືອຄ່າຍມະຫາວິທະຍາໄລອາຊຽນ, ມາດຕະຖານການປະກັນຄຸນນະພາບການສຶກສາຊັ້ນສູງ ຂອງກະຊວງ ສຶກສາທິການ ແລະ ກິລາ ແລະ ກະຊວງສາທາລະນະສຸກ.

***2.3. ຄາດໝາຍລວມ***

- ການພັດທະນາ ຄະນະສາທາລະນະສຸກສາດ ແມ່ນໃຫ້ບັນລຸຕາມມາດຕະຖານສາທາລະນະສຸກແຕ່ລະດ້ານ ຢູ່ພາຍໃນປະເທດ, ຂົງເຂດ ແລະ ສາກົນ ເພື່ອຜ່ານການປະກັນຄຸນນະພາບການສຶກສາສາທາລະນະສຸກຂອງສາກົນ
- ຄະນະສາທາລະນະສຸກສາດ, ມະຫາວິທະຍາໄລ ວິທະຍາສາດ ສຸຂະພາບ ເປັນບ່ອນກໍ່ສ້າງນັກວິຊາການ ໃຫ້ເປັນມັນສະໝອງ ແລະເປັນຜູ້ຊຳນານງານໃນວຽກງານສາທາລະນະສຸກ ແລະ ກັນພະຍາດ, ຊຶ່ງເປັນ ບຸລິມະສິດອັນສຳຄັນ ຂອງກະຊວງສາທາລະນະສຸກ;
- ການກໍ່ສ້າງຊັບພະຍາກອນມະນຸດ ທາງດ້ານສາທາລະນະສຸກ ແມ່ນສ້າງນັກສາທາລນະສຸກໃຫ້ມີຂີດຄວາມສາມາດ ທີ່ເປັນມາດຕະຖານຫຼາຍດ້ານເຊັ່ນ: ທັງດ້ານທັກສະ, ຄວາມຮູ້, ທັດສະນະຄະຕິ, ການຄິດ, ວິເຄາະລະດັບສູງ, ພາວະຜູ້ນຳ, ການວາງແຜນຄຸ້ມຄອງສາທາລະນະສຸກ, ທັກສະການແກ້ໄຂບັນຫາ, ຈັນຍາບັນ, ຈິດອາສາ, ທັກສະການຮຽນຮູ້ຕະຫຼອດຊີວິດ, ມະນຸດສຳພັນ ແລະການສື່ສານທີ່ດີ;
- ການພັດທະນາວິຊາການຊັ້ນສູງ ແລະ ນັກຄົ້ນຄ້ວາວິທະຍາສາດທາງດ້ານສາທາລະນະສຸກ ສາມາດຕອບສະໜອງຕາມແນວທາງ ຫັນເປັນອຸດສະຫະກຳທີ່ທັນສະໄໝ ແລະທັງສອດຄ່ອງກັບຄວາມຕ້ອງການຂອງສັງຄົມ ແລະ ການພັດທະນາເສດຖະກິດ-ສັງຄົມຂອງປະເທດ.

***2.4. ວິໄສທັດ Vision***

ສ້າງຄວາມເປັນເລີດດ້ານການສຶກສາ ແລະ ການຄົ້ນຄ້ວາວິທະຍາສາດ ທາງດ້ານສາທາລະນະສຸກ ໃນທົ່ວປະເທດ ແລະ ພາກພື້ນ.

***2.5. ພັນທະກິດ Mission***

ເພື່ອຍົກລະດັບທາງດ້ານວິຊາການສາທາລະນະສຸກ ໂດຍການຈັດການອົບຮົມ ລະດັບປະລິນຍາຕີ/ຫຼັງປະລິນຍາຕີໃຫ້ແກ່ພະນັກງານສາທາລະນະສຸກ ເພື່ອຕອບສະໜອງການສົ່ງເສີມສຸຂະພາບແລະ ການກັນພະຍາດທີ່ມີປະສິດທິພາບ ເພື່ອຍົກລະດັບວິຊາການທາງດ້ານສາທາລະນະສຸກ.

***2.6. ປັດຊະຍາ***

ຄະນະສາທາລະນະສຸກສາດ ເປັນສະຖາບັນຊັ້ນນຳທາງດ້ານສາທາລະນະສຸກໃນ ສປປ ລາວ, ຊຶ່ງໄດ້ຈັດການຮຽນ-ການສອນລະດັບປະລິນຍາຕີ /ຫຼັງປະລິນຍາຕີ ແລະ ໃຫ້ໂອກາດແກ່ນັກສຶກສາ ເພື່ອບັນລຸຄວາມມຸ້ງຫວັງ ທາງດ້ານວິຊາຊີບສາທາລະນະສຸກ ແລະ ເສີມຂະຫຍາຍທັກສະໃນການຮຽນຮູ້-ການສອນ.

***2.7. ເປົ້າໝາຍ***

1) ກໍ່ສ້າງບຸກຄະລາກອນທາງດ້ານສາທາລະນະສຸກ ໃນທຸກສາຂາວິຊາຊີບ ຢ່າງມີຄຸນນະພາບສູງ;
2) ສະໜັບສະໜູນການພັດທະນາວິຊາຊີບຢ່າງຕໍ່ເນື່ອງ ໃຫ້ແກ່ບຸກຄະລາກອນສາທາລະນະສຸກ ໃນທຸກສະຖານ ທີ່ບໍລິການ;
3) ພັດທະນາການບໍລິການສຸຂະພາບ ໂດຍຜ່ານການຮ່ວມມືຂອງພະນັກງານສາທາລະນະສຸກ ແລະ ສິ່ງອຳນວຍຄວາມສະດວກຕ່າງໆໃນການຮຽນພາກທິດສະດີ, ຫ້ອງທົດລອງ ແລະ ພາກສະໜາມ;
4) ພັດທະນາການຄວາມຮູ້, ຄວາມສາມາດໃນການເຮັດການຄົ້ນຄ້ວາໂດຍຜ່ານການຄົ້ນຄ້ວາວິທະຍາສາດ ແລະ ກິດຈະກຳດ້ານ ວິຊາການ;

5) ສົ່ງເສີມການສຶກສາຕໍ່ເນື່ອງ ແລະ ສ້າງປະລິນຍາໂທ ແລະ ປະລິນຍາເອກທາງດ້ານສາທາລະນະສຸກ ຕາມຄວາມຕ້ອງການທີ່ຈຳເປັນ ໃນຂອບເຂດທົ່ວປະເທດ.

- **ຄຳຂວັນຄະນະສາທາລະນະສຸກສາດ: ພັດທະນາຄວາມຮູ້ຄຽງຄູ່ກັບຄວາມສາມາດ, ທັກສະຂອງພະນັກງານສາທາລະນະສຸກ ໃຫ້ເຂັ້ມແຂງຮອບດ້ານ ເພື່ອຮັບໃຊ້ສັງຄົມ.**

***2.8. ຫຼັກການ***

1) ຈັດຕັ້ງການຮຽນການສອນໂດຍເອົານັກສຶກສາເປັນໃຈກາງ, ປະກອບແຫຼ່ງຊັບພະຍາກອນ ເພື່ອການ ສິດສອນຢ່າງພຽງພໍ;
2) ສ້າງສິ່ງແວດລ້ອມໃນການຮຽນຢ່າງຫ້າວຫັນ ໂດຍສຸມໃສ່ທັກສະ ແລະທັດສະນະຄະຕິທີ່ພົວພັນກັບ ການປະຕິບັດຕົວຈິງ;
3) ສ້າງທັດສະນະຄະຕິທາງດ້ານຈັນຍາບັນສາທາລະນະສຸກ ແລະຄວາມຮັບຜິດຊອບຕໍ່ສັງຄົມ;
4) ສ້າງທັກສະການຮຽນຮູ້ ແລະຄວາມສາມາດໃນການຮຽນຮູ້ຕະຫຼອດຊີວິດ;
5) ສົ່ງເສີມການບໍລິການໃນເຂດຫ່າງໄກສອກຫຼີກ ແລະເຂດທີ່ມີເງື່ອນໄຂການບໍລິການບໍ່ພຽງພໍ;
6) ຍົກສູງຄຸນນະພາບຂອງນັກສຶກສາ ແລະການຄົ້ນຄ້ວາວິທະຍາສາດ ເພື່ອໃຫ້ທຽມທັນມາດຕະຖານຂອງພາກພື້ນ ແລະສາກົນ;
7) ສຸມໃສ່ການຄົ້ນຄ້ວາດ້ານສາທາລະນະສຸກເພື່ອແກ້ໄຂຄວາມຕ້ອງການດ້ານຊັບພະຍາກອນແລະສຸຂະພາບຂອງທ້ອງຖິ່ນປະຊາຊົນ;
8) ຮ່ວມມືກັບທຸກພາກສ່ວນທີ່ໃຫ້ບໍລິການດ້ານສາທາລະນະສຸກໃນການຮັກສາສຸຂະພາບ, ການຄົ້ນຄ້ວາ ແລະ ໃຫ້ສຸຂະສຶກສາ;
9) ຍົກສູງສຸຂະພາບຂອງປະຊາຊົນລາວເພື່ອບັນລຸເປົ້າໝາຍຂອງການພັດທະນາແບບຍືນຍົງ SDG's;
10) ຮັກສາຄວາມສະເໝີພາບ, ໂດຍສະເພາະບົດບາດຍິງ-ຊາຍ, ຊົນເຜົ່າ ແລະຄວາມຕ້ອງການຂອງເຂດຫ່າງໄກຊອກຫຼີກ;
11) ມີຄວາມສອດຄ່ອງກັບນະໂຍບາຍທາງດ້ານສຸຂະພາບຂອງປະເທດ, ASEAN ແລະສາກົນ;
12) ພັດທະນາຮ່ວມມືຢ່າງກວ້າງຂວາງກັບພາຍໃນ ແລະສາກົນທາງດ້ານສາທາລະນະສຸກ.

***2.9. ຄາດໝາຍສູ້ຊົນ***

1) ປັບປຸງໂຄງປະກອບການຈັດຕັ້ງ ແລະພາລະບົດບາດ ຂອງຄະນະສາທາລະນະສຸກສາດ ຄືນໃຫມ່;
2) ມີລະບຽບການຄັດເລືອກ ນັກສຶກສາເຂົ້າຮຽນໃນ ຄະນະສາທາລະນະສຸກສາດ ຢ່າງຈະແຈ້ງຊັດເຈນ;
3) ປັບປຸງ ຄະນະສາທາລະນະສຸກສາດ ໃຫ້ບັນລຸຕາມມາດຕະຖານ ຂອງກະຊວງສາທາລະນະສຸກ ແລະ ກະຊວງສຶກສາທິການ ແລະກິລາ;
4) ນັກສຶກສາທີ່ຈົບຈາກ ຄະນະສາທາລະນະສຸກສາດ ຕ້ອງມີຄຸນນະພາບ ເພື່ອໃຫ້ການບໍລິການແກ່ປະຊາຊົນໄດ້ ເປັນຢ່າງດີ ແລະສາມາດເຂົ້າສູ່ຂົງເຂດພາກພື້ນ ແລະ ສາກົນ;
5) ມີຫຼັກສູດທີ່ໄດ້ມາດຕະຖານໃນຂົງເຂດ ແລະສາກົນຄົບຖ້ວນ ຕາມຄວາມຕ້ອງການດ້ານສຸຂະພາບ ຂອງ ປະຊາຊົນ (ມີທຸກພາກວິຊາ, ລະດັບວຸດທິ);
6) ມີລະບົບປະກັນຄຸນນະພາບພາຍໃນ;
7) ມີທີມງານ ຄົ້ນຄ້ວາວິທະຍາສາດຄົບທຸກພາກວິຊາ ແລະ ສາມາດເຮັດວຽກຄົ້ນຄວ້າຮ່ວມກັບຫຼາຍພາກສ່ວນໄດ້, ທັງພາຍໃນ ແລະ ພາຍນອກ, ໂດຍແນໃສ່ປະໂຫຍດຕໍ່ກັບສາທາລະນະສຸກ;
8) ມີຈຳນວນຄູອາຈານສອນພຽງພໍ ແລະມີຄຸນວຸດທິ ເໝາະສົມກັບຫຼັກສູດ;
9) ມີຫ້ອງປະຕິບັດການຕົວຈິງ ທາງດ້ານ ອະນາໄມສິ່ງແວດລ້ອມ ແລະ ຊີວະອະນາໄມ ແລະ ໂພຊະນາການ;
10) ສ້າງຕັ້ງສູນ ICT ແລະ ຕິດຕັ້ງ WiFi ຄວາມໄວສູງ;
11) ອອກແບບໂຄງຮ່າງການສ້າງມະຫາວິທະຍາໄລຫຼັງໃຫມ່ (ອາຄານ ຂອງຄະນະສາທາລະນະສຸກສາດ, ຫໍສະໝຸດ).

**ຄະນະສາທາລະນະສຸກມີ 8 ແຜນງານຍ່ອຍພັດທະນາ ຄະນະສາທາລະນະສຸກສາດ ເຊັ່ນ**

1) ແຜນງານບໍລິຫານ ແລະ ການຄຸ້ມຄອງ;
2) ແຜນການ ຄຸ້ມຄອງ ແລະ ສົ່ງເສີມກິດຈະກຳນັກສຶກສາ
3) ແຜນງານພັດທະນາການຮຽນ-ການສອນ;
4) ແຜນງານ ພັດທະນາຫຼັກສູດ;
5) ແຜນງານພັດທະນາຄູອາຈານ ແລະ ພະນັກງານ;
6) ແຜນພັດທະນາດ້ານໂຄງລ່າງພື້ນຖານ, ອຸປະກອນ ແລະ ສິ່ງອານວຍຄວາມສະດວກ;
7) ແຜນງານສົ່ງເສີມການຄົ້ນຄ້ວາວິທະຍາສາດ ແລະ ການໃຫ້ບໍລິການວິຊາການ;
8) ແຜນງານລະບົບປະກັນຄຸນນະພາບພາຍໃນ.

## III. ເນື້ອໃນຂອງແຜນງານຍຸດທະສາດພັດທະນາ ຄະນະສາທາລະນະສຸກສາດ.

### 1. ແຜນງານບໍລິຫານ ແລະ ຄຸ້ມຄອງ

- **ທິດທາງໜ້າທີ່**

ຄະນະສາທາລະນະສຸກສາດ ມີແຜນການ ແລະ ໂຄງການ ກ່ຽວກັບຄຸ້ມຄອງວຽກງານ ບໍລິຫານສັງລວມຂອງຄະນະ, ຄຸ້ມຄອງເອກະສານ, ນິຕິກຳ, ຂໍ້ຕົກລົງ, ລະບຽບການຕ່າງໆ, ຄຸ້ມຄອງບໍລິຫານບຸກຄະລາກອນ, ຄຸ້ມຄອງບໍລິຫານການເງິນ, ສົ່ງເສີມພົວພັນ ແລະ ການຮ່ວມມືກັບຕ່າງປະເທດ ແລະ ຄຸ້ມຄອງຮັກສາພາຫານະ, ອຸປະກອນຮັບໃຊ້ຫ້ອງການ ແລະ ການຮຽນ-ການສອນໃຫ້ມີປະສິດທິຜົນ.

- **ຄາດໝາຍ**

1. ປັບປຸງໂຄງຮ່າງ ແລະ ພາລະບົດບາດຂອງຄະນະສາທາລະນະສຸກສາດໃຫ້ສຳເລັດຕາມແຜນຍຸດທະສາດ ແລະ ແຜນພັດທະນາຂອງຄະນະສາທາລະນະສຸກສາດ 2021-2025;
2. ປັບປຸງລະບົບເອກະສານທາງດ້ານບໍລິຫານ-ວິຊາການ, ຄຸ້ມຄອງພາຫະນະ ແລະ ຈັດຊື້ອຸປະກອນ ການຮຽນ-ການສອນໃຫ້ມີປະສິດທິພາບ;
3. ຂຶ້ນແຜນງົບປະມານລັດ, ງົບປະມານວິຊາການ ແລະ ທຶນຊ່ວຍເຫລືອຈາກຕ່າງປະເທດໃຫ້ໄດ້ຕາມແຜນກຳນົດຂອງ ມວສ ແລະ ກະຊວງສາທາລະນະສຸກ;
4. ຂະຫຍາຍການຮ່ວມມື ດ້ານການສຶກສາກັບສະຖາບັນການສຶກສາໃນຂົງເຂດພາກພື້ນ ແລະ ສາກົນ ສືບຕໍ່ເຊັນສັນຍາເກົ່າ ແລະ ເພີ້ມການເຊັນສັນຍາໃໝ່ກັບສະຖາບັນການສຶກສາອື່ນໆ;
5. ຄຸ້ມຄອງພາຫະນະ ແລະ ຈັດຊື້ອຸປະກອນຮັບໃຊ້ການຮຽນ-ການສອນໃຫ້ໄປຕາມແຜນຂອງ ຄສສ ແລະ ມວສ;

#### *1.1. ໂຄງການຈຸດສຸມບູລິມະສິດ*

**1.1.1. ໂຄງການຄຸ້ມຄອງເອກະສານ, ນິຕິກຳ-ຂໍ້ຕົກລົງ ແລະ ລະບຽບການຕ່າງໆ :**

- **ຄາດໝາຍ**

1. ປັບປຸງລະບົບເກັບມ້ຽນເອກະສານ ແລະ ພາລະບົດບາດຂອງຄະນະສາທາລະນະສຸກສາດໃຫ້ມີປະສິດທະພາບ;

- **ມາດຕະການ ແລະ ວິທີການ**

1. ອົບຮົມວິທີການຈັດເກັບເອກະສານຕ່າງໆ ໃຫ້ມີປະສິດທິຜົນ;
2. ສ້າງຖານຂໍ້ມູນເກັບກຳເອກະສານຂາອອກ-ຂາເຂົ້າຢ່າງລະອຽດ ແລະ ຈັດໄຟລເອກກະສານຕ່າງໆ ໄປຕາມໝວດໝູ່ ແລະ ຈັດຕັ້ງປະຕິບັດ ລະບົບການຄຸ້ມຄອງເອກກະສານ, ຂໍ້ຕົກລົງ ແລະ ບຽບການຕ່າງໆ ທັງເປັນໃນຮູບແບບ Soft ware and Hardware ໃຫ້ມີປະສິດທິຜົນ;

**1.1.2. ໂຄງການຄຸ້ມຄອງບໍລິຫານບຸກຄະລາກອນ**

- **ຄາດໝາຍ**

1. ປັບປຸງ ພາລະບົດບາດຂອງ ຄະນະສາທາລະນະສຸກສາດ, ພະແນກບໍລິຫານວິຊາການ ແລະ ພາກວິຊາ ໃຫ້ໄປຕາມກົງຈັກການຈັດຕັ້ງທີ່ກະທັດຮັດ.

2. ຄຸ້ມຄອງບຸກຄະລາກອນໃນຄະນະໃຫ້ມີປະສິດທິຜົນ ແລະ ປະສິດທິພາບ;

- **ມາດຕະການ ແລະ ວິທີການ**

1. ອົບຮົມການຂຽນກຳນົດຕຳແໜ່ງງານ ແລະ ພາລະບົດບາດ ຂອງພະນັກງານ ຄສສ.
2. ຂຽນພາລະບົດບາດ ແລະ ນຳສະເໜີເພື່ອຂໍອານຸມັດ ຈາກ ກະຊວງສາທາລະນະສຸກ.
3. ເຜີຍແຜ່ພາລະບົດບາດຂອງແຕ່ລະພະແນກ ແລະ ພາກວິຊາ ໃຫ້ພະນັກງານ ໃນຄະນະ ຮັບຮູ້ ແລະ ຈັດຕັ້ງປະຕິບັດໄປຕາມພາລະບົດບາດຂອງຕົນເອງຢ່າງມີປະສິດທິຜົນ.
4. ຈັດການປະເມີນຜົນງານຂອງພະນັກງານ ແລະ ລັດຖະກອນຄູ; ແລະ ຍ້ອງຍໍຜົນງານດີເດັ່ນປະຈຳປີ.
5. ຊັບຊ້ອນບຸກຄະລາກອນໃຫ້ຖືກຕາມຕຳແໜ່ງງານທີ່ເໝາະສົມໃຫ້ໄປຕາມຕາມຂັ້ນຕອນຕ່າງໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບລັດຖະກອນ ແລະ ນິຕິກຳອື່ນໆ ທີ່ກ່ຽວຂ້ອງ.
6. ສ້າງຖານຂໍ້ມູນເກັບກຳສະຖິຕິ ແລະ ຊີວະປະຫວັດຂອງພະນັກງານ ຄສສ.

**1.1.3. ໂຄງການຄຸ້ມຄອງບໍລິຫານການເງິນ**

- **ຄາດໝາຍ**

1. ຂຶ້ນແຜນງົບປະມານພາກລັດ ແລະ ວິຊາການ, ງົບປະມານວິຊາ, ແລະ ໂຄງການສາກົນຕ່າງໆ ຕາມລະບຽບຫຼັກການຢ່າງມີປະສິດທິຜົນ.
2. ຈັດຕັ້ງປະຕິບັດແຜນງົບປະມານການເງິນ, ຕິດຕາມການຈັດຕັ້ງປະຕິບັດງົບປະມານຂອງແຕ່ລະໂຄງການ ແລະ ສະຫຼຸບ ເພື່ອກຽມການກວດສອບ.

- **ມາດຕະການ ແລະ ວິທີການ**

1. ຈັດຕັ້ງປະຕິບັດ ເຜີຍແຜ່ດຳລັດ ແລະ ນິຕິກຳການເງິນຕ່າງໆ ກ່ຽວກັບການນຳໃຊ້ງົບປະມານໃຫ້ແກ່ພະນັກງານ.
2. ອົບຮົມການຂຽນບົດໂຄງການ ແລະ ຂຶ້ນແຜນງົບປະມານວິຊາການ ແລະ ງົບປະມານລັດ ໃຫ້ແກ່ພະນັກງານ ຄສສ.
3. ຂຽນບົດໂຄງການ ແລະ ງົບປະມານພາກລັດ-ວິຊາການ, ແລະ ສາກົນ ໃຫ້ຖືກຕາມລະບຽບຫຼັກການ ແລະ ທັນເວລາ, ແລະ ມີປະສິດທິຜົນ.
4. ສັງລວມແຜນງົບປະມານ ແລະ ສະຫຼຸບລາຍງານກິດຈະກຳຕ່າງໆ ເພື່ອສົ່ງໃຫ້ ມວສ.
5. ສຳມະນາຖອດຖອນບົດຮຽນການຈັດຕັ້ງປະຕິບັດງົບປະມານວິຊາການ ແລະ ງົບປະມານລັດ.

**1.1.4. ໂຄງການສົ່ງເສີມການພົວພັນ ແລະ ການຮ່ວມມືກັບຕ່າງປະເທດ**

- **ຄາດໝາຍ**

1. ສ້າງຄວາມເຂັ້ມແຂງທາງດ້ານການຮ່ວມມືກັບບັນດາມະຫາວິທະຍາໄລຕ່າງໆ ແລະ ບັນດາອົງກອນອ້ອມຂ້າງກະຊວງສາທາລະນະສຸກ ແລະ ສາກົນ.

- **ມາດຕະການ ແລະ ວິທີການ**

1. ທົບທວນ ແລະ ຂະຫຍາຍເຄື່ອຄ່າຍການເຊັນສັນຍາຮ່ວມມືທາງດ້ານວິຊາການ ແລະ ການຄົ້ນຄວ້າກັບມະຫາວິທະຍາໄລຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ.
2. ຈັດກອງປະຊຸມແລກປ່ຽນກ່ຽວກັບວິຊາການ ແລະ ການຄົນຄວ້າ ກັບມະຫາວິທະຍາໄລຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ.

**1.1.5. ໂຄງການຄຸ້ມຄອງຮັກສາພາຫະນະການສອນ-ອຸປະກອນຮັບໃຊ້ຫ້ອງການ ແລະ ການຮຽນ ,.**

- **ຄາດໝາຍ**

1. ສ້າງລະບົບຄຸ້ມຄອງພາຫະນະ ແລະ ອຸປະກອນເຄື່ອງໃຊ້ຫ້ອງການ ແລະ ການຮຽນ-ການສອນໃຫ້ໄດ້ຢ່າງມີປະສິດທິພາບ.

- **ມາດຕະການ ແລະ ວິທີການ**

1. ສ້າງຖານຂໍ້ມູນເພື່ອເກັບກຳສະຖິຕິພາຫະນາ ແລະ ອຸປະກອນຮັບໃຊ້ຫ້ອງການ-ການຮຽນການສອນ.

2. ຈັດຊື້ອຸປະກອນເຄື່ອງໃຊ້ຫ້ອງການ LCD and Computers,ອຸປະກອນສື່ການສອນ ລວມທັງອຸປະກອນທາງດ້ານໂພຊະນາການ ແລະ ສິ່ງແວດລ້ອມ;
3. ສ້ອມແປງ ແລະ ບຳລຸງຮັກສາ ພາຫະນະ, ເຄື່ອງຄອມພິວເຕີ, LCD and Computers, ອຸປະກອນສື່ການສອນ.

## .2ແຜນການ ຄຸ້ມຄອງ ແລະ ສົ່ງເສີມກິດຈະກຳນັກສຶກສາ

- **ທິດທາງໜ້າທີ່:**

  ຄສສ ມີລະບຽບຫຼັກການ ແລະ ມາດຕະຖານຕ່າງໆຢ່າງຈະແຈ້ງໃນການຄຸ້ມຄອງ ແລະ ສົ່ງເສີມກິດຈະກຳນັກສຶກສາເຄື່ອນໄຫວກິລາ, ສິລະປະວັນນະຄະດີ, ວຽກງານສາທາລະນະສຸກໃນຊຸມຊົນ, ການບໍລິຈາກເລືອດ ແລະ ອຸປະກອນຕ່າງໆ ເພື່ອອຳນວຍຄວາມສະດວກໃຫ້ນັກສຶກສາໄດ້ເຄື່ອນໄຫວວຽກງານນອກຫຼັກສູດ ຢ່າງເປັນປົກະຕິ.

- **ຄາດໝາຍ**

1. ຄສສ ໄດ້ກຳນົດຫຼັກການຄຸ້ມຄອງ ແລະ ສົ່ງເສີມກິດຈະກຳນັກສຶກສາໄວ້ຢ່າງຈະແຈ້ງ;
2. ວາງແຜນກິດຈະກຳນອກຫຼັກສູດໄປຕາມປະຕິທິນການຮຽນ-ການສອນໃນແຕ່ລະຫຼັກສູດແຕ່ລະສົກສຶກສາໃຫ້ໄປຕາມປະຕິທິນຂອງການສຶກສາ;

### *2.1. ໂຄງການຈຸດສຸມບູລິມະສິດ*

### 2.1.1.ໂຄງການກິລາ ແລະ ສິລະປະວັນນະຄະດີ

- **ຄາດໝາຍ**

  ວາງແຜນການເຄື່ອນໄຫວກິດຈະກຳ ກິລາ ແລະ ສິລະປະວັນນຄະດີໄປຕາມປະຕິທິນການຮຽນ-ການສອນໃນແຕ່ລະຫຼັກສູດແຕ່ລະສົກສຶກສາ.

- **ມາດຕະການ ແລະ ວິທີການ**

1. ສ້າງຕັ້ງສະໂມສອນກິລາ ແລະ ສິລະປະວັນນະຄະດີຂອງຄະນະເພື່ອເຄື່ອນໄຫວກິດຈະກຳຕ່າງໆ ແລະ
2. ຈັດການແຂ່ງຂັນ ມິດຕະພາບ ກິລາ ແລະ ສິລະປະ ປະຈຳ 6 ເດືອນ ແລະ ປະຈຳປີ ຫຼືຕ້ອນຮັບວັນສຳຄັນຕ່າງໆ;
3. ຈັດຕັ້ງປະຕິບັດການເຄື່ອນໄຫວສິລະປະວັນນະຄະດີປະຈຳຄະນະ.

### 2.1.2. ໂຄງການ ເຄື່ອນໄຫວວຽກງານ 3 ອົງການຈັດຕັ້ງມະຫາຊົນ

- **ຄາດໝາຍ**

- ສ້າງຂະບວນການແຂ່ງຂັນ 5ເປັນເຈົ້າຂອງສະຫະພັນກຳມະບານລາວ, ຂະບວນການອອກແຮງລວມ ແລະ ສະໜັບສະໜູນ ຊ່ວຍເຫຼືອສັງຄົມ;
- ສ້າງຂະບວນການແຂ່ງຂັນ 4 ບຸກ ຂອງຊາວໜຸ່ມ ແລະ ຂະບວນການຊ່ວຍເຫຼືອສັງຄົມ;
- ສ້າງຂະບວນການແຂ່ງຂັນ ແມ່ຍິງ 3 ດີ, ຂະບວນການຫາລາຍໄດ້ເຂົ້າຄັງເງິນຂອງແມ່ຍິງ ແລະ ການສະໜັບສະໜູນຊ່ວຍເຫຼືອສັງຄົມ.

- **ມາດຕະການ ແລະ ວິທີການ**

1. ເຜີຍແຜ່ບັນດານິຕິກຳທີ່ກ່ຽວຂ້ອງກັບ 3 ອົງການຈັດຕັ້ງມະຫາຊົນໃຫ້ແກ່ສັງຄົມ
2. ຂະຫຍາຍສາມະຊິກເຂົ້າສັງກັດໃນ 3 ອົງການຈັດຕັ້ງມະຫາຊົນ;
3. ເຄື່ອນໄຫວກິດຈະກຳຕ່າງໆ ເຊັ່ນ: ອອກແຮງງານລວມ, ຫາລາຍໄດ້, ປູກຕົ້ນໄມ້ ແລະ ບໍລິການສັງຄົມ.

### 2.1.3.ໂຄງການສົ່ງເສີມການບໍລິຈາກເລືອດ ແລະ ອຸປະກອນຕ່າງໆ

- **ຄາດໝາຍ**

  ພັດທະນາແຜນງານກິດຈະກຳນອກຫຼັກສູດໃນການສົ່ງເສີມການບໍລິຈາກເລືອດ ເພື່ອຊ່ວຍສັງຄົມ ແລະ ການບໍລິຈາກເຄື່ອງ ຫຼື ອຸປະກອນຊ່ວຍເຫຼືອກ່ຽວກັບການຮຽນ-ການສອນທີ່ຈຳເປັນ.

- **ມາດຕະການ ແລະ ວິທີການ**

1. ຈັດຕັ້ງການເຜີຍແຜ່ວຽກງານການບໍລິຈາກເລືອດຊ່ວຍສັງຄົມໃຫ້ແກ່ພະນັກງານ ແລະ ນັກສຶກສາໃນຄະນະ;

2. ກິດຈະກຳນອກຫຼັກສູດເຊັ່ນ: ການບໍລິຈາກເຄື່ອງໃຫ້ແກ່ສັງຄົມ, ເຂົ້າຮ່ວມຂະບວນການໃນການປ້ອງກັນການລະບາດຂອງພະຍາດ ແລະ ໄພພິບັດທາງທຳມະຊາດ.

## 3. ແຜນງານ ພັດທະນາການຮຽນ-ການສອນ

- **ທິດທາງໜ້າທີ່**

ຄສສ ມີແຜນຮັບນັກສຶກສາເຂົ້າຮຽນ, ຈັດຕັ້ງການຮຽນ-ການສອນ, ປະເມີນຄວາມຮູ້ຂອງນັກສຶກສາ, ແຜນການຄຸ້ມຄອງ ແລະ ສົ່ງເສີມກິດຈະກຳນັກສຶກສາ, ແຜນຕິດຕາມຜູ້ສຳເລັດການສຶກສາ, ພັດທະນາຖານຂໍ້ມູນຂ່າວສານ-ຫ້ອງສະໝຸດ ແລະ ສ້າງເຄືອຄ່າຍຂອງອະດີດນັກສຶກສາ.

- **ຄາດໝາຍ**

1. ຄສສໄດ້ກຳນົດຈຳນວນໂຄຕ້າການຮັບນັກສຶກສາເຂົ້າຮຽນແຕ່ລະສົກສຶກສາອີງໃສ່ຄວາມສາມາດໃນການຕອບສະໜອງຂອງ ຄະນະ ເຊັ່ນ: ສະຖານທີ່ຮຽນ, ຊັບພະຍາກອນໃນການສິດສອນ ແລະ ສະຖານທີ່ຝຶກງານ;
2. ວາງແຜນປະຕິທິນການຮຽນ-ການສອນໃນແຕ່ລະຫຼັກສູດແຕ່ລະສົກສຶກສາໃຫ້ໄປຕາມປະຕິທິນຂອງການສຶກສາ; ແລະ ປະເມີນຄວາມຮູ້ຂອງນັກສຶກສາ ໂດຍໃຊ້ Formative ແລະ summative Assesment;
3. ສ້າງແຜນການເຄື່ອນໄຫວກິດຈະກຳນອກຫຼັກສູດຂອງນັກສຶກສາຕາມແຜນການຮຽນ ຂອງຄະນະ ເປັນຕົ້ນ ໃຫ້ສຸຂະສຶກສາ, ບໍລິຈາກເລືອດ, ກິລາ, ສິນລະປະວັນນະຄະດີ, ການບໍລິຈາກເຄື່ອງຊ່ວຍສັງຄົມ, ວຽກງານວິຊາປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;
4. ຄສສ ໄດ້ສ້າງສາມະຄົມສາທາລະນະສຸກສາດລາວ ເພື່ອສ້າງເຄືອຄ່າຍ ແລະ ແຜນການເຄື່ອນໄຫວກິດຈະກຳຂອງສາມະຄົມ.

### *3.1. ໂຄງການຈຸດສຸມບູລິມະສິດ*

#### 3.1.1. ໂຄງການຮັບເອົານັກສຶກສາ

- **ຄາດໝາຍ**

1. ການຮັບນັກສຶກສາເຂົ້າຮຽນແມ່ນອີງໃສ່ຄວາມສາມາດໃນການຕອບສະໜອງຂອງຄະນະສາທາລະນະສຸກສາດ ເຊັ່ນ: ສະຖານທີ່ຮຽນ, ຊັບພະຍາກອນໃນການສິດສອນ ແລະ ສະຖານທີ່ຝຶກງານຢູ່ຊຸມຊົນ, ໂຮງງານ ແລະ ໂຮງໝໍ ເພື່ອຮັບປະກັນໃຫ້ນັກສຶກສາມີໂອກາດພຽງພໍ ໃນການສ້າງປະສົບການ ໃນການຮຽນຢ່າງມີຄຸນນະພາບ.

- **ມາດຕະການ ແລະ ວິທີການ**

1. ຈັດຕັ້ງປະຕິບັດໃນການສອບເສັງຄັດເລືອກນັກສຶກສາເຂົ້າຮຽນໃນແຕ່ລະສາຂາຫຼັກສູດທີ່ກຳນົດໄວ້;
2. ຈັດກອງປະຊຸມຕັດສິນຄະແນນຜົນການສອບເສັງຂອງນັກສຶກສາໃໝ່ ແລະ ຂໍອະນຸມັດຂໍ້ຕົກລົງຮັບນັກສຶກສາເຂົ້າຮຽນຂອງແຕ່ລະຫຼັກສູດໃນແຕ່ລະສົກສຶກສາ;
3. ຄສສ ມີແຜນການຮັບນັກສຶກສາເຂົ້າຮຽນແຕ່ລະປີໃນແຕ່ລະສາຂາວິຊາຢ່າງລະອຽດດັ່ງລຸ່ມນີ້:

* **ພາກວິຊາ ຄຸ້ມຄອງສາທາລະນະສຸກ**

1. ຫຼັກສູດປະລິນຍາໂທ ສາທາລະນະສຸກສາດ ສາຂາ ບໍລິຫານສາທາລະນະສຸກ 20 ຄົນ
2. ຫຼັກສູດປະລິນຍາຕີ ວິທະຍາສາດ ສາທາລະນະສຸກ 40 ຄົນ

* **ພາກວິຊາ ລະບາດວິທະຍາ ແລະ ຊີວະສະຖິຕິ**

1. ຫຼັກສູດປະລິນຍາໂທ ສາທາລະນະສຸກສາດ ສາຂາ ລະບາດວິທະຍາ 10 ຄົນ

* **ພາກວິຊາ ສົ່ງເສີມສຸຂະພາບ ແລະ ໂພຊະນາການ**

1. ຫຼັກສູດປະລິນຍາໂທ ສາທາລະນະສຸກສາດ ສາຂາ ໂພຊະນາການ 10 ຄົນ
2. ຫຼັກສູດປະລິນຍາໂທ ສາທາລະນະສຸກສາດ ສາຂາ ສຸຂະພາບຄອບຄົວ 10 ຄົນ

* **ພາກວິຊາ ອະນາໄມສິ່ງແວດລ້ອມ ແລະ ອະຊີວະອະນາໄມ**

1. ຫຼັກສູດປະລິນຍາໂທ ສາທາລະນະສຸກສາດ ສາຂາ ສິ່ງແວດລ້ອມ ແລະ ສຸຂະພາບແຮງງານ 10 ຄົນ

### 3.1.2. ໂຄງການຈັດຕັ້ງການຮຽນ-ການສອນ

- **ຄາດໝາຍ**

1. ຈັດຕັ້ງປະຕິບັດຫຼັກສູດປະລິນຍາໂທ ສາທາລະນະສຸກສາດ ສາຂາ ບໍລິຫານສາທາລະນະສຸກ, ສາຂາ ໂພຊະນາການ, ລະບາດວິທະຍາ, ສຸຂະພາບຄອບຄົວ, ອະນາໄມສິ່ງແວດລ້ອມ ແລະ ອາຊີວະອະນາໄມ, ຫຼັກສູດປະລິນຍາຕີ ວິທະຍາສາດ ສາທາລະນະສຸກ ແລະ ຫລັກສູດ ປະລິນຍາເອກສາທາລະນະສຸກສາດ;
2. ສ້າງລະບົບຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດການຮຽນ-ການສອນແຕ່ລະໂມດູນ ເພື່ອຮັບປະກັນຄຸນນະພາບຂອງການຮຽນ-ການສອນ;

- **ມາດຕະການ ແລະ ວິທີການ**

1. ຈັດກອງປະຊຸມປະຖົມນິເທດນັກສຶກສາ ປະລິນຍາຕີ ແລະ ຫຼັງປະລິນຍາຕີ ສາທາລະນະສຸກສາດ.
2. ຈັດຕາຕະລາງການຮຽນ-ການສອນ, ການຂຶ້ນຫ້ອງສອນຂອງນັກສຶກສາ ແລະ ຄູອາຈານ, ປະເມີນນັກສຶກສາແຕ່ລະໂມດູນ ທັງ ແບບ Formative and Summative Assessment ແຕ່ລະຫຼັກສູດ; ສັງລວມຄະແນນ ແລະ ຊົ່ວໂມງສອນຂອງອາຈານສອນໃນແຕ່ລະລາຍວິຊາ;
3. ນຳພານັກສຶກສາປະລິນຍາໂທ ສາທາລະນະສຸກສາດ 4 ສາຂາ ລົງພາກສະໜາມ ໃນນະຄອນຫຼວງ ແລະ ຕ່າງແຂວງ;
4. ຈັດພິທີມອບ-ຮັບ ປະກາສະນີຍະບັດໃຫ້ຜູ້ສຳເລັດການສຶກສາໃນແຕ່ລະສົກສຶກສາ.
5. ສຳມະນາຖອດຖອນບົດຮຽນ ການຮຽນ-ການສອນ ແລະ ຈັດຕັ້ງປະຕິບັດ ແລະ ຈັດປະຖົມນິເທດກ່ຽວກັບການລົງພາກສະໜາມຂອງນັກສຶກສາ ທັງ 4 ສາຂາ;

### 3.1.3. ໂຄງການສົ່ງເສີມ ແລະ ປ້ອງກັນສຸຂະພາບຊຸມຊົນ

- **ຄາດໝາຍ**

ສ້າງແຜນການຈັດຕັ້ງປະຕິບັດການສົ່ງເສີມ ແລະ ປ້ອງກັນສຸຂະພາບໃຫ້ແກ່ຊຸມຊົນໃນນະຄອນຫຼວງວຽງຈັນ.

- **ມາດຕະການ ແລະ ວິທີການ**

1. ຈັດກອງປະຊຸມປຶກສາຫາລືໃນການຈັດຕັ້ງປະຕິບັດວຽກງານສົ່ງເສີມ ແລະ ປ້ອງກັນສຸຂະພາບກັບຂັ້ນເມືອງ ແລະ ບ້ານ;
2. ເຜີຍແຜ່ການຈັດຕັ້ງປະຕິບັດວຽກງານສົ່ງເສີມ ແລະ ປ້ອງກັນສຸຂະພາບໃຫ້ແກ່ຊຸມຊົນ ຂັ້ນເມືອງ ແລະ ບ້ານ;
3. ຈັດຕັ້ງປະຕິບັດໂຄງການ, ຕິດຕາມປະເມີນຜົນແຕ່ລະໄລຍະຂອງໂຄງການ.

### 3.1.4. ໂຄງການຕິດຕາມຜູ້ສຳເລັດການສຶກສາ

- **ຄາດໝາຍ**

1. ສ້າງຂໍ້ກຳນົດ, ກົດລະບຽບ ແລະ ສະໜອງສິ່ງອຳນວຍຄວາມສະດວກ ອັນຈຳເປັນ ເພື່ອສ້າງເຄືອຂ່າຍ ແລະ ຄວາມສຳພັນທະມິດລະຫວ່າງອະດີດນັກສຶກສາ ກັບ ຄະນະສາທາລະນະສຸກສາດ;

- **ມາດຕະການ ແລະ ວິທີການ**

1. ສ້າງ ແລະ ປັບປຸງລະບົບຕິດຕາມຂໍ້ມູນນັກສຶກສາ ທີ່ສຳເລັດການສຶກສາໄປແລ້ວ;
2. ສ້າງສະຫະພັນສິດເກົ່າ ຂອງຄະນະ ເພື່ອສ້າງເຄື່ອຂ່າຍ ຂອງ ອະດີດນັກສຶກສາ ແລະ ເຜີຍແຜ່ທາງດ້ານວິຊາການ;
3. ສ້າງແຜນການເຄື່ອນໄຫວກິດຈະກຳພົບປະສິດເກົ່າ ແລະ ອຳນວຍຄວາມສະດວກໃຫ້ເຂົ້າເຈົ້າ ເພື່ອປະກອບສ່ວນ ໃນການເຄື່ອນໄຫວ ກິດຈະກຳນອກຫລັກສູດ.

### 3.1.5. ໂຄງການພັດທະນາຖານຂໍ້ມູນຂ່າວສານ ແລະ ຫ້ອງສະໝຸດ

- **ຄາດໝາຍ**

1. ສ້າງລະບົບຂ່າສານ ດິຈິຕອລ ຂອງ ຄ ສສ ເພື່ອ ເຜີຍແຜ່ວຽກການການຮຽນ-ການສອນ, ຫຼັກສູດ, ກິດຈະກຳ ແລະ ໂຄງການຕ່າງໆ; ເກັບກຳ, ສັງລວມ ຂໍ້ມູນສະຖິຕິຂອງນັກສຶກສາພາຍໃນຄະນະ.
2. ພັດທະນາຫ້ອງສະມຸດຄະນະ ໃຫ້ເປັນຫ້ອງສະມຸດດິຈິຕອນ ແລະ ເປັນແຫຼ່ງຄວາມຮູ້ອັນຄົບຖ້ວນ ແລະ ທັນສະ ໄໝ ໃຫ້ແກ່ນັກສຶກສາໃນຄະນະ.

- **ມາດຕະການ ແລະ ວິທີການ**

1. ສ້າງ Website ເຜີຍແຜ່ຂ່າວສານ, ຂໍ້ກຳນົດ, ນິຕິກຳ, ລະບຽບການປະເມີນຜົນການສອບເສັງ;
2. ຂຶ້ນທະບຽນເຊົ່າ port ແລະ ຄຸ້ມຄອງຮັກສາ ເວັບໄຊ ຂອງຄະນະສາທາລະນະສຸກສາດ;
3. ສ້າງຖານຂໍ້ມູນກ່ຽວກັບນັກສຶກສາ ແລະ ອະດີດນັກສຶກສາທີ່ສຳເລັດໄປແລ້ວແຕ່ລະລຸ້ນ.
4. ປັບປຸງຖານຂໍ້ມູນຫ້ອງສະມຸດສິ່ງອຳນວຍຄວາມສະດວກໃຫ້ແກ່ການຮຽນ-ການສອນ;
5. ຈັດອົບຮົມການນຳໃຊ້ ຖານຂໍ້ມູນຫ້ອງສະມຸດ ເພື່ອສືບຄົ້ນ ປຶ້ມຕຳລາຕ່າງໆ ແລະ ວາລະສານສາກົນ;

**3.1.6. ໂຄງການສ້າງ ສະມາຄົມ ສາທາລະນະສຸກສາດ**

- **ຄາດໝາຍ**

1. ສ້າງເຄືອຄ່າຍ ຂອງນັກສາທາລະນະສຸກ ລວມທັງຜູ້ປະກອບການຕ່າງໆທີ່ເຮັດວຽກກ່ຽວຂ້ອງກັບສາທາລະນະສຸກທົ່ວປະເທດ.

- **ມາດຕະການ ແລະ ວິທີການ**

1. ຈັດກອງປະຊຸມຖອດຖອນການຈັດຕັ້ງປະຕິບັດຂອງສາມະຄົມໃນໄລຍະ1 ປີຜ່ານມາ;
2. ຈັດກອງປະຊຸມແລກປ່ຽນວິຊາການສາທາລະນະສຸກ ແລະ ສາຂາວິຊາອື່ນໆ ໂດຍຜ່ານສື່ອອນລາຍຫຼືກອງປະຊຸມໜ້າຕໍ່ໜ້າ;
3. ໂຄສະນາຜ່ານສື່ອອນລາຍ ເພື່ອຂົນຂວາຍເອົານັກວິຊາການສາທາລະນະສຸກ ແລະ ສາຂາວິຊາອື່ນໆມາເປັນສະມາຊິກສະມາຄົມ.

## 4. ແຜນງານພັດທະນາຫຼັກສູດ

- **ທິດທາງໜ້າທີ່**

  ຄະນະສາທາລະນະສຸກສາດມີທິດທາງ ພັດທະນາຫຼັກສູດລະດັບປະລິນຍາຕີ ແລະ ຫລັງມະຫາວິທະຍາໄລ, ປື້ມຄູ່ມືການຮຽນ-ການສອນ ແລະ ຕຳລາເພື່ອຮັບໃຊ້ການຮຽນ-ການສອນໃຫ້ໄດ້ຄຸນນະພາບທຽບເທົ່າ ສາກົນ ແລະ ພາກພື້ນ.

- **ຄາດໝາຍ**

1. ທົບທວນຫຼັກສູດເກົ່າ ໂດຍອີງໃສ່ມາດຖານຂອງກະຊວງສຶກສາ ແລະ ກິລາ.
2. ສ້າງຫຼັກສູດໃຫມ່ລະດັບປະລິນຍາຕີ, ລະດັບປະລິນຍາໂທສາຂາ ສຸຂະພາບຄອບຄົວ; ສາຂາ ອານາໄມສິ່ງແວດລ້ອມ ແລະ ສຸຂະພາບແຮງງານ, ສາຂາ ບໍລິຫານໂຮງໝໍ ແລະ ຫລັກສູດປະລິນຍາເອກ ສາທາລະນະສຸກສາດ ໃຫ້ສອດຄ່ອງກັບຄວາມຕ້ອງການ ຂອງຂະແໜງການສາທາລະນະສຸກ.
3. ພັດທະນາຫຼັກສູດອົບຮົມໄລຍະສັ້ນ ເພື່ອຍົກສູງຄວາມຮູ້, ຄວາມສາມາດຂອງອາຈານ ແລະ ພະນັກງານ ໃນແຕ່ລະສາຂາວິຊາ.
4. ຄະນະສາທາລະນະສຸກສາດມີແຜນພັດທະນາປຶ້ມຄູ່ມື ແລະ ຕຳລາການຮຽນ-ການສອນ ເພື່ອຮັບໃຊ້ການຮຽນ-ການສອນ ໃຫ້ໄດ້ມາດຕະຖານສາກົນ ແລະ ພາກພື້ນ.

***4.1. ໂຄງການຈຸດສຸມບູລິມະສິດ***

**4.1.1. ໂຄງການທົບທວນຫຼັກສູດ**

- **ຄາດໝາຍ**

1. ທົບທວນຫລັກສູດເກົ່າ ໂດຍອີງໃສ່ ຂີດຄວາມສາມາດ ແລະ ຜົນປະເມີນຄວາມຕ້ອງການໃນການປັບປຸງຫຼັກສູດ.

- **ມາດຕະການ ແລະ ວິທີການ**

1. ສຳມະນາ ການປັບປຸງເນື້ອໃນຫຼັກສູດຂອງແຕ່ລະສາຂາວິຊາໃຫ້ໄປຕາມຂອບວຸດທິການສຶກສາແຫ່ງຊາດໂດຍກຳນົດຄວາມຮູ້, ຄວາມສາມາດ, ຄວາມຊຳນານງານ, ການນຳໃຊ້ ແລະ ພາກປະຕິບັດຕົວຈິງຕາມແຕ່ລະລະດັບສາຂາວິຊາ.
2. ອົບຮົມເພື່ອດັດແກ້ເນື້ອຫາລາຍລະອຽດຂອງວິຊາ ເພື່ອຂໍອະນຸມັດຈາກກະຊວງສຶກສາທິການ ແລະ ກິລາ.

#### 4.1.2. ໂຄງການສ້າງຫຼັກສູດໃໝ່

- **ຄາດໝາຍ**

1. ປະເມີນຄວາມຕ້ອງການທີ່ຈຳເປັນໃນການສ້າງຫລັກສູດໃໝ່ ໂດຍເຮັດການປະເມີນຄວາມຕ້ອງການ ແລະ ພັດທະນາຫຼັກສູດໃໝ່.

- **ມາດຕະການ ແລະ ວິທີການ**

1. ແຕ່ງຕັ້ງຄະນະກຳມະການສ້າງຫລັກສູດ ປະລິນຍາໂທສາທາລະນະສຸກສາດ ສາຂາ ບໍລິຫານໂຮງໝໍ ແລະ ຫລັກສູດປະລິນຍາເອກສາທາລະນະສຸກສາດ;
2. ສຳມະນາ ແລະ ດຳເນີນຄວາມຕ້ອງການຈັດຕັ້ງກອງປະຊຸມນຳສະເໜີໂຄງຮ່າງຫລັກສູດ ໃຫ້ຄະນະກຳມະການພາຍໃນ ແລະ ພາຍນອກ;
3. ສຳມະນາກອງປະຊຸມ ເພື່ອສະເໜີເນື້ອໃນຫຼັກສູດຂອງແຕ່ລະສາຂາວິຊາ ແລະການແຜນການຮຽນການສອນລະອຽດ ແລະ ຂໍອະນຸມັດຮັບຮອງຫລັກສູດ.

#### 4.1.3. ໂຄງການສ້າງຫຼັກສູດອົບຮົມໄລຍະສັ້ນ

- **ຄາດໝາຍ**

1. ຄສສ ສ້າງ ແລະ ພັດທະນາການສ້າງຫລັກສູດຝຶກອົບຮົມ ໄລຍະສັ້ນເພື່ອພັດທະນາວິຊາຊີບຂອງພະນັກງານສາທາລະນະສຸກ.

- **ມາດຕະການ ແລະ ວິທີການ**

1. ແຕ່ງຕັ້ງຄະນະກຳມະການຮັບຜິດຊອບຫລັກສູດໄລຍະສັ້ນ (ໂພຊະນາການ, ລະບາດວິທະຍາ, ອານາໄມສິ່ງແວດລ້ອມ ແລະ ອາຊີວະອະນາໄມ, ບໍລິຫານສາທາລະນະສຸກ).
2. ສຳມະນານຳສະເໜີໂຄງຮ່າງຫລັກສູດອົບຮົມໄລຍະສັ້ນໃຫ້ຄະນະກຳມະການພາຍໃນ;
3. ສຳມະນາເພື່ອສະເໜີເນື້ອໃນຫຼັກສູດອົບຮົມໄລຍະສັ້ນຂອງແຕ່ລະສາຂາວິຊາໃຫ້ໄປຕາມຂອບວຸດທິການສຶກສາ ໂດຍກຳນົດຄວາມຮູ້, ຄວາມສາມາດ, ຄວາມຊຳນານງານ, ການນຳໃຊ້ ແລະ ພາກປະຕິບັດຕົວຈິງຕາມແຕ່ລະລະດັບສາຂາວິຊາ; ແລະ ຂໍອະນຸມັດຮັບຮອງຫລັກສູດອົບຮົມໄລຍະສັ້ນຈາກຄະນະບໍດີ ຄະນະສາທາລະນະສຸກສາສາດ, ແລະ ອະທິການ ມວສ.

#### 4.1.4. ໂຄງການສ້າງຄູ່ມືການຮຽນ-ການສອນ ແລະ ຕຳລາຮຽນ

- **ຄາດໝາຍ**

1. ພັດທະນາຄູ່ມືການຮຽນ-ການສອນ ແລະ ປຶ້ມຕຳລາຮຽນຫລັກສູດປະລິນຍາຕີວິທະຍາສາດສາທາລະນະສຸກ; ປ. ໂທ ສາທາລະນະສຸກສາດສາຂາ ສາຂາບໍລິຫານສາທາລະນະສຸກ; ສາຂາໂພຊະນາການ; ສາຂາ ສຸຂະພາບຄອບຄົວ; ສາຂາ ລະບາດວິທະຍາ; ສາຂາອະນາໄມສິ່ງແວດລ້ອມ ແລະ ສຸຂະພາບແຮງງານ; ປະລິນຍເອກສາທາລະນະສຸກສາດ , ເສດຖະສາດສາທາລະນະສຸກ

- **ມາດຕະການ ແລະ ວິທີການ**

1. ແຕ່ງຕັ້ງຄະນະກຳມະການຮັບຜິດຊອບຂຽນ, ກວດແກ້ປຶ້ມຄູ່ມືການຮຽນ-ການສອນ ແລະ ຕຳລາຮຽນແຕ່ລະສາຂາ;
2. ສຳມະນານຳສະເໜີໂຄງຮ່າງປຶ້ມຄູ່ມືການຮຽນ-ການສອນ, ປຶ້ມຄູ່ມືຫ້ອງປະຕິບັດການ ແລະ ຕຳລາຮຽນ ໃຫ້ຄະນະກຳມະການພາຍໃນ ແລະ ພາຍນອກ;
3. ສຳມະນາ ເພື່ອສະເໜີເນື້ອໃນປຶ້ມຄູ່ມືການຮຽນ-ການສອນ ແລະ ຕຳລາຮຽນຂອງແຕ່ລະສາຂາວິຊາ
4. ຂໍອະນຸມັດຮັບຮອງປຶ້ມຄູ່ມືການຮຽນ-ການສອນ ແລະ ຕຳລາຮຽນຈາກຄະນະບໍດີຄະນະສາທາລະນະສຸກສາດ ແລະ ກະຊວງຖະແຫລ່ງຂ່າວ ແລະ ວັດທະນະທຳ.

## 5. ແຜນງານ ພັດທະນາຄູອາຈານ

- **ທິດທາງໜ້າທີ່**

  ຈັດຕັ້ງປະຕິບັດນະໂຍບາຍພັດທະນາຄູ-ອາຈານ ແລະ ພະນັກງານໃຫ້ມີຄວາມຮູ້, ຄວາມສາມາດໃນການສິດສອນ ແລະ ຍົກສູງທັກສະໃນການສິດສອນ; ມີແບບແຜນໃນສິດສອນ; ມີກຸ່ມແລກປ່ຽນທັກສະທາງດ້ານວິຊາການກ່ຽວກັບວິທີການຮຽນ-ການສອນ ລະຫວ່າງຄູອາຈານຜູ້ໜຸ່ມນ້ອຍ ແລະ ຜູ້ຊົງຄຸນນະວຸດນະວຸດທິ ແລະກັບສະຖາບັນຕ່າງໆທັງພາຍໃນ ແລະ ຕ່າງປະເທດ.

- **ຄາດໝາຍ**

1. ພະນັກງານຄູໄດ້ຮັບການອົບຮົມຄູວິທະຍາກ່ຽວກັບທັກສະການຮຽນການສອນແບບໃໝ່ຢ່າງໜ້ອຍ 2 ຄັ້ງ/ປີ
2. ໄດ້ຮັບການອົບຮົມດ້ານທາງດ້ານວິຊາການກ່ຽວກັບວິຊາສະເພາະຢ່າງໜ້ອຍ 1 ຄັ້ງ/ປີ/ພາກ
3. ພະນັກງານຄູຂັ້ນປະລິນຍາໂທຂອງແຕ່ລະພາກວິຊາໄດ້ໄປສຶກສາຕໍ່ປະລິນຍາເອກໃນສາຂາສະເພາະຂອງຕົນຢ່າງໜ້ອຍ ພາກລະ 1 ທ່ານໃນ 5 ປີ.
4. ພະນັກງານຄູໄດ້ຮັບການອົບຮົມທາງດ້ານວິຊາການແບບຕໍ່ເນື່ອງກ່ຽວກັບທັກສະສະເພາະຂອງວຽກສາທາລະນສຸກຢ່າງໜ້ອຍປີລະຄັ້ງ.

### *5.1. ໂຄງການຈຸດສຸມບູລິມະສິດ*

#### 5.1.1. ໂຄງການການພັດທະນາທັກສະການສອນແບບໃໝ່

- **ຄາດໝາຍ**

1. ການປັບປຸງຂີດຄວາມສາມາດຂອງຄູໃນການສິດສອນ ເພື່ອການຕອບສະໜອງ ແລະ ບັນລຸຕາມຈຸດປະສົງການຮຽນ-ການສອນໃນຫລັກສູດ.

- **ມາດຕະການ ແລະ ວິທີການ**

1. ຈັດການຝຶກອົບຮົມຄູວິທະຍາ ໃຫ້ແກ່ພະນັກງານຄູອາຈານໃຫ້ໄດ້ຢ່າງໜ້ອຍໃຫ້ໄດ້ 80% ຂອງພະນັກງານຄູທັງໝົດ.
2. ຈັດການຝຶກອົບຮົມກ່ຽວກັບ ຂີດຄວາມສາມາດທາງດ້ານສາທາລະນະສຸກ (Public Health Competency)ໃຫ້ແກ່ພະນັກງານຄູອາຈານຢ່າງໜ້ອຍ ປີລະຄັ້ງ.
3. ສຳມະນາທັກສະໃນການນຳໃຊ້ Digital Literacy, Digital Pedagogy ເຂົ້າໃນວິທີການສິດສອນ ແລະ ເສີມສ້າງທັກສະການສື່ສານດ້ານພາສັງອັງກິດ.

#### 5.1.2. ໂຄງການຍົກລະດັບວິຊາສະເພາະທາງດ້ານວິຊາການ

- **ຄາດໝາຍ**

  ສ້າງພະນັກງານສາທາລະນະສຸກ ລະດັບປະລິນຍາຕີ ຈຳນວນ 02 ທ່ານ, ລະດັບປະລິນຍາໂທ ຈຳນວນ 02 ທ່ານ, ລະດັບປະລິນຍາເອກ ຈຳນວນ 03 ທ່ານ.

- **ມາດຕະການ ແລະ ວິທີການ**

1. ສົ່ງພະນັກງານທີ່ມີລະດັບວິຊາສະເພາະຂັ້ນອະນຸປະລິນຍາ ເພື່ອໄປຮຽນຕໍ່ລະດັບປະລິນຍາຕີ ສາຂາບໍລິຫານສາທາລະນະສຸກ.
2. ສົ່ງພະນັກງານທີ່ມີລະດັບວິຊາສະເພາະຂັ້ນປະລິນຍາຕີ ເພື່ອໄປຮຽນຕໍ່ລະດັບປະລິນຍາໂທ ບໍລິຫານການສຶກສາ ແລະ ສາທາລະນະສຸກສິ່ງແວດລ້ອມ.
3. ສົ່ງພະນັກງານທີ່ມີລະດັບວິຊາສະເພາະຂັ້ອະນຸປະລິນຍາໂທ ເພື່ອໄປຮຽນຕໍ່ລະດັບປະລິນຍາເອກ

#### 5.1.3. ໂຄງການຈັດຕັ້ງປະຕິບັດການອົບຮົມແບບຕໍ່ເນື່ອງ

- **ຄາດໝາຍ**

1. ສ້າງຄວາມເຂັ້ມແຂງທາງດ້ານວິຊາການໃຫ້ແກ່ພະນັກງານພາກວິຊາບໍລິຫານຄຸ້ມຄອງສາທາລະນະສຸກ.

2. ສ້າງຄວາມເຂັ້ມແຂງທາງດ້ານທັກສະ ແລະ ຄວາມເຂົ້າໃຈໃນພາກປະຕິບັດການຕົວຈິງກ່ຽວກັບວຽກງານລະບາດວິທະຍາແລະຊີວະສະຖິຕິ.
3. ສ້າງຄວາມເຂັ້ມແຂງທາງດ້ານວິຊາການກ່ຽວກັບວຽກງານໂພຊະນາການ ເຊັ່ນ ໂພຊະນາການດ້ານຄຼີນິກ, ໂພຊະນາການບຳບັດ ແລະ ໂພຊະນາການສຸຂະພາບໄວໜຸ່ມ.
4. ສ້າງຄວາມເຂັ້ມແຂງທາງດ້ານວິຊາການກ່ຽວກັບວຽກງານອະນາໄມສິ່ງແວດລ້ອມ, ແລະ ການປ່ຽນແປງດິນຟ້າອາກາດ ແລະ ອາຊີວະອະນາໄມ ໃຫ້ແກ່ພະນັກງານຄູອາຈານ.

- **ມາດຕະການ ແລະ ວິທີການ**

1. ອົບຮົມຫົວຂໍ້ບໍລິຫານໂຮງໝໍ, ຫົວຂໍ້ການບໍລິຫານຊັບພະຍາກອນມະນຸດ, ຫົວຂໍ້ເສດຖະສາດ-ການເງິນ ວຽກງານສາທາລະນະສຸກ, ຫົວຂໍ້ ການພັດທະນາການຂະຫຍາຍຕາໜ່າງວຽກງານຮັກສາສຸຂະພາບຂັ້ນຕົ້ນ ແລະ ອົບຮົມຫົວຂໍ້ການວິເຄາະນະໂຍບາຍສຸຂະພາບ.
2. ອົບຮົມກ່ຽວກັບໂພຊະນາການດ້ານຄຼີນິກ, ໂພຊະນາການບຳບັດ ແລະ ໂພຊະນາກ່ຽວກັບສຸຂະພາບໄວໜຸ່ມ.
3. ສຳມະນາທັກສະການນຳໃຊ້ໂປຼແກມຕ່າງໆ ເຊັ່ນ ສະຕາຕ້າ, ເອສພີເອສໆ, ອຣາ ... ໃນການວິເຄາະຂໍ້ມູນແບບປະລິມານ ແລະ ສຳມະນາທັກສະ ແລະ ການປະຕິບັດຕົວຈິງໃນການວິເຄາະຂໍ້ມູນແບບຄຸນນະພາບ
4. ສຳມະນາທັກສະການໃຫ້ຄຳປຶກສາແກ່ນັກສຶກສາໃນການເຮັດບົດວິທະຍານິພົນ ໂດຍການແລກປ່ຽນບົດຮຽນລະຫວ່າງຄູອາຈານຜູ້ໜຸ່ມນ້ອຍ ແລະ ຜູ້ມີຄຸນນະວຸດ
5. ອົບຮົມກ່ຽວກັບການປ່ຽນແປງສະພາບດິນຟ້າອາກາດ, ກ່ຽວກັບສຸຂະອະນາໄມ ແລະ ການປ່ຽນແປງສະພາບດິນຟ້າອາກາດ, ກ່ຽວກັບຜົນກະທົບຂອງມົນລະພິດທາງອາກາດ, ແລະ ທາງສຽງ.

## 6. ແຜນງານ ພັດທະນາດ້ານໂຄງລ່າງພື້ນຖານ, ອຸປະກອນ ແລະ ສິ່ງອຳນວຍຄວາມສະດວກ

- **ທິດທາງໜ້າທີ່**

ຄສສ ມີແຜນອອກແບບ, ບູລະນະສ້ອມແປງ, ປັບປຸງ, ຫ້ອງຄະນະບໍດີ, ຫ້ອງພາກວິຊາ, ສະຖານທີ່ຮັບໃຊ້ບໍລິຫານ, ອາຄານຮຽນຂອງນັກສຶກສາ, ຫ້ອງປະຕິບັດການຕົວຈິງ, ຫ້ອງສະໝຸດ, ພ້ອມທັງປະກອບອຸປະກອນ ແລະ ສິ່ງອຳນວຍຄວາມສະດວກໃຫ້ແກ່ ການຮຽນ-ການສອນ ເພື່ອເປັນການຍົກສູງປະສິດທິພາບ ແລະ ຄຸນນະພາບຂອງການສຶກສາ ແລະ ການຄົ້ນຄວ້າວິທະຍາສາດ.

- **ຄາດໝາຍ**

1. ອອກແບບຕຶກອາຄານ 4 ຊັ້ນຂອງ ຄະນະສາທາລະນະສຸກສາດ ວິທະຍາເຂດດົງໂດສີ.
2. ສ້ອມແປງບູລະນະໂຄງລ່າງພື້ນຖານຂອງຄະນະສາທາລະນະສຸກສາດ ຫ້ອງຄະນະບໍດີ, ຫ້ອງພາກວິຊາ, ຫ້ອງຮຽນນັກສຶກສາ, ຫ້ອງປະຕິບັດການຕົວຈິງ, ຫ້ອງສະມຸດເພື່ອໃຫ້ນັກສຶກສານຳໃຊ້ຢ່າງພຽງພໍ.

### *6.1 ໂຄງການຈຸດສຸມບູລິມະສິດ*

#### 6.1.1. ໂຄງການກໍ່ສ້າງພື້ນຖານໂຄງລ່າງ

- **ຄາດໝາຍ**

1. ອອກແບບ, ສ້ອມແປງຫ້ອງຄະນະບໍດີ, ພາກວິຊາ ແລະ ຫ້ອງການບໍລິຫານ, ຫ້ອງຮຽນ, ຫ້ອງປະຕິບັດການເພື່ອຮັບໃຊ້ການຮຽນ-ການສອນໃຫ້ໄດ້ຮັບປະສິດທິຜົນ ແລະ ປະສິດທິພາບ.

- **ມາດຕະການ ແລະ ວິທີການ**

1. ຂຶ້ນແຜນງົບປະມານລັດຖະບານເພື່ອອອກແບບປຸກສ້າງ-ສ້ອມແປງພື້ນຖານໂຄງລ່າງຕຶກອາຄານ ຄະນະສາທາລະນະສຸກສາດ, ມະຫາວິທະຍາໄລ ວິທະຍາສາດສຸຂະພາບ ຢູ່ວິທະຍາເຂດ ດົງໂດສີ ໃຫ້ສຳເລັດຕາມຄາດໝາຍ.
2. ຂຶ້ນແຜນງົບປະມານໃນການສ້ອມແປງອາຄານສະຖານທີ່, ຫ້ອງຄະນະບໍດີ, ພາກວິຊາ ແລະ ຫ້ອງການບໍລິຫານ ແລະ ຫ້ອງຮຽນ.

**6.1.2. ໂຄງການສ້າງຫ້ອງປະຕິບັດການດ້ານ ໂພຊະນາການ**

- **ຄາດໝາຍ**

1. ຈັດຫາຫ້ອງປະຕິບັດການ ແລະ ອຸປະກອນໃນການສິດສອນທາງດ້ານໂພຊະນາການບຳບັດ ແລະ ການວັດແທກຮ່າງກາຍ.

- **ມາດຕະການ ແລະ ວິທີການ**

1. ສະໜອງອຸປະກອນເຄື່ອງທົດລອງປະກອບເປັນຕົວຢ່າງໃນການຮຽນ-ການສອນ ດ້ານໂພຊະນາການບຳບັດ ແລະ ການວັດແທກຮ່າງກາຍ, ແລັບທອບ ແລະ ໂປຣແກຼມ Immucal ແລະ ແບບຈຳລອງອາຫານ (Food Model), ແລະ ເຄື່ອງມືໃນການກວດຫາ ອາການເລືອດຈາງ, ໄອໂອດີນ, ໂຄເຮສໂຕໂຣນ ແລະ ອຸປະກອນຕ່າງໆ ໃນການຮຽນການສອນ.
2. ບຳລຸງຮັກສາ ຫ້ອງປະຕິບັດການດ້ານໂພຊະນາການບຳບັດ ແລະ ການວັດແທກຮ່າງກາຍ.

**6.1.3. ໂຄງການສ້າງຫ້ອງປະຕິບັດການດ້ານ ອະນາໄມສິ່ງແວດລ້ອມ ແລະ ອາຊີວະອະນາໄມ**

- **ຄາດໝາຍ**

1. ຈັດຫາຫ້ອງປະຕິບັດການ ແລະ ປະກອບອຸປະກອນໃນການສິດສອນທາງດ້ານສິ່ງແວດລ້ອມ ແລະ ອາຊີວະອະນາໄມ.
2. ປະກອບອາຈານສອນ ແລະ ນຳໃຊ້ຫ້ອງປະຕິບັດການດ້ານສິ່ງແວດລ້ອມ ແລະ ອາຊີວະອະນາໄມ.

- **ມາດຕະການ ແລະ ວິທີການ**

1. ຈັດຊື້ອຸປະກອນກວດສອບຄຸນະພາບນ້ຳ, ອາຫານ, ອາກາດ, ເຄື່ອງວັດແທກສຽງ, ແສງ ແລະ ຝຸ່ນ ປະກອບເຂົ້າໃນການຮຽນ-ການສອນ.
2. ແລະ ນຳພາ ນັກສຶກສາເຮັດການປະຕິບັດຕົວຈິງ.
3. ບຳລຸງຮັກສາ ຫ້ອງປະຕິບັດການດ້ານອະນາໄມສິ່ງແວດລ້ອມ ແລະ ອາຊີວະອະນາໄມ.

## 7. ແຜນງານສົ່ງເສີມການຄົ້ນຄ້ວາວິທະຍາສາດ ແລະ ການໃຫ້ບໍລິການວິຊາການ

- **ທິດທາງໜ້າທີ່**

  ຄສສ ມີນະໂຍບາຍສົ່ງເສີມໃຫ້ພະນັກງານຄູ-ອາຈານ ແລະ ນັກສຶກສາ ເຮັດການຄົ້ນຄວ້າວິທະຍາສາດ, ເຂົ້າເຖິງ ແລະ ນຳໃຊ້ຂໍ້ມູນຂ່າວສານວິທະຍາສາດ, ມີການຊຸກຍູ້ ແລະ ສົ່ງເສີມ ໃຫ້ຄູອາຈານ ແລະ ນັກສຶກສາ ໃຫ້ການບໍລິການທາງດ້ານວິຊາການແກ່ສັງຄົມ.

- **ຄາດໝາຍ**

1. ສ້າງນັກຄົ້ນຄວ້າໃຫ້ມີຄວາມສາມາດໄດ້ 1/3 ຂອງອາຈານສາມາດເຮັດການຄົ້ນຄວ້າວິທະຍາສາດໄດ້; ພ້ອມ ທັງສ້າງຄວາມຮ່ວມມື ແລະ ເຄືອຄ່າຍການຄົ້ນຄວ້າກັບອົງການຈັດຕັ້ງຕ່າງໆທັງ ພາກລັດ, ເອກະຊົນ ແລະ ອົງການຈັດຕັ້ງສາກົນ;
2. ຄູອາຈານ ແລະ ນັກສຶກສາພາຍໃນ ຄສສ ສາມາດໃຫ້ການບໍລິການທາງດ້ານວິຊາການແກ່ສັງຄົມ ເປັນປົກກະຕິ.

### *7.1. ໂຄງການຈຸດສຸມບູລິມະສິດ*

**7.1.1. ໂຄງການສົ່ງເສີມການຄົ້ນຄວ້າວິທະຍາສາດດ້ານສາທາລະນະສຸກ**

- **ຄາດໝາຍ**

1. ສົ່ງເສີມການຄົ້ນຄ້ວາວິທະຍາສາດໃຫ້ແກ່ພະນັກງານ ແລະ ນັກສຶກສາ ໂດຍພັດທະນາໂຄງຮ່າງການຄົ້ນຄ້ວາໃຫ້ ໄດ້ຢ່າງໜ້ອຍ 3 ໂຄງການຕໍ່ປີ.

- **ມາດຕະການ ແລະ ວິທີການ**

1. ຈັດກອງປະຊຸມເພື່ອລະດົມສະໝອງໃນການຈັດບຸລະມະສິດຫົວຂໍ້ການຄົ້ນຄ້ວາແຕ່ລະສາຂາວິຊາ ໂດຍເຊີນຜູ້ຊົງຄຸນນະວຸດທິທາງດ້ານການຄົ້ນຄ້ວາແຕ່ລະສາຂາວິຊາ ຢ່າງໜ້ອຍ 1 ຄັ້ງ/ປີ;

2. ສຳມະນາການຈັດກຸ່ມການຄົ້ນຄວ້າຂອງແຕ່ລະຂົງເຂດເຊັ່ນ: ແມ່ ແລະ ເດັກ/ສຸຂະພາບຈະເລີນພັນ, ໂພຊະນາ ການ , ສຸຂະພາບສິ່ງແວດລ້ອມ, ການປ່ຽນແປງດິນຟ້າອາກາດ, ພະຍາດບໍ່ຕິດຕໍ່ ແລະ ພະຍາດຕິດຕໍ່ 2 ຄັ້ງ/ປີ;
3. ພັດທະນາໂຄງການຄົ້ນຄ້ວາວິທະຍາສາດໃນແຕ່ລະພາກວິຊາໃຫ້ໄດ້ 1 ໂຄງການຕໍ່ປີຕໍ່ ໂດຍຊອກຫາແຫ່ງທືນ.

#### 7.1.2. ໂຄງການເຜີຍແຜ່ ແລະ ຕີພິມ

- **ຄາດໝາຍ**

1. ສ້າງວາລະສານສາທາລະນະສຸກ ແລະ ບົດຄວາມສາທາລະນະສຸກ;
2. ຕີພິມ ແລະ ເຜີຍແຜ່ບົດຄົ້ນຄວ້າ ຢູ່ພາຍໃນປະເທດ ແລະ ສາກົນ ຂອງອາຈານ ແລະ ນັກສຶກສາແຕ່ລະພາກວິຊາ.

- **ມາດຕະການແລະ ວິທີການ**

1. ອົບຮົມເງື່ອນໄຂການທົບທວນວາລະສານໃຫ້ຄະນະກຳມະການຜູ້ທົບທວນວາລະສານ 2 ຄັ້ງ/ປີ;
2. ຈັດພິມວາລະສານສາທາລະນະສຸກ ຂອງຄະນະສາທາລະນະສຸກສາດ ແລະ ເຜີຍແຜ່ໃຫ້ແກ່ສັງຄົມ 1 ເຫຼັ້ມ/ປີ;
3. ຈັດພິມປື້ມສັງລວມບົດຄວາມຂອງນັກສຶກສາປະລິນຍາ ໂທສາຂາໂພຊະນາການ, ລະບາດວິທະຍາ, ບໍລິຫານ ສາທາລະນະສຸກ, ແລະ ສຸຂະພາບຄອບຄົວ 1 ເຫຼັ້ມ/ປີ;
4. ຄູອາຈານໄດ້ຕີພິມເຜີຍແຜ່ບົດຄົ້ນຄ້ວາວິທະຍາສາດສາທາລະນະສຸກເຂົ້າໃນວາລະສານທັງພາຍ ແລະ ຕ່າງປະ ເທດ 1 ບົດຄວາມ/ປີ;
5. ຈັດກອງປະຊຸມວິຊາການເພື່ອເຜີຍແຜ່ບົດຄົ້ນຄ້ວາໃຫ້ອາຈານ ແລະ ນັກສຶກສາ 1 ຄັ້ງ/ປີ;
6. ຊຸກຍູ້ໃຫ້ອາຈານ ແລະ ນັກສຶກສາເຂົ້າຮ່ວມກອງປະຊຸມວິທະຍາສາດ ເຊັ່ນ ສາທາລະນະສຸກສາດ, ໂພຊະນາການ, ລະບາດວິທະຍາ, ສຸຂະພາບຄອບຄົວ ແລະ ສິ່ງແວດລ້ອມເພື່ອສຸຂະພາບ 1-2 ຄັ້ງ/ປີ;

#### 7.1.3. ໂຄງການບໍລິການວິຊາການແກ່ສັງຄົມ

- **ຄາດໝາຍ**

1. ເຜີຍແຜ່ຄວາມຮູ້ກ່ຽວກັບສຸຂະອານາໄມ, ພຶດຕິກຳຮັກສາສຸຂະພາບ, ໂພຊະນາການ ໃຫ້ແກ່ສັງຄົມເພື່ອໃຫ້ມີ ການ ປ່ຽນແປງພຶດຕິກຳຮັກສາສຸຂະພາບ ແລະ ສົ່ງເສີມສຸຂະພາບຂອງພໍ່ແມ່ປະຊາຊົນໃຫ້ດີຂຶ້ນ.

- **ມາດຕະການ ແລະ ວິທີການ**

1. ໃຫ້ຄູອາຈານ ແລະ ນັກສຶກສາ ໃຫ້ບໍລິການແກ່ສັງຄົມ ແລະ ຄົນໃນຊຸມຊົນ ເຊັ່ນ ການກວດກັ່ນຕອງພະຍາດບໍ່ ຕິດຕໍ່, ໂພຊະນາການແມ່ ແລະ ເດັກ, ແລະ ກິດຈະກຳອື່ນລົງສູ່ຊຸມຊົນໂດຍມີສ່ວນຮ່ວມຈາກຊຸມຊົນ ໃນແຕ່ ລະ ຫຼັກສູດຢ່າງໜ້ອຍ 1 ຄັ້ງ/ຫຼັກສູດຕໍ່ປີ
2. ພັດທະນາໃຫ້ສຸຂະສຶກສາໃຫ້ຊຸມ ແລະ ຈັດພິມວາລະສານ, ແຜນພັບ ແລະ ສື່ໂຄສະນາກ່ຽວກັບການປ້ອງກັນ ແລະ ຮັກສາສຸຂະພາບ ໃນແຕ່ລະພາກວິຊາ ຢ່າງໜ້ອຍ 1 ຄັ້ງ/ຫຼັກສູດ
3. ເຜີຍແຜ່ຂໍ້ມູນກ່ຽວກັບການລະບາດຂອງພະຍາດ ແລະ ວິທີການກັນພະຍາດ ແລະ ການຮັກສາສຸຂະພາບໃຫ້ ກັບຄົນ ໃນຊຸມຊົນ ໃຫ້ໄດ້ 1 ຄັ້ງ/ປີ

## 8. ແຜນງານລະບົບປະກັນຄຸນນະພາບພາຍໃນ ແລະ ພາຍນອກ

- **ທິດທາງໜ້າທີ່**

ລະບົບປະກັນຄຸນນະພາບຂອງ ຄສສ ເປັນການຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນຕາມມາດຕະຖານການປະກັນຄຸນ ນະພາບຂອງສະຖານການສຶກສາສາທາລະນະສຸກ ທີ່ໄດ້ກຳນົດອອກມາ ເພື່ອເຮັດໃຫ້ສະຖາການສຶກສາມີຄຸນນະພາບ ການຮຽນ-ການສອນ ໃກ້ຄຽງກັບພາກພື້ນ ແລະ ສາກົນ.

- **ຄາດໝາຍ**

1. ຄສສ ມີລະບົບປະກັນຄຸນນະພາບພາຍໃນ ເພື່ອພັດທະນາຄຸນະພາບການສຶກສາ ຕາມນະໂຍບາຍແຜນຍຸດທະສາດ ໃນການພັດທະນາສະຖານການສຶກສາວິຊາຊີບດ້ານສາທາລະນະສຸກ.

2. ກຽມຄວາມພ້ອມເພື່ອປະເມີນຄຸນນະພາບພາຍນອກ ຊຶ່ງປະຕິບັດຕາມເງື່ອນໄຂ ແລະ ມາດຕະຖານຄຸນນະພາບຂອງສະຖານການສຶກສາສາທາລະນະສຸກ ເພື່ອໃຫ້ເປັນການຕອບສະໜອງ ໃຫ້ແກ່ການປັບປຸງຄຸນນະພາບ ແລະ ສ້າງຄວາມໝັ້ນໃຈ.

*8.1 ໂຄງການຈຸດສຸມບຸລິມະສິດ ແລະ ຄາດຄະເນງົບປະມານ*

**8.1.1. ໂຄງການສ້າງລະບົບປະກັນຄຸນນະພາບພາຍໃນ**

- **ຄາດໝາຍ**

  ສົ່ງເສີມ, ປັບປຸງ ແລະພັດທະນາໜ່ວຍປະກັນຄຸນນະພາບພາຍໃນຂອງຄະນະ ໃຫ້ເຂັ້ມແຂງ;

- **ມາດຕະການ ແລະ ວິທີການ**

1. ອົບຮົມເພື່ອຜັນຂະຫຍາຍມາດຕະຖານຄຸນນະພາບ ແລະວາງແຜນຈັດຕັ້ງປະຕິບັດວຽກງານປະກັນຄຸນນະພາບພາຍໃນ.
2. ຈັດຕັ້ງເຜີຍແຜ່ແຜນການ ຂອງວຽກງານປະກັນຄຸນນະພາບ ໃຫ້ແກ່ພະນັກງານ ຄູ-ອາຈານ ນັກສຶກສາ ໃຫ້ມີຄວາມຮູ້ ແລະຄວາມເຂົ້າໃຈ.
3. ຈັດຕັ້ງສັງລວມເຂົ້າຖານຂໍ້ມູນຂອງແຕ່ລະມາດຕະຖານຫຼືໂຕຊີ້ບອກ ເພື່ອເກັບກໍາຮັກສາ.
4. ຈັດຕັ້ງການເຝິກອົບຮົມວິທີການ ແລະ ແຜນການໃນການປະເມີນຕົນເອງໃຫ້ແກ່ ຄະນະກໍາມະການປະເມີນຕົນເອງ (Self Assesment Committee -SAC).
5. ຈັດຕັ້ງການປະເມີນຕົນເອງ ແລະສັງລວມບົດລາຍງານເພື່ອນໍາໃຊ້ຜົນການປະເມີນ ພ້ອມຜັນຂະຫຍາຍເຂົ້າໃສ່ແຜນການພັດທະນາຄະນະ.
6. ຈັດຕັ້ງທົບທວນ, ຕິດຕາມ ແລະປັບປຸງວຽກປະກັນຄຸນນະພາບພາຍໃນຄະນະຢ່າງຕໍ່ເນື່ອງ.
7. ເຜີຍແຜ່ຂໍ້ມູນ ຂ່າວສານ ແລະຜົນຮັບຂອງວຽກງານປະກັນຄຸນນະພາບ ໃຫ້ຄະນະຮັບຮູ້.

**8.1.2. ໂຄງການສ້າງລະບົບປະກັນຄຸນນະພາບພາຍນອກ**

- **ຄາດໝາຍ**

1. ການພັດທະນາສະຖານການສຶກສາວິຊາຊີບດ້ານສາທາລະນະສຸກ ເພື່ອຮັບຮອງຄຸນນະພາບພາຍໃນຂອງສະຖານການສຶກສາຕາມມາດຕະຖານປະກັນຄຸນນະພາບການສຶກສາ.

- **ມາດຕະການ ແລະວິທີການ**

1. ສ້າງແຜນເພື່ອຈັດຕັ້ງການປະເມີນພາຍນອກ ຕາມແຜນປະກັນຄຸນນະພາບຫຼືຕາມການສະເໜີຂອງຄະນະ.
2. ສໍາມະນາ ການປະເມີນຄຸນນະພາບພາຍໃນ ຈາກໜ່ວຍງານປະເມີນພາຍນອກ.
3. ສໍາມະນາ ສະຫຼູບລາຍງານຜົນການຈັດຕັ້ງປະຕິບັດການປະເມີນປະກັນຄຸນນະພາບພາຍນອກ, ຖອດຖອນບົດຮຽນເພື່ອປັບປຸງແລະຮັບຮອງຄຸນນະພາບ.

## ພາກຜະໜວກ 1

# ສັງລວມແຜນຍຸດທະສາດ ຄະນະສາທາລະນະສຸກສາດ (2021-2025)

| | | ງົບປະມານ | | | | | |
|---|---|---|---|---|---|---|---|
| ລດ | ແຜນງານ | ປີ1 | ປີ2 | ປີ3 | ປີ4 | ປີ5 | ລວມມູນຄ່າ LAK (ລ້ານ) |
| | | 2021 | 2022 | 2023 | 2024 | 2025 | |
| 1 | ແຜນງານ ບໍລິຫານ ແລະ ການຄຸ້ມຄອງ | | 250 | 241 | 226 | 251 | 968 |
| 2 | ແຜນງານ ການຄຸ້ມຄອງ ແລະ ສົ່ງເສີມກິດຈະກໍານັກສຶກສາ | | 37 | 37 | 37 | 37 | 148 |
| 3 | ແຜນງານພັດທະນາການຮຽນ-ການສອນ | 318 | 1,679 | 1,699 | 1,659 | 1,704 | 7,059 |
| 4 | ແຜນງານພັດທະນາຫຼັກສູດ | | 123 | 145 | 103 | 55 | 426 |
| 5 | ແຜນງານ ພັດທະນາຄູອາຈານ ແລະ ພະນັກງານ | | 382 | 320 | 383 | 336 | 1,421 |
| 6 | ແຜນງານ ພັດທະນາດ້ານໂຄງລ່າງພື້ນຖານ, ອຸປະກອນ ແລະ ສິ່ງອໍານວຍຄວາມສະດວກ | 15 | 228 | 32 | 226 | 40 | 541 |
| 7 | ແຜນງານການຄົ້ນຄ້ວາວິທະຍາສາດ ແລະ ການໃຫ້ບໍລິການວິຊາການ | 45 | 250 | 250 | 250 | 250 | 1,045 |
| 8 | ແຜນງານ ປະກັນຄຸນນະພາບ | | 95 | 75 | 75 | 60 | 305 |
| | **ລວມທັງໝົດ** | **378** | **3,044** | **2,799** | **2,959** | **2,733** | **11,913** |

## ພາກຜະໜວກ 2

## 1. ແຜນງານ ບໍລິຫານ ແລະ ການຄຸ້ມຄອງ

- **ທິດທາງໜ້າທີ່**

ຄະນະສາທາລະນະສຸກສາດ ມີແຜນງານ ແລະ ໂຄງການ ກ່ຽວກັບວຽກງານ ບໍລິຫານສັງລວມ ພ້ອມທັງຈັດຕັ້ງປະຕິບັດ ໃຫ້ມີປະສິດທິຜົນສູງ ເພື່ອຄຸ້ມຄອງວຽກງານ ບໍລິຫານສັງລວມຂອງ ຄະນະ,ຄຸ້ມຄອງເອກະສານນິຕິກຳ, ຂໍ້ຕົກລົງ, ລະບຽບການຕ່າງໆ, ຄຸ້ມຄອງບໍລິຫານບຸກຄະລາກອນ, ຄຸ້ມຄອງບໍລິຫານການເງິນ, ສົ່ງເສີມພົວພັນ ແລະ ການຮ່ວມມືກັບຕ່າງປະເທດ ແລະ ຄຸ້ມຄອງຮັກສາອຸປະກອນຮັບໃຊ້ ຫ້ອງການ ແລະ ການຮຽນ-ການສອນ.

- **ຄາດໝາຍ**

1. ປັບປຸງໂຄງຮ່າງ ແລະ ພາລະບົດບາດຂອງຄະນະສາທາລະນະສຸກສາດໃຫ້ສຳເລັດຕາມແຜນຍຸດທະສາດ ແລະ ແຜນພັດທະນາຂອງຄະນະສາທາລະນະສຸກສາດ 2021-2025;

2. ປັບປຸງລະບົບເອກະສານ ທາງດ້ານບໍລິຫານ-ວິຊາການ, ຄຸ້ມຄອງພາຫານະ ແລະ ຈັດຊື້ອຸປະກອນການຮຽນ-ການສອນໃຫ້ມີປະສິດທິພາບ;

3. ຂຶ້ນແຜນງົບປະມານລັດ, ງົບປະມານວິຊາການ ແລະ ທຶນຊ່ວຍເຫລືອຈາກຕ່າງປະເທດໃຫ້ໄດ້ຕາມແຜນກຳນົດຂອງ ມວສ ແລະ ກະຊວງສາທາລະນະສຸກ;

4. ຂະຫຍາຍການຮ່ວມມື ດ້ານການສຶກສາກັບສະຖາບັນການສຶກສາໃນຂົງເຂດພາກພື້ນ ແລະ ສາກົນ ສືບຕໍ່ເຊັນສັນຍາເກົ່າ ແລະ ເພີ້ມການເຊັນສັນຍາໃໝ່ກັບສະຖາບັນອື່ນໆ;

5. ຄຸ້ມຄອງພາຫະນະ ແລະ ຈັດຊື້ອຸປະກອນຮັບໃຊ້ການຮຽນ-ການສອນໃຫ້ໄປຕາມແຜນຂອງ ຄສສ ແລະ ມວສ;

| **1.1 ໂຄງການຈຸດສຸມບູລິມະສິດ** | **ກິດຈະກຳ** | **ງົບປະມານ** | | | | | |
|---|---|---|---|---|---|---|---|
| | | **ປີ1** | **ປີ2** | **ປີ3** | **ປີ4** | **ປີ5** | **ລວມມູນຄ່າ LAK (ລ້ານ)** |
| | | 2021 | 2022 | 2023 | 2024 | 2025 | |
| **1. ໂຄງການຄຸ້ມຄອງເອກະສານ, ຂໍ້ຕົກລົງ ແລະ ລະບຽບການຕ່າງໆ** | | | | | | | **100** |
| 1. ປັບປຸງລະບົບເກັບມ້ຽນເອກະສານ ແລະ ພາລະບົດ ບາດຂອງຄະນະໃຫ້ມີປະສິດທິພາບ | ອົບຮົມວິທີການຈັດເກັບເອກະສານ ຕ່າງໆໃຫ້ມີປະສິດທິຜົນ | | 20 | | 20 | | 40 |
| | ສ້າງຖານຂໍ້ມູນເກັບກຳເອກະສານຂາອອກ-ຂາເຂົ້າຢ່າງລະອຽດ ແລະ ຈັດຟາຍເອກກະສານຕ່າງໆ ໄປຕາມໝວດໝູ່ ແລະ ຈັດ | | 30 | | | 30 | 60 |

| | | | | | | | |
|---|---|---|---|---|---|---|---|
| | ຕັ້ງປະຕິບັດ ລະບົບການຄຸ້ມຄອງເອກະສານ, ຂໍ້ຕົກລົງ ແລະ ບຽບການຕ່າງໆ ທັງເປັນໃນຮູບແບບ Software and Hardware ໃຫ້ມີປະສິດທິຜົນ; | | | | | | |
| **2.ໂຄງການຄຸ້ມຄອງບໍລິຫານບຸກຄະລາກອນ** | | | | | | | **105** |
| 1. ປັບປຸງ ພາລະບົດບາດຂອງ ຄະນະສາທາລະນະສຸກສາດ, ພະແນກບໍລິຫານວິຊາການ ແລະ ພາກວິຊາໃຫ້ໄປຕາມກົງຈັກການຈັດຕັ້ງທີ່ກະທັດຮັດ; | 1. ອົບຮົມການຂຽນກຳນົດຕຳແໜ່ງງານ ແລະ ພາລະບົດບາດໃຫ້ແກ່ພະນັກງານ ຄສສ | | | 20 | | 20 | 40 |
| | ຂຽນພາລະບົດບາດ ແລະ ນຳສະເໜີເພື່ອຂໍອະນຸມັດຈາກກະຊວງສາທາລະນະສຸກ | | | 20 | | | 20 |
| | 2. ເຜີຍແຜ່ພາລະບົດບາດຂອງພະແນກ ແລະ ພາກວິຊາໃຫ້ພະນັກງານໃນຄະນະຮັບຮູ້ແລະຈັດຕັ້ງປະຕິບັດໄປຕາມພາລະບົດບາດຂອງຕົນເອງຢ່າງມີປະສິດທິຜົນ | | | | 15 | | 15 |
| 2.ຄຸ້ມຄອງບຸກຄະລາກອນໃນຄະນະໃຫ້ໄດ້ປະສິດທິຜົນ ແລະ ປະສິດທິພາບ; | 3. ຈັດການປະເມີນຜົນງານຂອງພະນັກງານ ແລະ ລັດຖະກອນ ຄູ ແລະ ຍ້ອງຍໍຜົນງານຕົວເດັ່ນປະຈຳປີ | | 10 | | | | 10 |
| | 4. ຊັບຊ້ອນບຸກຄະລາກອນໃຫ້ຖືກຕາມຕຳແໜ່ງງານທີ່ເໝາະສົມ | | | 5 | | | 5 |
| | 5. ສ້າງຖານຂໍ້ມູນເກັບກຳສະຖິຕິ ແລະ ຊີວະປະຫວັດຂອງພະນັກງານຄສສ | | | 15 | | | 15 |
| **3.ໂຄງການ ຄຸ້ມຄອງບໍລິຫານການເງິນ** | | | | | | | **128** |
| 1. ຂຶ້ນແຜນງົບປະມານ ພາກລັດ ແລະ ວິຊາການ ແລະ ໂຄງການສາກົນຕ່າງໆ ຕາມລະບຽບຫຼັກການໃຫ້ມີປະສິດທິຜົນ | 1. ເຜີຍແຜ່ດຳລັດແລະ ນິຕິກຳການເງິນຕ່າງໆ ກ່ຽວກັບການນຳໃຊ້ງົບປະມານໃຫ້ແກ່ພະນັກງານ | | | 5 | 5 | 5 | 15 |
| | 2. ອົບຮົມການຂຽນບົດໂຄງການ ແລະ ງົບປະມານວິຊາການ ແລະ ງົບປະມານລັດ ໃຫ້ແກ່ພະນັກງານຄສສ | | 25 | | 25 | | 50 |

| | | | | | | | |
|---|---|---|---|---|---|---|---|
| | 3. ຂຽນບົດໂຄງການ ແລະ ງົບປະມານພາກລັດ- ວິຊາການ ແລະ ສາກົນໃຫ້ຖືກຕາມລະບຽບຫຼັກການ, ທັນເວລາ ແລະ ມີປະສິດທິຜົນ | | | 8 | 8 | 8 | 24 |
| 2. ຈັດຕັ້ງປະຕິບັດແຜນງົບປະມານການເງິນ, ຕິດຕາມ ການຈັດຕັ້ງປະຕິບັດແຜນງົບປະມານຂອງຄະນະແຕ່ລະໂຄງການ ແລະ ສະຫຼຸບເພື່ອກຽມການກວດສອບ | 1. ສັງລວມແຜນງົບປະມານ ແລະ ສະຫຼຸບລາຍງານກິດຈະກຳຕ່າງໆສົ່ງໃຫ້ ມວສ | | | 3 | 3 | 3 | 9 |
| | 2. ສຳມະນາຖອດຖອນບົດຮຽນການຈັດຕັ້ງປະຕິບັດງົບປະມານວິຊາການ ແລະ ງົບປະມານພາກ 63 | | | 10 | 10 | 10 | 30 |
| **4. ໂຄງການສົ່ງເສີມການພົວພັນ ແລະ ການຮ່ວມມືກັບຕ່າງປະເທດ** | | | | | | | **70** |
| 1. ສ້າງຄວາມເຂັ້ມແຂງທາງດ້ານການຮ່ວມມືກັບບັນດາມະຫາວິທະຍາໄລຕ່າງໆ, ບັນດາກົມອ້ອມຂ້າງກະຊວງສາທາລະນະສຸກ ແລະ ສາກົນ | 1. ທົບທວນ ແລະ ຂະຫຍາຍເຄືອຄ່າຍການເຊັນສັນຍາຮ່ວມມືທາງດ້ານວິຊາການ ແລະ ການຄົ້ນຄວ້າກັບມະຫາວິທະຍາໄລທັງພາຍໃນ ແລະ ຕ່າງປະເທດ | | 20 | | | 20 | 40 |
| | 2. ຈັດສຳມະນາແລກປ່ຽນກ່ຽວກັບວິຊາການ ແລະ ຄົ້ນຄວ້າກັບມະຫາວິທະຍາໄລທັງພາຍໃນ ແລະ ຕ່າງປະເທດ. | | | 15 | | 15 | 30 |
| **5. ໂຄງການຄຸ້ມຄອງຮັກສາພາຫານະອຸປະກອນຮັບໃຊ້ຫ້ອງການ ແລະ ການຮຽນ-ການສອນ** | | | | | | | 565 |
| 1. ສ້າງລະບົບຄຸ້ມຄອງ ພາຫານະ, ອຸປະກອນເຄື່ອງໃຊ້ຫ້ອງການ ແລະ ອຸປະກອນການຮຽນ-ການສອນໃຫ້ໄດ້ຢ່າງມີປະສິດທິພາບ. | 1.ສ້າງຖານຂໍ້ມູນເພື່ອເກັບກຳສະຖິຕິຂອງພາຫານະ, ອຸປະກອນຮັບໃຊ້ຫ້ອງການ ແລະ ອຸປະກອນການຮຽນ-ການສອນ | | 5 | | | | 5 |
| | 2. ຈັດຊື້ ອຸປະກອນເຄື່ອງໃຊ້ຫ້ອງການ, LCD and Computers, ອຸປະກອນສື່ການສອນ ລວມທັງອຸປະກອນທາງດ້ານໂພຊະນາການ ແລະ ສິ່ງແວດລ້ອມ; | | 80 | 80 | 80 | 80 | 320 |

| | | | | | | | |
|---|---|---|---|---|---|---|---|
| | 3. ສ້ອມແປງ ແລະ ບໍາລຸງຮັກສາ ເຄື່ອງຄອມພິວເຕີ, LCD and Computers, ອຸປະກອນສື່ການສອນ. | | 60 | 60 | 60 | 60 | 240 |
| **ລວມ** | | | **250** | **241** | **226** | **251** | **968** |

## ພາກຜະໜວກ 3

## 2. ແຜນງານ ຄຸ້ມຄອງ ແລະ ສົ່ງເສີມກິດຈະກຳນັກສຶກສາ

- **ທິດທາງໜ້າທີ່:**

ຄສສ ມີລະບຽບຫຼັກການ ແລະ ມາດຕະຖານຕ່າງໆຢ່າງຈະແຈ້ງໃນການຄຸ້ມຄອງ ແລະ ສົ່ງເສີມກິດຈະກຳນັກສຶກສາ ເຄື່ອນໄຫວກິລາ, ສິລະປະວັນນະຄະດີ, ວຽກງານສາທາລະນະສຸກໃນຊຸມຊົນ, ການບໍລິຈາກເລືອດ ແລະ ອຸປະກອນຕ່າງໆ ເພື່ອອຳນວຍຄວາມສະດວກໃຫ້ນັກສຶກສາໄດ້ເຄື່ອນໄຫວວຽກງານນອກຫຼັກສູດ ຢ່າງເປັນປົກກະຕິ.

- **ຄາດໝາຍ**

1. ຄສສ ໄດ້ກຳນົດຫຼັກການຄຸ້ມຄອງ ແລະ ສົ່ງເສີມກິດຈະກຳນັກສຶກສາໄວ້ຢ່າງຈະແຈ້ງ;
2. ວາງແຜນກິດຈະກຳນອກຫຼັກສູດໄປຕາມປະຕິທິນການຮຽນ-ການສອນໃນແຕ່ລະຫຼັກສູດແຕ່ລະສົກສຶກສາໃຫ້ໄປຕາມປະຕິທິນຂອງການສຶກສາ;

| 1.1 ໂຄງການຈຸດສຸມບູລິມະສິດ | ກິດຈະກຳ | ການໃຊ້ຈ່າຍປະຈຳປີ | | | | | |
|---|---|---|---|---|---|---|---|
| | | ປີ1 | ປີ2 | ປີ3 | ປີ4 | ປີ5 | ລວມມູນຄ່າ LAK (ລ້ານ) |
| | | 2021 | 2022 | 2023 | 2024 | 2025 | |
| **1.ໂຄງການກິລາ ແລະ ສິລະປະວັນນະຄະດີ** | | | | | | | 60 |
| ເຮັດແຜນການເຄື່ອນໄຫວກິດຈະກຳ ກິລາ ແລະ ສິລະປະວັນນະຄະດີໄປຕາມປະຕິທິນການຮຽນ-ການສອນໃນແຕ່ລະຫຼັກສູດແຕ່ລະສົກສຶກສາ. | 1.ສ້າງຕັ້ງສະໂມສອນກິລາ ແລະ ສິລະປະວັນນະຄະດີຂອງຄະນະເພື່ອເຄື່ອນໄຫວກິດຈະກຳຕ່າງໆ ແລະ | | 5 | 5 | 5 | 5 | 20 |
| | 2.ຈັດການແຂ່ງຂັນ ມິດຕະພາບ ກິລາ ແລະ ສິລະປະຈຳ 6 ເດືອນ ແລະ ປະຈຳປີ ຫຼືຕ້ອນຮັບວັນສຳຄັນຕ່າງໆ; | | 5 | 5 | 5 | 5 | 20 |
| | 3.ຈັດຕັ້ງປະຕິບັດການເຄື່ອນໄຫວສິລະປະວັນນະຄະດີປະຈຳຄະນະ. | | 5 | 5 | 5 | 5 | 20 |
| **2.ໂຄງການ ເຄື່ອນໄຫວວຽກງານ 3 ອົງການຈັດຕັ້ງມະຫາຊົນ** | | | | | | | 36 |

| | | | | | | | |
|---|---|---|---|---|---|---|---|
| ສ້າງຂະບວນການແຂ່ງຂັນ 5ເປັນເຈົ້າຂອງສະຫະພັນກຳມະບານລາວ, ຂະບວນການອອກແຮງລວມ ແລະ ສະໜັບສະໜູນ ຊ່ວຍເຫຼືອສັງຄົມ; | 1. ເຜີຍແຜ່ບັນດານິຕິກຳທີ່ກ່ຽວຂ້ອງກັບ 3 ອົງການຈັດຕັ້ງມະຫາຊົນໃຫ້ແກ່ສັງຄົມ | | 2 | 2 | 2 | 2 | 8 |
| ສ້າງຂະບວນການແຂ່ງຂັນ 4 ບຸກ ຂອງຊາວໜຸ່ມ ແລະ ຂະບວນການຊ່ວຍເຫຼືອສັງຄົມ; | 2.ຂະຫຍາຍສາມະຊິກເຂົ້າສັງກັດໃນ 3 ອົງການຈັດຕັ້ງມະຫາຊົນ; | | 2 | 2 | 2 | 2 | 8 |
| ສ້າງຂະບວນການແຂ່ງຂັນ ແມ່ຍິງ 3 ດີ, ຂະບວນການຫາລາຍໄດ້ເຂົ້າຄັງເງິນຂອງແມ່ຍິງ ແລະ ການສະໜັບສະໜູນຊ່ວຍເຫຼືອສັງຄົມ. | 3.ເຄື່ອນໄຫວກິດຈະກຳຕ່າງໆ ເຊັ່ນ: ອອກແຮງງານລວມ, ຫາລາຍໄດ້, ປູກຕົ້ນໄມ້ ແລະ ບໍລິການສັງຄົມ. | | 5 | 5 | 5 | 5 | 20 |
| **3.ໂຄງການສົ່ງເສີມການບໍລິຈາກເລືອກ ແລະ ອຸປະກອນຕ່າງໆ** | | | | | | | 52 |
| ພັດທະນາແຜນງານກິດຈະກຳນອກຫຼັກສູດໃນການສົ່ງເສີມການບໍລິຈາກເລືອດ ເພື່ອຊ່ວຍສັງຄົມ ແລະ ການບໍລິຈາກເຄື່ອງ ຫຼື ອຸປະກອນຊ່ວຍເຫຼືອກ່ຽວກັບການຮຽນ-ການສອນທີ່ຈຳເປັນ. | 1.ຈັດຕັ້ງການເຜີຍແຜ່ວຽກງານການບໍລິຈາກເລືອດຊ່ວຍສັງຄົມໃຫ້ແກ່ພະນັກງານ ແລະ ນັກສຶກສາໃນຄະນະ; | | 3 | 3 | 3 | 3 | 12 |
| | 2.ກິດຈະກຳນອກຫຼັກສູດເຊັ່ນ: ການບໍລິຈາກເຄື່ອງໃຫ້ແກ່ສັງຄົມ, ເຂົ້າຮ່ວມຂະບວນການໃນການປ້ອງກັນການລະບາດຂອງພະຍາດ. | | 10 | 10 | 10 | 10 | 40 |
| ລວມ | | | **37** | **37** | **37** | **37** | **148** |

## ພາກຜະໜວກ 4

# 3. ແຜນງານ ພັດທະນາການຮຽນ-ການສອນ

**ທິດທາງໜ້າທີ່:**

ຄສສ ມີແຜນຮັບນັກສຶກສາເຂົ້າຮຽນ,ຈັດຕັ້ງການຮຽນ-ການສອນ, ປະເມີນຄວາມຮູ້ຂອງນັກສຶກສາ, ແຜນຄຸ້ມຄອງ ແລະ ສົ່ງເສີມກິດຈະກໍານັກສຶກສາ, ແຜນຕິດຕາມຜູ້ສໍາເລັດການສຶກສາ, ພັດທະນາຖານຂໍ້ມູນຂ່າວສານ-ຫ້ອງສະໝຸດ ແລະ ສ້າງເຄືອຄ່າຍຂອງອະດີດນັກສຶກສາ.

**ຄາດໝາຍ**

1. ຄສສ ໄດ້ກໍານົດຈໍານວນໂຄຕ້າການຮັບນັກສຶກສາເຂົ້າຮຽນແຕ່ລະສົກສຶກສາອີງໃສ່ຄວາມສາມາດໃນການຕອບສະໜອງຂອງ ຄະນະ ເຊັ່ນ: ສະຖານທີ່ຮຽນ, ຊັບພະຍາກອນໃນການສິດສອນ ແລະ ສະຖານທີ່ຝຶກງານ;

2. ວາງແຜນປະຕິທິນການຮຽນ-ການສອນໃນແຕ່ລະຫຼັກສູດແຕ່ລະສົກສຶກສາໃຫ້ໄປຕາມປະຕິທິນຂອງການສຶກສາ ແລະ ປະເມີນຄວາມຮູ້ຂອງນັກສຶກສາ ໂດຍໃຊ້ Formative ແລະ summative Assesment;

3. ສ້າງແຜນການເຄື່ອນໄຫວກິດຈະກໍານອກຫຼັກສູດຂອງນັກສຶກສາຕາມແຜນການຮຽນ ຂອງຄະນະ ເປັນຕົ້ນ ໃຫ້ສຸຂະສຶກສາ, ບໍລິຈາກເລືອດ, ກິລາ, ສິນລະປະວັນນະຄະດີ, ການບໍລິຈາກເຄື່ອງຊ່ວຍສັງຄົມ, ວຽກງານວິຊາປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;

4. ຄສສ ໄດ້ສ້າງສາມະຄົມສາທາລະນະສຸກສາດລາວ ເພື່ອສ້າງເຄືອຄ່າຍ ແລະ ແຜນການເຄື່ອນໄຫວກິດຈະກໍາຂອງສາມະຄົມ.

| 2.1 ໂຄງການຈຸດສຸມບູລິມະສິດ | ກິດຈະກໍາ | ງົບປະມານ | | | | | |
|---|---|---|---|---|---|---|---|
| | | ປີ1 | ປີ2 | ປີ3 | ປີ4 | ປີ5 | ລວມມູນຄ່າ LAK(ລ້ານ) |
| | | 2021 | 2022 | 2023 | 2024 | 2025 | |
| **1. ໂຄງການການຮັບເອົານັກສຶກສາ** | | | | | | | **4,251** |
| ການຮັບນັກສຶກສາເຂົ້າຮຽນ ແມ່ນອີງໃສ່ຄວາມສາມາດໃນການຕອບສະໜອງຂອງຄະນະສາທາລະນະສຸກສາດ ເຊັ່ນ: ສະຖານທີ່ຮຽນ, ຊັບພະຍາກອນໃນການສິດສອນ, ແລະ ສະຖານທີ່ຝຶກງານຕ່າງໆ. | 1.ຈັດຕັ້ງປະຕິບັດການສອບເສັງຄັດເລືອກນັກສຶກສາເຂົ້າຮຽນໃນແຕ່ລະສາຂາຫຼັກສູດທີ່ກໍານົດໄວ້ | 5 | 5 | 5 | 5 | 5 | 25 |

| | | | | | | | |
|---|---|---|---|---|---|---|---|
| | 2. ຈັດກອງປະຊຸມຕັດສິນຄະແນນຜົນການສອບເສັງຂອງນັກສຶກສາໃໝ່ ແລະ ຂໍອະນຸມັດຂໍ້ຕົກລົງຮັບນັກສຶກສາເຂົ້າຮຽນຂອງແຕ່ລະຫຼັກສູດໃນແຕ່ລະສົກສຶກສາ; | 10 | 10 | 10 | 10 | 10 | 50 |
| | 3.ແຜນຮັບນັກສຶກສາເຂົ້າຮຽນໃນແຕ່ລະສາຂາວິຊາ (ສາຂາ ບໍລິຫານສາທາລະນະສຸກ ປໍຕີ 40- ປໍໂທ 20, ໂພຊະນການ 10, ສຸຂະພາບຄອບຄົວ 10, ລະບາດວິທະຍາ10, ສິ່ງແວດລ້ອມ 10) | | 1,044 | 1,044 | 1,044 | 1,044 | 4,176 |
| **2.ໂຄງການຈັດຕັ້ງການຮຽນ-ການສອນ** | | | | | | | **1,100** |
| 1. ຈັດຕັ້ງປະຕິບັດຫຼັກສູດປະລິນຍາໂທ ສາທາລະນະສຸກສາດ ສາຂາ ບໍລິຫານສາທາລະນະສຸກ, ສາຂາ ໂພຊະນາການ, ລະບາດວິທະຍາ, ສຸຂະພາບຄອບຄົວ, ອະນາໄມສິ່ງແວດລ້ອມ ແລະ ອາຊີວະອະນາໄມ ແລະ ຫຼັກສູດປະລິນຍາຕີ ວິທະຍາສາດ ສາທາລະນະສຸກ; | 1. ຈັດກອງປະຊຸມປະຖົມນິເທດນັກສຶກສາປະລິນຍາຕີ ແລະ ຫຼັງປະລິນຍາຕີ | | 20 | 20 | 20 | 20 | 80 |
| | 2. ຈັດຕາຕະລາງການຮຽນ-ການສອນ, ການຂຶ້ນຫ້ອງສອນຂອງນັກຮຽນ ແລະ ຄູອາຈານ, ປະເມີນນັກສຶກສາແຕ່ລະໂມດູນທັງແບບ Formative & Summative Assessment ແຕ່ລະຫຼັກສູດ, | | 30 | 30 | 30 | 30 | 120 |
| | 3. ນໍາພານັກສຶກສາ 4 ສາຂາລົງພາກສະໜາມ ໃນນະຄອນຫຼວງ ແລະ ຕ່າງແຂວງ | | 50 | 50 | 50 | 50 | 200 |
| | 4. ຈັດພິທີມອບ-ຮັບ ປະກາສະນິຍະບັດໃຫ້ຜູ້ສໍາເລັດການສຶກສາໃນແຕ່ລະສົກສຶກສາ | | 25 | 25 | 25 | 25 | 100 |
| 2. ສ້າງລະບົບຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດການຮຽນ-ການສອນແຕ່ລະໂມດູນ ເພື່ອຮັບປະກັນຄຸນນະພາບຂອງການຮຽນ-ການສອນ; | 1. ສໍາມະນາຖອດຖອນບົດຮຽນການຮຽນ-ການສອນ ແລະ ຈັດຕັ້ງປະຕິບັດ, ຈັດປະຖົມນິເທດກ່ຽວກັບການລົງພາກສະໜາມຂອງນັກສຶກສາ 4 ສາຂາ | 120 | 120 | 120 | 120 | 120 | 600 |

| | | | | | | | |
|---|---|---|---|---|---|---|---|
| **3.ໂຄງການຄຸ້ມຄອງ ແລະ ສົ່ງເສີມກິດຈະກຳນັກສຶກສາ** | | | | | | | **288** |
| 1. ພັດທະນາລະບຽບຫຼັກການ ແລະ ມາດຕະຖານຕ່າງໆຢ່າງຈະແຈ້ງໃນການຄຸ້ມຄອງ ແລະ ສົ່ງເສີມກິດຈະກຳນັກສຶກສາ; | 1.ທົບທວນລະບຽບ ແລະ ມາດຕະການຕ່າງໆຂອງ ມອສ ໃຫ້ເປັນໄປຕາມກະຊວງສຶກສາທິການ ແລະ ກິລາ | 10 | 10 | 10 | 10 | 10 | 50 |
| | 2.ຈັດຕັ້ງປະຕິບັດເຜີຍແຜ່ລະບຽບຫຼັກການແລະມາດຕະການ່າງໆສະປັບປຸງໃຫ້ແກ່ນັກສຶກສາ | 15 | 15 | 15 | 15 | 15 | 75 |
| 2. ພັດທະນາແຜນງານກິດຈະກຳນອກຫຼັກສູດປະຈຳປີ ແລະ 5 ປີ ເພື່ອອຳນວຍຄວາມສະດວກໃຫ້ນັກສຶກສາໄດ້ເຄື່ອນໄຫວວຽກງານນອກຫຼັກສູດໄດ້ເປັນປົກກະຕິ; | 1.ສ້າງກຸ່ມເຄື່ອນໄຫວກິດຈະກຳກິລາ ແລະ ສິນລະປະວັນນະຄະດີ ປະຈຳປີ | 23 | 25 | 25 | 25 | 25 | 123 |
| | 2.ກິດຈະກຳນອກຫຼັກສູດເຊັ່ນ: ການບໍລິຈາກເຄື່ອງໃຫ້ແກ່ສັງຄົມ ແລະ ສົ່ງເສີມນັກສຶກສາເຂົ້າຮ່ວມການບໍລິຈາກເລືອດ ປະຈຳປີ. | | 10 | 10 | 10 | 10 | 40 |
| **4. ໂຄງການສົ່ງເສີມ ແລະ ປ້ອງກັນສຸຂະພາບຂອງຊຸມຊົນ** | | | | | | | **75** |
| ສ້າງແຜນການຈັດຕັ້ງປະຕິບັດການສົ່ງເສີມ ແລະ ປ້ອງກັນສຸຂະພາບໃຫ້ແກ່ຊຸມຊົນໃນນະຄອນຫຼວງວຽງຈັນ. | 1. ຈັດກອງປະຊຸມປຶກສາຫາລືໃນການຈັດຕັ້ງປະຕິບັດວຽກງານສົ່ງເສີມ ແລະ ປ້ອງກັນສຸຂະພາບກັບຂັ້ນເມືອງ ແລະ ບ້ານ; | | 15 | | | | 15 |
| | 2. ເຜີຍແຜ່ການຈັດຕັ້ງປະຕິບັດວຽກງານສົ່ງເສີມ ແລະ ປ້ອງກັນສຸຂະພາບ; | | | 15 | | | 15 |
| | 3. ຈັດຕັ້ງປະຕິບັດໂຄງການ, ຕິດຕາມປະເມີນຜົນແຕ່ລະໄລຍະຂອງໂຄງການ. | | | 15 | 15 | 15 | 45 |
| **5.ໂຄງການຕິດຕາມຜູ້ສຳເລັດການສຶກສາ** | | | | | | | **440** |
| ສ້າງຂໍ້ກຳນົດ, ກົດລະບຽບ ແລະ ສະໜອງສິ່ງອຳນວຍ | 1.ສ້າງ ແລະ ປັບປຸງລະບົບຕິດຕາມຂໍ້ມູນນັກສຶກສາ ທີ່ | | 20 | | | 20 | 40 |

| | | | | | | | |
|---|---|---|---|---|---|---|---|
| ຄວາມສະດວກ ອັນຈຳເປັນ ເພື່ອສ້າງເຄືອຂ່າຍ ແລະ ຄວາມສຳພັນທະມິດລະຫວ່າງອະດີດນັກສຶກສາ ກັບ ຄະນະສາທາລະນະສຸກສາດ; | ສຳເລັດການສຶກສາໄປແລ້ວ | | | | | | |
| | 2.ສ້າງສະຫະພັນສິດເກົ່າ ຂອງຄະນະ ເພື່ອສ້າງເຄືອຂ່າຍ ຂອງ ອະດີດນັກສຶກສາ ແລະ ເຜີຍແຜ່ທາງດ້ານວິຊາການ | 40 | 40 | 40 | 40 | 40 | 200 |
| | 3.ສ້າງແຜນການເຄື່ອນໄຫວກິດຈະກຳພົບປະສິດເກົ່າ ແລະອຳນວຍຄວາມສະດວກໃຫ້ເຂົ້າເຈົ້າ ເພື່ອ ປະກອບສ່ວນ ໃນການເຄື່ອນໄຫວ ກິດຈະກຳນອກ ຫລັກສູດ | 40 | 40 | 40 | 40 | 40 | 200 |
| **6. ໂຄງການພັດທະນາຖານຂໍ້ມູນຂ່າວສານ ແລະ ຫ້ອງ ສະໝຸດ** | | | | | | | **245** |
| 1. ສ້າງ Website ຂອງ ຄສສ ເພື່ອເຜີຍແຜ່ວຽກການ ການຮຽນ-ການສອນ, ຫຼັກສູດ, ກິດຈະກຳ ແລະ ໂຄງການຕ່າງໆ ເກັບກຳ, ສັງລວມ ຂໍ້ມູນສະຖິຕິຂອງ ນັກສຶກສາພາຍໃນຄະນະ. | 1. ສ້າງ Website ເຜີຍແຜ່ຂ່າວສານ, ຂໍ້ກຳນົດ, ນິຕິກຳ, ລະບຽບການປະເມີນຜົນການສອບເສັງ | 35 | | 35 | | 35 | 105 |
| | 2. ຂຶ້ນທະບຽນເຊົ່າ port ແລະ ຄຸ້ມຄອງຮັກສາ ເວັບໄຊ ຂອງຄະນະສາທາລະນະສຸກສາດ | 10 | 10 | 10 | 10 | 10 | 50 |
| | 3. ສ້າງຖານຂໍ້ມູນກ່ຽວກັບນັກສຶກສາ ແລະ ອະດີດນັກ ສຶກສາທີ່ສຳເລັດໄປແລ້ວແຕ່ລະລຸ້ນ. | 10 | 10 | 10 | 10 | 10 | 50 |
| 2. ພັດທະນາຫ້ອງສະມຸດຄະນະໃຫ້ເປັນຫ້ອງສະມຸດ ດິຈິຕອນ ແລະ ເປັນແຫຼ່ງຄວາມຮູ້ອັນຄົບຖ້ວນ ແລະ ທັນສະໄໝ ໃຫ້ແກ່ນັກສຶກສາໃນຄະນະ. | 1. ປັບປຸງຖານຂໍ້ມູນຫ້ອງສະມຸດສິ່ງອຳນວຍຄວາມ ສະດວກໃຫ້ແກ່ການຮຽນ-ການສອນ; | | 10 | | 10 | | 20 |
| | 2. ຈັດອົບຮົມການນຳໃຊ້ ຖານຂໍ້ມູນຫ້ອງສະມຸດ ເພື່ອ ສືບຄົ້ນ ປື້ມຕຳລາຕ່າງໆ ແລະ ວາລະສານສາກົນ; | | 5 | 5 | 5 | 5 | 20 |
| **6. ໂຄງການ ເຄື່ອນໄຫວສະມາຄົມ ສາທາລະນະສຸກ ສາດລາວ** | | | | | | | **660** |

| | | | | | | | |
|---|---|---|---|---|---|---|---|
| 1. ສ້າງເຄື່ອຄ່າຍ ຂອງນັກສາທາລະນະສຸກ ລວມທັງຜູ້ປະກອບການຕ່າງໆທີ່ເຮັດວຽກກ່ຽວຂ້ອງກັບສາທາລະນະສຸກທົ່ວປະເທດ. | 1.ຈັດກອງປະຊຸມຖອດຖອນການຈັດຕັ້ງປະຕິບັດຂອງສາມະຄົມໃນໄລຍະ1 ປີຜ່ານມາ | | 5 | 5 | 5 | 5 | 20 |
| | 2.ການຈັດກອງປະຊຸມແລກປ່ຽນວິຊາການສາທາລະນະສຸກ ແລະ ສາຂາວິຊາອື່ນໆ ໂດຍຜ່ານສື່ອອນລາຍຫຼືກອງປະຊຸມໜ້າຕໍ່ໜ້າ | | 150 | 150 | 150 | 150 | 600 |
| | 3.ໂຄສະນາຜ່ານສື່ອອນລາຍ ເພື່ອຂົນຂວາຍເອົານັກວິຊາການສາທາລະນະສຸກ ແລະ ສາຂາວິຊາອື່ນໆມາເປັນສະມາຊິກສະມາຄົມ | | 10 | 10 | 10 | 10 | 40 |
| **ລວມ** | | **318** | **1,679** | **1,699** | **1,659** | **1,704** | **7,059** |

## ພາກຜະໜວກ 5

# 4. ແຜນງານພັດທະນາຫຼັກສູດ

**ທິດທາງໜ້າທີ່**

ຄະນະສາທາລະນະສຸກສາດມີທິດທາງພັດທະນາຫຼັກສູດລະດັບປະລິນຍາຕີ ແລະ ຫລັງມະຫາວິທະຍາໄລ, ປຶ້ມຄູ່ມືການຮຽນ-ການສອນ ແລະ ຕຳລາ ເພື່ອຮັບໃຊ້ການຮຽນ-ການສອນໃຫ້ໄດ້ຄຸນນະພາບທຽບເທົ່າສາກົນ ແລະ ພາກພື້ນ.

**ຄາດໝາຍ**

1. ທົບທວນຫຼັກສູດເກົ່າ ໂດຍອີງໃສ່ມາດຖານກະຊວງສຶກສາທິການ ແລະ ກິລາ.

2. ສ້າງຫຼັກສູດໃຫມ່ລະດັບປະລິນຍາຕີ, ຫຼັກສູດລະດັບປະລິນຍາໂທສາຂາ ສຸຂະພາບຄອບຄົວ; ສາຂາ ອະນາໄມສິ່ງແວດລ້ອມ ແລະ ສຸຂະພາບແຮງງານ, ສາຂາ ບໍລິຫານໂຮງໝໍ, ແລະ ຫລັກສູດປະລິນຍາເອກ ສາທາລະນະສຸກສາດ ໃຫ້ສອດຄ່ອງກັບຄວາມຕ້ອງການຂອງຂະແໜງການສາທາລະນະສຸກ.

3. ພັດທະນາຫຼັກສູດອົບຮົມໄລຍະສັ້ນ ເພື່ອຍົກສູງຄວາມຮູ້, ຄວາມສາມາດຂອງອາຈານ ແລະ ພະນັກງານ ໃນແຕ່ລະສາຂາວິຊາ.

4. ແຜນພັດທະນາປຶ້ມຄູ່ມື ແລະ ຕຳລາການຮຽນ-ການສອນ ເພື່ອຮັບໃຊ້ການຮຽນ-ການສອນ ໃຫ້ໄດ້ມາດຕະຖານສາກົນ ແລະ ພາກພື້ນ.

| 3.2.1 ໂຄງການຈຸດສຸມບຸລິມະສິດ | ກິດຈະກຳ | ງົບປະມານ | | | | | |
|---|---|---|---|---|---|---|---|
| | | ປີ1 | ປີ2 | ປີ3 | ປີ4 | ປີ5 | ລວມມູນຄ່າ LAK(ລ້ານ) |
| | | 2021 | 2022 | 2023 | 2024 | 2025 | |
| **1.ໂຄງການທົບທວນຫຼັກສູດ** | | | | | | | **75** |
| 1. ທົບທວນຫລັກສູດເກົ່າ ໂດຍອີງໃສ່ຂີດຄວາມສາມາດ ແລະ ຜົນປະເມີນຄວາມຕ້ອງການ ໃນການປັບປັງຫລັກສູດ | 1.ສຳມະນາການປັບປຸງເນື້ອໃນຫຼັກສູດຂອງແຕ່ລະສາຂາວິຊາໃຫ້ໄປຕາມຂອບວຸດທິການສຶກສາແຫ່ງຊາດໂດຍກຳນົດຄວາມຮູ້, ຄວາມສາມາດ, ຄວາມຊຳນານງານ, ການນຳໃຊ້ ແລະ ພາກປະຕິບັດຕົວຈິງຕາມແຕ່ລະລະດັບສາຂາວິຊາ | | 25 | | | 25 | 50 |

| | | | | | | | |
|---|---|---|---|---|---|---|---|
| | 2.ຈັດອົບຮົມ ເພື່ອດັດແກ້ເນື້ອຫາລາຍລະອຽດຂອງວິຊາ ເພື່ອຂໍອະນຸມັດຈາກກະຊວງສຶກສາທິການ ແລະ ກິລາ | | | 25 | | | 25 |
| **2. ໂຄງການສ້າງຫຼັກສູດໃໝ່** | | | | | | | **90** |
| 1. ປະເມີນຄວາມຕ້ອງການທີ່ຈຳເປັນໃນການສ້າງຫລັກສູດໃໝ່ ໂດຍເຮັດການປະເມີນຄວາມຕ້ອງການ ແລະ ພັດທະນາຫຼັກສູດໃໝ່. | 1.ສໍາມະນາ ແລະ ດໍາເນີນການປະເມີນຄວາມຕ້ອງການໃນການສ້າງຫຼັກສູດໃໝ່ ເຊັ່ນ ປ ໂທ ສາທາລະນະສຸກ ສາຂາ ບໍລິຫານໂຮງໝໍ ແລະ ຫຼັກສູດ ປ ເອກ. | | 50 | | | | 50 |
| | 2.ສໍາມະນາການນໍາສະເໜີໂຄງຮ່າງຫຼັກສູດ ໃຫ້ອາຈານພາຍໃນ ແລະ ພາຍນອກ. | | | 20 | | | 20 |
| | 3. ສໍາມະນາກອງປະຊຸມ ເພື່ອສະເໜີເນື້ອໃນຫຼັກສູດຂອງແຕ່ລະສາຂາວິຊາ ແລະການແຜນການຮຽນການສອນລະອຽດ ແລະ ຂໍອະນຸມັດຮັບຮອງຫລັກສູດ. | | | | 20 | | 20 |
| **3. ໂຄງການສ້າງຫຼັກສູດອົບຮົມໄລຍະສັ້ນ** | | | | | | | **73** |
| 1. ຄສສ ສ້າງ ແລະ ພັດທະນາຫຼັກສູດ ຝຶກອົບຮົມໄລຍະສັ້ນ ເພື່ອພັດທະນາວິຊາຊີບຂອງພະນັກງານສາທາລະນະສຸກ. | 1. ແຕ່ງຕັ້ງຄະນະກໍາມະການຮັບຜິດຊອບຫລັກສູດໄລຍະສັ້ນ (ໂພຊະນາການ, ລະບາດວິທະຍາ, ອານາໄມສິ່ງແວດລ້ອມ ແລະ ອາຊີວະອະນາໄມ, ບໍລິຫານສາທາລະນະສຸກ)າດສາທາລະນະສຸກ). | | 3 | | | | 3 |
| | 2. ສໍາມະນານໍາສະເໜີໂຄງຮ່າງຫລັກສູດອົບຮົມໄລຍະສັ້ນໃຫ້ຄະນະກໍາມະການພາຍໃນ; | | | 35 | | | 35 |
| | 3. ສໍາມະນາ ເພື່ອສະເໜີເນື້ອໃນຫຼັກສູດອົບຮົມໄລຍະສັ້ນຂອງແຕ່ລະສາຂາວິຊາໃຫ້ໄປຕາມຂອບວຸດທິການສຶກສາ ໂດຍກໍານົດຄວາມຮູ້, ຄວາມສາມາດ, ຄວາມຊໍານານງານ, ການນໍາໃຊ້ ແລະ ພາກປະຕິບັດຕົວຈິງ | | | 35 | | | 35 |

| | | | | | | | |
|---|---|---|---|---|---|---|---|
| | ຕາມແຕ່ລະ ລະດັບສາຂາວິຊາ; ແລະ ຂໍອະນຸມັດຮັບຮອງຫລັກສູດອົບຮົມໄລຍະສັ້ນຈາກຄະນະບໍດີຄະນະສາທາລະນະສຸກສາສາດ, ແລະ ອະທິການ ມອສ. | | | | | | |
| **4. ໂຄງການຄູ່ມືການຮຽນ-ການສອນ ແລະ ຕຳລາຮຽນ** | | | | | | | **188** |
| 1. ພັດທະນາຄູ່ມື ແລະ ປຶ້ມຕຳລາຮຽນໂພຊະນາການ, ລະບາດວິທະຍາ, ສຸຂະພາບຄອບຄົວ, ບໍລິຫານໂຮງໝໍ, ອະນາໄມສິ່ງແວດລ້ອມ ແລະ ສຸຂະພາບແຮງງານ, ແລະ ເສດຖະສາດສາທາລະນະສຸກ. | 1. ແຕ່ງຕັ້ງຄະນະກຳມະການຮັບຜິດຊອບຂຽນ, ກວດແກ້ປຶ້ມຄູ່ມືການຮຽນ-ການສອນ ແລະ ຕຳລາຮຽນແຕ່ລະສາຂາ; | | 10 | | | | 10 |
| | 2.ສຳມະນານຳສະເໜີໂຄງຮ່າງປຶ້ມຄູ່ມືການຮຽນ-ການສອນ, ປຶ້ມຄູ່ມືຫ້ອງປະຕິບັດການ ແລະ ຕຳລາຮຽນໃຫ້ຄະນະການພາຍໃນ ແລະ ພາຍນອກ; | | | 30 | | 30 | 60 |
| | 3. ສຳມະນາ ເພື່ອສະເໜີເນື້ອໃນປຶ້ມຄູ່ມືການຮຽນ-ການສອນ ແລະ ຕຳລາຮຽນຂອງແຕ່ລະສາຂາວິຊາ | | 35 | | 35 | | 70 |
| | 4. ຂໍອະນຸມັດຮັບຮອງປຶ້ມຄູ່ມືການຮຽນ-ການສອນ ແລະ ຕຳລາຮຽນ ຈາກ ຄະນະບໍດີຄະນະສາທາລະນະສຸກສາດ ແລະ ກະຊວງຖະແຫລ່ງຂ່າວ ແລະ ວັດທະນາທຳ. | | | | 48 | | 48 |
| **ລວມ** | | | **123** | **145** | **103** | **55** | **426** |

## ພາກຜະໜວກ 6

# 5. ແຜນງານ ພັດທະນາຄູອາຈານ ແລະ ພະນັກງານ

**ທິດທາງໜ້າທີ່:**

ຈັດຕັ້ງປະຕິບັດນະໂຍບາຍພັດທະນາຄູ-ອາຈານ ແລະ ພະນັກງານໃຫ້ມີຄວາມຮູ້, ຄວາມສາມາດໃນການສິດສອນ ແລະ ຍົກສູງທັກສະໃນການສິດສອນ; ມີແບບແຜນໃນສິດສອນ; ມີກຸ່ມແລກປ່ຽນທັກສະທາງດ້ານວິຊາການກ່ຽວກັບວິທີການຮຽນ-ການສອນ ລະຫວ່າງຄູອາຈານຜູ້ໜຸ່ມນ້ອຍ ແລະ ຜູ້ຊີງຄຸນນະວຸດ ແລະກັບສະຖາບັນຕ່າງໆທັງພາຍໃນ ແລະ ຕ່າງປະເທດ.

**ຄາດໝາຍ**

1.ພະນັກງານຄູໄດ້ຮັບການອົບຮົມຄູວິທະຍາກ່ຽວກັບທັກສະການຮຽນການສອນແບບໃໝ່ຢ່າງໜ້ອຍ 2 ຄັ້ງ/ປີ

2.ພະນັກງານຄູຈາກພາກວິຊາໄດ້ຮັບການອົບຮົມທາງດ້ານວິຊາການກ່ຽວກັບວິຊາສະເພາະ 1 ຄັ້ງຕໍ່ປີຕໍ່ພາກວິຊາ

3. ພະນັກງານຄູຂັ້ນປະລິນຍາໂທຂອງແຕ່ລະພາກວິຊາໄດ້ໄປສຶກສາຕໍ່ປະລິນຍາເອກໃນສາຂາສະເພາະຂອງຕົນຢ່າງໜ້ອຍ ພາກລະ 1 ທ່ານໃນ 5 ປີ.

4.ພະນັກງານຄູໄດ້ຮັບການອົບຮົມທາງດ້ານວິຊາການແບບຕໍ່ເນື່ອງກ່ຽວກັບທັກສະສະເພາະຂອງວຽກສາທາລະນະສຸກ ຢ່າງໜ້ອຍປີລະຄັ້ງ

| 3.2.1 ໂຄງການຈຸດສຸມບູລິມະສິດ | | ງົບປະມານ | | | | | |
|---|---|---|---|---|---|---|---|
| | | ປີ1 | ປີ2 | ປີ3 | ປີ4 | ປີ5 | ລວມມູນຄ່າ |
| | | 2021 | 2022 | 2023 | 2024 | 2025 | LAK(ລ້ານ) |
| **1. ໂຄງການການພັດທະນາທັກສະການສອນແບບໃໝ່** | | | | | | | **80** |
| 1. ການປັບປຸງຄວາມສາມາດຂອງຄູໃນການສິດສອນ ເພື່ອການຕອບສະໜອງ ແລະ ບັນລຸຕາມຈຸດປະສົງການຮຽນ-ການສອນໃນຫລັກສູດ. | 1.ຈັດການຝຶກອົບຮົມຄູວິທະຍາ ໃຫ້ແກ່ພະນັກງານຄູອາຈານໃຫ້ໄດ້ຢ່າງ ໜ້ອຍໃຫ້ໄດ້ 80% ຂອງພະນັກງານຄູທັງໝົດ. | | 10 | | 10 | | 20 |
| | 2. ຈັດການຝຶກອົບຮົມກ່ຽວກັບ ຂີດຄວາມສາມາດທາງດ້ານສາທາລະນະສຸກ (Public Health Competency)ໃຫ້ແກ່ພະນັກງານຄູອາຈານຢ່າງໜ້ອຍ ປີລະຄັ້ງ. | | 10 | 10 | 10 | 10 | 40 |
| | 3.ສຳມະນາທັກສະໃນການນຳໃຊ້ Digital Literacy, Digital Pedagogy ເຂົ້າໃນວິທີການສິດສອນ ແລະ ເສີມສ້າງທັກສະການສື່ສານດ້ານພາສັງອັງກິດ. | | 10 | | 10 | | 20 |

| | | | | | | | |
|---|---|---|---|---|---|---|---|
| **2.ໂຄງການຍົກລະດັບວິຊາສະເພາະທາງດ້ານວິຊາການ** | | | | | | | **880** |
| 1. ສ້າງພະນັກງານສາທາລະນະສຸກ ລະດັບປະລິນຍາຕີ ຈຳນວນ 02 ທ່ານ, ລະດັບປະລິນຍາໂທ ຈຳນວນ 02 ທ່ານ, ລະດັບປະລິນຍາເອກ ຈຳນວນ 03 ທ່ານ | 1. ສົ່ງພະນັກງານທີ່ມີລະດັບວິຊາສະເພາະຂັ້ນອະນຸປະລິນຍາ ເພື່ອໄປຮຽນຕໍ່ລະດັບປະລິນຍາຕີ ສາຂາບໍລິຫານສາທາລະນະສຸກ | | 50 | 50 | 50 | 50 | 200 |
| | 2. ສົ່ງພະນັກງານທີ່ມີລະດັບວິຊາສະເພາະຂັ້ນປະລິນຍາຕີ ເພື່ອໄປຮຽນຕໍ່ລະດັບປະລິນຍາໂທ ບໍລິຫານການສຶກສາ ແລະ ສາທາລະນະສຸກສິ່ງແວດລ້ອມ | | 70 | 70 | 70 | 70 | 280 |
| | 3. ສົ່ງພະນັກງານທີ່ມີລະດັບວິຊາສະເພາະຂັ້ນອະນຸປະລິນຍາໂທ ເພື່ອໄປຮຽນຕໍ່ລະດັບປະລິນຍາເອກ | | 100 | 100 | 100 | 100 | 400 |
| **3. ໂຄງການຈັດຕັ້ງປະຕິບັດການອົບຮົມແບບຕໍ່ເນື່ອງ** | | | | | | | **461** |
| 1. ສ້າງຄວາມເຂັ້ມແຂງທາງດ້ານວິຊາການໃຫ້ແກ່ພະນັກງານພາກວິຊາບໍລິຫານຄຸ້ມຄອງສາທາລະນະສຸກ | 1. ອົບຮົມຫົວຂໍ້ບໍລິຫານໂຮງໝໍ ໃຫ້ພະນັກງານຄູອາຈານພາຍໃນຄະນະ | | | 22 | | 22 | 44 |
| | 2. ອົບຮົມຫົວຂໍ້ການບໍລິຫານຊັບພະຍາກອນມະນຸດ | | 19 | | 19 | | 38 |
| | 3. ອົບຮົມເລື່ອງເສດຖະສາດ-ການເງິນ ວຽກງານສາທາລະນະສຸກ | | | 19 | | 35 | 54 |
| | 4.ອົບຮົມຫົວຂໍ້ ການພັດທະນາການຂະຫຍາຍຕາໜ່າງວຽກງານຮັກສາສຸຂະພາບຂັ້ນຕົ້ນ | | 19 | | 19 | | 38 |
| | 5. ອົບຮົມຫົວຂໍ້ການວິເຄາະນະໂຍບາຍສຸຂະພາບ | | | 19 | | 19 | 38 |
| 2. ສ້າງຄວາມເຂັ້ມແຂງທາງດ້ານທັກສະ ແລະ ຄວາມເຂົ້າໃຈໃນພາກປະຕິບັດການຕົວຈິງກ່ຽວກັບວຽກງານລະບາດວິທະຍາແລະຊີວະສະຖິຕິ | 1. ສຳມະນາທັກສະການນຳໃຊ້ໂປຼແກມຕ່າງໆ ເຊັ່ນ ສະຕາຕ້າ, ເອສພີເອສເອສ, ອຣາ ... ໃນການວິເຄາະຂໍ້ມູນແບບປະລິມານ | | 20 | | 20 | | 40 |
| | 5. ສຳມະນາທັກສະການໃຫ້ຄຳປຶກສາແກ່ນັກສຶກສາໃນການເຮັດບົດວິທະຍານິພົນ ໂດຍການແລກປ່ຽນບົດຮຽນລະຫວ່າງ | | 10 | | 10 | | 20 |

| | | | | | | | |
|---|---|---|---|---|---|---|---|
| | ຄູອາຈານຜູ້ໜຸ່ມນ້ອຍ ແລະ ຜູ້ມີຄຸນນະວຸດ | | | | | | |
| | ສຳມະນາທັກສະ ແລະ ການປະຕິບັດຕົວຈິງໃນການວິເຄາະຂໍ້ມູນແບບຄຸນນະພາບ | | 19 | | 20 | | 39 |
| 3. ສ້າງຄວາມເຂັ້ມແຂງທາງດ້ານວິຊາການກ່ຽວກັບວຽກງານໂພຊະນາການ ເຊັ່ນ ໂພຊະນາການດ້ານຄູນິກ, ໂພຊະນາການບຳບັດ ແລະ ໂພຊະນາການສຸຂະພາບໄວໜຸ່ມ | 1. ອົບຮົມກ່ຽວກັບໂພຊະນາການດ້ານຄຼີນິກ | | 15 | | 15 | | 30 |
| | 2. ອົບຮົມກ່ຽວກັບໂພຊະນາການບຳບັດ | | | 10 | | 10 | 20 |
| | 3. ອົບຮົມກ່ຽວກັບສຸຂະພາບໄວໜຸ່ມ | | 10 | | 10 | | 20 |
| 4. ສ້າງຄວາມເຂັ້ມແຂງທາງດ້ານວິຊາການກ່ຽວກັບວຽກງານສິ່ງແວດລ້ອມໃຫ້ແກ່ພະນັກງານຄູອາຈານ | 1. ອັບຮົມກ່ຽວກັບການປ່ຽນແປງສະພາບດິນຟ້າອາກາດ | | 10 | | 10 | | 20 |
| | 2. ອົບຮົມກ່ຽວກັບສຸຂະອະນາໄມ ແລະ ການປ່ຽນແປງສະພາບດິນຟ້າອາກາດ | | | 10 | | 10 | 20 |
| | 3. ອົບຮົມກ່ຽວກັບຜົນກະທົບຂອງມົນລະພິດທາງອາກາດ | | 10 | | 10 | | 20 |
| | 4. ອົບຮົມກ່ຽວກັບກ່ຽວກັບຜົນກະທົບຂອງມົນລະພິດທາງສຽງ | | | 10 | | 10 | 20 |
| **ລວມ** | | | **382** | **320** | **383** | **336** | **1,421** |

# ພາກຜະໜວກ 7

## 6. ແຜນງານ ພັດທະນາດ້ານໂຄງລ່າງພື້ນຖານ , ອຸປະກອນ ແລະ ສິ່ງອຳນວຍຄວາມສະດວກ

**ທິດທາງໜ້າທີ່**

ຄສສ ມີແຜນອອກແບບ, ບູລະນະສ້ອມແປງ, ປັບປຸງ, ຫ້ອງຄະນະບໍດີ, ຫ້ອງພາກວິຊາ, ສະຖານທີ່ຮັບໃຊ້ບໍລິຫານ, ອາຄານຮຽນຂອງນັກສຶກສາ, ຫ້ອງປະຕິບັດການຕົວຈິງ,ຫ້ອງສະໝຸດ, ພ້ອມທັງປະກອບອຸປະກອນ ແລະ ສິ່ງອຳນວຍຄວາມສະດວກໃຫ້ແກ່ ການຮຽນ-ການສອນ ເພື່ອເປັນການຍົກສູງປະສິດທິພາບ, ຄຸນນະພາບຂອງການສຶກສາ ແລະ ການຄົ້ນຄວ້າວິທະຍາສາດ.

**ຄາດໝາຍ**

1. ອອກແບບຕຶກອາຄານ 4 ຊັ້ນຂອງ ຄະນະສາທາລະນະສຸກສາດ ວິທະຍາເຂດດົງໂດສີ;

2. ສ້ອມແປງບູລະນະໂຄງລ່າງພື້ນຖານຂອງ ຄສສ, ຫ້ອງຄະນະບໍດີ,ຫ້ອງພາກວິຊາ, ຫ້ອງຮຽນນັກສຶກສາ, ຫ້ອງປະຕິບັດການຕົວຈິງ ແລະ ຫ້ອງສະມຸດເພື່ອໃຫ້ນັກສຶກສານຳໃຊ້ຢ່າງພຽງພໍ

2. ສ້ອມແປງບູລະນະໂຄງລ່າງພື້ນຖານຂອງຄະນະສາທາລະນະສຸກສາດ ຫ້ອງຄະນະບໍດີ, ຫ້ອງພາກວິຊາ, ຫ້ອງຮຽນນັກສຶກສາ, ຫ້ອງສະມຸດ ແລະ ຫ້ອງປະຕິບັດການເພື່ອໃຫ້ນັກສຶກສານຳໃຊ້ຢ່າງພຽງພໍ.

| 5.1 ໂຄງການຈຸດສຸມບູລິມະສິດ | ກິດຈະກຳ | ງົບປະມານ | | | | | |
|---|---|---|---|---|---|---|---|
| | | ປີ1<br>2021 | ປີ2<br>2022 | ປີ3<br>2023 | ປີ4<br>2024 | ປີ5<br>2025 | ລວມມູນຄ່າ LAK (ລ້ານ) |
| **1. ໂຄງການກໍ່ສ້າງພື້ນຖານໂຄງລ່າງ** | | | | | | | **152** |
| 1. ອອກແບບ, ສ້ອມແປງຫ້ອງຄະນະບໍດີ, ພາກວິຊາ, ຫ້ອງການ ບໍລິຫານ, ຫ້ອງຮຽນ, ຫ້ອງສະໝຸດ ແລະ ຫ້ອງປະຕິບັດການ ເພື່ອຮັບໃຊ້ການຮຽນ-ການສອນໃຫ້ໄດ້ຮັບປະສິດທິຜົນ ແລະ ປະສິດທິພາບ. | 1. ຂຶ້ນແຜນງົບປະມານລັດຖະບານ ເພື່ອອອກ ແບບປຸກສ້າງ-ສ້ອມແປງພື້ນຖານໂຄງລ່າງຕຶກອາຄານ ຄະນະສາທາລະນະສຸກສາດ, ມະຫາວິທະຍາໄລ ວິທະຍາສາດສຸຂະພາບ ຢູ່ວິທະຍາເຂດ ດົງໂດສີ ໃຫ້ສຳເລັດຕາມຄາດໝາຍ. | | 50 | | 50 | | 00 |
| | 2.ຂຶ້ນແຜນງົບປະມານ ໃນການສ້ອມແປງອາຄານສະຖານທີ່, ຫ້ອງຄະນະບໍດີ, ພາກວິຊາ ແລະ ຫ້ອງການບໍລິຫານ ແລະ ຫ້ອງຮຽນ. | 15 | | 17 | | 20 | 2 |

| | | | | | | | |
|---|---|---|---|---|---|---|---|
| **2. ໂຄງການສ້າງຫ້ອງປະຕິບັດການ ດ້ານໂພຊະນາການ** | | | | | | | **122** |
| 1. ຈັດຫາຫ້ອງປະຕິບັດການ ແລະ ປະກອບອຸປະກອນ ໃນການສິດສອນທາງດ້ານໂພຊະນາການບຳບັດ ແລະ ການວັດແທກຮ່າງກາຍ. | 1.ສະໜອງອຸປະກອນເຄື່ອງທົດລອງປະກອບເປັນ ຕົວຢ່າງໃນການຮຽນ-ການສອນ ດ້ານໂພຊະນາການ ບຳບັດ ແລະ ການວັດແທກຮ່າງກາຍ, ແລັບທອບ ແລະ ໂປຣແກຼມ Immucal, ແບບຈຳລອງອາຫານ (Food Model) ແລະ ອຸປະກອນຕ່າງໆໃນການຮຽນ ການສອນ. | | 35 | | 35 | | 70 |
| | 2. ຂຽນປຶ້ມຄູ່ມືໃນການນຳໃຊ້ຫ້ອງປະຕິບັດການດ້ານ ໂພຊະນາການ ແລະ ການວັດແທກ ຮ່າງກາຍ. | | 15 | | 17 | | 32 |
| | 4.ບຳລຸງຮັກສາ ຫ້ອງປະຕິບັດການດ້ານໂພຊະນາການ ບຳບັດ ແລະ ການ ວັດແທກຮ່າງກາຍ. | | 10 | | 10 | | 20 |
| **3. ໂຄງການສ້າງຫ້ອງປະຕິບັດການ ດ້ານສິ່ງແວດລ້ອມ ແລະ ອາຊີວະອະນາໄມ** | | | | | | | **267** |
| 1. ຈັດຫາຫ້ອງປະຕິບັດການ ແລະ ປະກອບອຸປະກອນ ໃນການສິດສອນທາງດ້ານສິ່ງແວດລ້ອມ ແລະ ອາຊີວະ ອະນາໄມ | 1.ຈັດຊື້ອຸປະກອນກວດສອບຄຸນນະພາບນ້ຳ, ອາຫານ, ອາກາດ, ເຄື່ອງວັດແທກສຽງ, ແສງ ແລະ ຝຸ່ນ ປະກອບ ເຂົ້າໃນການຮຽນ-ການສອນ. | | 90 | | 80 | | 170 |
| | 2.ຂຽນປຶ້ມຄູ່ມືໃນການນຳຫ້ອງປະຕິບັດການອະນາໄມ ສິ່ງແວດລ້ອມ ແລະ ອາຊີວະອະນາໄມ ແລະ ອາຈານ ຮັບຜິດຊອບວຽກງານຫ້ອງປະຕິບັດການ. | | 15 | | 17 | | 32 |
| | 3. ບຳລຸງຮັກສາຫ້ອງປະຕິບັດການດ້ານອະນາໄມ ສິ່ງແວດລ້ອມ ແລະ ອາຊີວະອະນາໄມ | | 13 | 15 | 17 | 20 | 65 |

| | | | | | | |
|---|---|---|---|---|---|---|
| ລວມ | 15 | 228 | 32 | 226 | 40 | 541 |

# ພາກຜະໜວກ 8

## 7. ແຜນງານການຄົ້ນຄວ້າວິທະຍາສາດ ແລະ ການໃຫ້ບໍລິການວິຊາການ

**ທິດທາງໜ້າທີ່:**

1. ຄສສ ມີນະໂຍບາຍສົ່ງເສີມໃຫ້ພະນັກງານຄູ-ອາຈານ ແລະ ນັກສຶກສາ ເຮັດການຄົ້ນຄວ້າວິທະຍາສາດ, ເຂົ້າເຖິງ ແລະ ນໍາໃຊ້ຂໍ້ມູນຂ່າວສານວິທະຍາສາດ
2. ຄສສ ມີນະໂຍບາຍໃນການຊຸກຍູ້ ແລະ ສົ່ງເສີມ ໃຫ້ຄູອາຈານ ແລະ ນັກສຶກສາ ໃຫ້ການບໍລິການທາງດ້ານວິຊາການແກ່ສັງຄົມ.

**ຄາດໝາຍ**

1. ສ້າງນັກຄົ້ນຄວ້າໃຫ້ມີຄວາມສາມາດ ໄດ້ 1/3 ຂອງອາຈານສາມາດເຮັດການຄົ້ນຄວ້າວິທະຍາສາດໄດ້; ພ້ອມທັງສ້າງຄວາມຮ່ວມມື ແລະ ເຄືອຄ່າຍການຄົ້ນຄວ້າກັບອົງການຈັດຕັ້ງຕ່າງໆທັງພາກລັດ, ເອກະຊົນ ແລະ ອົງການຈັດຕັ້ງສາກົນ.
2. ຄູອາຈານ ແລະ ນັກສຶກສາພາຍໃນຄສສ ໃຫ້ການບໍລິການທາງດ້ານວິຊາການແກ່ສັງຄົມເປັນປົກກະຕິ

| 3.2.1 ໂຄງການຈຸດສຸມບູລິມະສິດ | ກິດຈະກໍາ | ງົບປະມານ | | | | | |
|---|---|---|---|---|---|---|---|
| | | ປີ1 | ປີ2 | ປີ3 | ປີ4 | ປີ5 | ລວມມູນຄ່າ |
| | | 2021 | 2022 | 2023 | 2024 | 2025 | LAK (ລ້ານ) |
| **1.ໂຄງການຄົ້ນຄວ້າວິທະຍາສາດດ້ານສາທາລະນະສຸກ** | | | | | | | **540** |
| 1. ສົ່ງເສີມການຄົ້ນຄ້ວາວິທະຍາສາດໃຫ້ແກ່ພະນັກງານ ແລະ ນັກສຶກສາ ໂດຍພັດທະນາໂຄງຮ່າງການຄົ້ນຄ້ວາ ໃຫ້ໄດ້ຢ່າງໜ້ອຍ 3 ໂຄງການຕໍ່ປີ. | 1. ຈັດສໍາມະນາເພື່ອລະດົມສະໝອງໃນການຈັດບຸລະມະສິດຫົວຂໍ້ການຄົ້ນຄ້ວາແຕ່ລະສາຂາວິຊາ ໂດຍເຊີນຜູ້ຊົງຄຸນນະວຸດທິທາງດ້ານການຄົ້ນຄ້ວາແຕ່ລະສາຂາວິຊາ. | | 10 | 10 | 10 | 10 | 40 |
| | 2. ສໍາມະນາການຈັດກຸ່ມການຄົ້ນຄວ້າຂອງແຕ່ລະຂົງເຂດເຊັ່ນ: ແມ່ ແລະ ເດັກ/ສຸຂະພາບຈະເລີນພັນ, ໂພຊະນາການ, ສຸຂະພາບ ສິ່ງແວດລ້ອມ, ການປ່ຽນແປງດິນຟ້າອາກາດ, ພະຍາດບໍ່ຕິດຕໍ່ ແລະ ພະຍາດຕິດຕໍ່ 2 ຄັ້ງ/ປີ | | 75 | 75 | 75 | 75 | 300 |

| | | | | | | | |
|---|---|---|---|---|---|---|---|
| | 3. ພັດທະນາໂຄງການຄົ້ນຄ້ວາວິທະຍາສາດ ໃນແຕ່ລະພາກວິຊາ ໃຫ້ໄດ້ 1 ໂຄງການຕໍ່ປີ ໂດຍຊອກຫາແຫຼ່ງທຶນລັດ ແລະ ເອກະຊົນ | | 50 | 50 | 50 | 50 | 200 |
| **2. ໂຄງການເຜີຍແຜ່ ແລະ ຕີພິມ** | | | | | | | **280** |
| 1. ສ້າງວາລະສານສາທາລະນະສຸກ ແລະ ບົດຄວາມສາທາລະນະສຸກ | 1. ອົບຮົມເງື່ອນໄຂການທົບທວນວາລະສານໃຫ້ຄະນະກໍາມະການຜູ້ທົບທວນວາລະສານ | | 10 | 10 | 10 | 10 | 40 |
| | 2. ຈັດພິມວາລະສານສາທາລະນະສຸກ ຂອງ ຄສສ ແລະ ເຜີຍແຜ່ໃຫ້ແກ່ສັງຄົມ | | 10 | 10 | 10 | 10 | 40 |
| | 3. ຈັດພິມປື້ມສັງລວມບົດຄວາມຂອງນັກສຶກສາປະລິນຍາ ໂທສາຂາໂພຊະນາການ, ລະບາດວິທະຍາ, ບໍລິຫານສາທາ ລະນະສຸກ, ແລະ ສຸຂະພາບຄອບຄົວ 1 ເຫຼັ້ມ/ປີ | | 10 | 10 | 10 | 10 | 40 |
| 2. ຕີພິມ ແລະ ເຜີຍແຜ່ບົດຄົ້ນຄວ້າ ຢູ່ພາຍໃນປະເທດ ແລະ ສາກົນ ຂອງອາຈານ ແລະ ນັກສຶກສາ ແຕ່ລະພາກວິຊາ | 1.ຄູອາຈານຕີພິມເຜີຍແຜ່ບົດຄົ້ນຄ້ວາວິທະຍາສາດສາທາລະນະສຸກເຂົ້າໃນວາລະສານທັງພາຍ ແລະ ຕ່າງປະເທດ 1 ບົດຄວາມ/ປີ | | 15 | 15 | 15 | 15 | 60 |
| | 2. ຈັດກອງປະຊຸມວິຊາການເພື່ອເຜີຍແຜ່ບົດຄົ້ນຄ້ວາໃຫ້ອາ ຈານ ແລະ ນັກສຶກສາ 1 ຄັ້ງ/ປີ | | 5 | 5 | 5 | 5 | 20 |
| | 3. ອາຈານ ແລະ ນັກສຶກສາເຂົ້າຮ່ວມກອງປະຊຸມວິທະຍາ ສາດ  ເຊັ່ນ ສາທາລະນະສຸກສາດ, ໂພຊະນາການ, ລະບາດ ວິທະຍາ, ສຸຂະພາບຄອບຄົວ ແລະ ສິ່ງແວດລ້ອມເພື່ອສຸຂະ ພາບ 1-2 ຄັ້ງ/ປີ | | 20 | 20 | 20 | 20 | 80 |
| **3.ໂຄງການບໍລິການວິຊາການແກ່ສັງຄົມ** | | | | | | | **225** |

| | | | | | | | |
|---|---|---|---|---|---|---|---|
| 1. ເຜີຍແຜ່ຄວາມຮູ້ກ່ຽວກັບສຸຂະອານາໄມ, ພຶດຕິກຳຮັກສາສຸຂະພາບ, ໂພຊະນາການ ໃຫ້ແກ່ສັງຄົມ ເພື່ອໃຫ້ມີການປ່ຽນແປງພຶດຕິກຳຮັກສາສຸຂະພາບ ແລະ ສົ່ງເສີມສຸຂະພາບຂອງພໍ່ແມ່ປະຊາຊົນໃຫ້ດີຂຶ້ນ. | 1. ໃຫ້ຄູອາຈານ ແລະ ນັກສຶກສາ ໃຫ້ບໍລິການແກ່ສັງຄົມ ແລະ ຄົນໃນຊຸມຊົນ ເຊັ່ນ ການກວດກັ່ນຕອງພະຍາດບໍ່ຕິດ ຕໍ່, ໂພຊະນາການແມ່ ແລະ ເດັກ, ແລະ ກິດຈະກຳອື່ນລົງ ສູ່ຊຸມຊົນໂດຍ ມີສ່ວນຮ່ວມຈາກຊຸມຊົນ ຢ່າງໜ້ອຍ 1 ຄັ້ງ/ຫຼັກສູດຕໍ່ປີ. | 20 | 20 | 20 | 20 | 20 | 100 |
| | 2. ອອກແບບໃຫ້ສຸຂະສຶກສາໃຫ້ຊຸມ ແລະ ຈັດພິມວາລະ ສານ, ແຜນພັບ ແລະ ສື່ໂຄສະນາກ່ຽວກັບການປ້ອງກັນ ແລະ ຮັກສາສຸຂະພາບ ໃນແຕ່ລະພາກວິຊາຢ່າງໜ້ອຍ 1 ຄັ້ງ/ຫຼັກສູດຕໍ່ປີ | 10 | 10 | 10 | 10 | 10 | 50 |
| | 3. ເຜີຍແຜ່ຂໍ້ມູນກ່ຽວກັບການລະບາດຂອງພະຍາດ ແລະ ວິທີການກັນພະຍາດ ແລະ ການຮັກສາສຸຂະພາບໃຫ້ກັບຄົນ ໃນຊຸມຊົນ ໃຫ້ໄດ້ 1 ຄັ້ງ/ປີ | 15 | 15 | 15 | 15 | 15 | 75 |
| **ລວມ** | | **45** | **250** | **250** | **250** | **250** | **1,045** |

# ພາກຜະໜວກ 9

## 8. ແຜນງານ ປະກັນຄຸນນະພາບ

**ທິດທາງໜ້າທີ່:**

ລະບົບປະກັນຄຸນນະພາບຂອງ ຄສສ ເປັນການຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນຕາມມາດຕະຖານການປະກັນຄຸນນະພາບຂອງສະຖານການສຶກສາສາຂາວິຊາສາທາລະນະສຸກ ທີ່ໄດ້ກຳນົດອອກມາ ເພື່ອເຮັດໃຫ້ສະຖາການສຶກສາມີຄຸນນະພາບການຮຽນ-ການສອນ ໃກ້ຄຽງກັບພາກພື້ນ ແລະ ສາກົນ.

**ຄາດໝາຍ**

1. ຄສສ ມີລະບົບປະກັນຄຸນນະພາບພາຍໃນ ເພື່ອພັດທະນາຄຸນນະພາບການສຶກສາ ຕາມນະໂຍບາຍແຜນຍຸດທະສາດ ໃນການພັດທະນາສະຖານການສຶກສາວິຊາຊີບດ້ານສາທາລະນະສຸກ;

2. ກຽມຄວາມພ້ອມເພື່ອຮັບການປະເມີນຄຸນນະພາບພາຍນອກ ຊຶ່ງປະຕິບັດຕາມເງື່ອນໄຂ ແລະມາດຕະຖານປະກັນຄຸນນະພາບຂອງ ສະຖານການສຶກສາສາທາລະນະສຸກ ເພື່ອໃຫ້ເປັນການຕອບສະໜອງ ໃຫ້ແກ່ການປັບປຸງຄຸນນະພາບ ແລະ ສ້າງຄວາມໝັ້ນໃຈ ສຳຫຼັບການຮັບຮອງຄຸນນະພາບ.

| 3.2.1 ໂຄງການຈຸດສຸມບູລິມະສິດ | ກິດຈະກຳ | ງົບປະມານ | | | | | |
|---|---|---|---|---|---|---|---|
| | | ປີ1 | ປີ2 | ປີ3 | ປີ4 | ປີ5 | ລວມມູນຄ່າ LAK(ລ້ານ) |
| | | 2021 | 2022 | 2023 | 2024 | 2025 | |
| **1. ໂຄງການສ້າງລະບົບປະກັນຄຸນນະພາບພາຍໃນ** | | | | | | | **270** |
| 1. ສົ່ງເສີມ, ປັບປຸງ ແລະພັດທະນາໜ່ວຍປະກັນຄຸນນະພາບພາຍໃນຂອງຄະນະໃຫ້ເຂັ້ມແຂງ | 1. ອົບຮົມເພື່ອຜັນຂະຫຍາຍມາດຕະຖານຄຸນນະພາບ ແລະ ວາງແຜນຈັດຕັ້ງປະຕິບັດວຽກງານປະກັນຄຸນນະພາບພາຍໃນ | | 15 | | 15 | | 30 |
| | 2.ຈັດຕັ້ງເຜີຍແຜ່ແຜນການ ຂອງວຽກງານປະກັນຄຸນນະພາບ ໃຫ້ແກ່ພະນັກງານ ຄູ-ອາຈານ ນັກສຶກສາ ໃຫ້ມີຄວາມຮູ້ ແລະຄວາມເຂົ້າໃຈ. | | 20 | 10 | 10 | 10 | 50 |

| | | | | | | | |
|---|---|---|---|---|---|---|---|
| | 3.ຈັດຕັ້ງສັງລວມເຂົ້າຖານຂໍ້ມູນຂອງແຕ່ລະມາດຕະຖານຫຼື ໂຕຊີ້ບອກ ເພື່ອເກັບກຳຮັກສາ | | 10 | | | | 10 |
| | 4.ຈັດຕັ້ງການເຝິກອົບຮົມວິທີການ ແລະ ແຜນການໃນການ ປະເມີນຕົນເອງໃຫ້ແກ່ ຄະນະກຳມະການປະເມີນຕົນເອງ (Self Assesment Committee -SAC) | | 10 | | | 10 | 20 |
| | 5. ຈັດຕັ້ງການປະເມີນຕົນເອງ ແລະສັງລວມບົດລາຍງານ ເພື່ອນຳໃຊ້ຜົນການປະເມີນ ພ້ອມຜັນຂະຫຍາຍເຂົ້າໃສ່ ແຜນການພັດທະນາຄະນະ | | 10 | 10 | 10 | 10 | 40 |
| | 6. ຈັດຕັ້ງທົບທວນ, ຕິດຕາມ ແລະປັບປຸງວຽກປະກັນຄຸນ ນະພາບພາຍໃນຄະນະຢ່າງຕໍ່ເນື່ອງ | | 10 | 10 | 10 | 10 | 40 |
| | 7. ເຜີຍແຜ່ຂໍ້ມູນ ຂ່າວສານ ແລະຜົນຮັບຂອງວຽກງານ ປະກັນຄຸນນະພາບ ໃຫ້ຄະນະຮັບຮູ້ | | 20 | 20 | 20 | 20 | 80 |
| **2.ໂຄງການສ້າງລະບົບປະກັນຄຸນນະພາບພາຍນອກ** | | | | | | | **35** |
| 1. ການພັດທະນາສະຖານການສຶກສາວິຊາຊີບດ້ານ ສາທາລະນະສຸກ ເພື່ອຮັບຮອງຄຸນນະພາບພາຍໃນຂອງ ສະຖານການສຶກສາຕາມມາດຕະຖານປະກັນຄຸນນະພາບ ການສຶກສາ | 1. ສ້າງແຜນ ເພື່ອຈັດຕັ້ງການປະເມີນພາຍນອກ ຕາມແຜນ ປະກັນຄຸນນະພາບຫຼືຕາມການສະເໜີຂອງຄະນະ | | | 10 | | | 10 |
| | 2. ສຳມະນາ ການປະເມີນຄຸນນະພາບພາຍໃນ ຈາກໜ່ວຍ ງານປະເມີນພາຍນອກ | | | | 10 | | 10 |
| | 3. ສຳມະນາ ສະຫຼູບລາຍງານຜົນການຈັດຕັ້ງປະຕິບັດການ ປະເມີນປະກັນຄຸນນະພາບພາຍນອກ, ຖອດຖອນບົດຮຽນ ເພື່ອປັບປຸງແລະຮັບຮອງຄຸນນະພາບ | | | 15 | | | 15 |
| **ລວມ** | | | **95** | **75** | **75** | **60** | **305** |